
ສາເອີ້ນ
ມອງໃສ
ດຳຜ່າຍ ພິລາວົງ

ອຸທິນ ບຸນຍາວົງ

# ສຽງເອີ້ນ ຂອງໃຜ

ຄຳຜາຍ ພິລາວົງ

ສານັກພມຈາໜ່າຍ ສປປ.ລາວ
1978

# ສາລະບານ


| | | ໜ້າ |
|---|---|---|
| 1.— | ສຽງເອີ້ນຂອງໃຜ | 1 |
| 2.— | ທ່ານໝໍພອນສຸກ | 19 |
| 3.— | ນ້ຳຕາຊາວອົບພະຍົບ | 43 |
| 4.— | ປ້າແຈ່ມ | 70 |
| 5.— | ແຫວນເພັດຂອງແນນຊີ | 80 |
| 6.— | ຄົນງານ | 92 |
| 7.— | ເລື່ອງຂອງສົມເຕື່ອຽ | 103 |
| 8.— | ສຽງຈາກທົ່ງໄຫຫີນ | 116 |

# ສຽງເອີ້ນຂອງໃຜ

ໂດຽ: ຄຳຜາຽ ພິລາວົງສ໌

ກອງຮ້ຽ ຂອງພວກຂ້ຽ ໄດ້ເຄື່ອນອອກຈາກ ໝູ່ບ້ານແຫ່ງໜຶ່ງຊຶ່ງເຂົາເອີ້ນກັນວ່າ " ພູສູງ " ຂ້ຽໄດ້ຖືກສັບຊ້ອນຈາກກອງບັນຊາການເຂດ ໃຫ້ມາເປັນຜູ້ບັງຄັບບັນຊາກອງຮ້ຽດັ່ງກ່າວ. ຂ້ຽຍ່າງກ່ອນໜ້າແຖວອ້າຽນ້ອງໃນຊຸດນັກຮົບທຳມະດາ, ຂ້ຽທັງຍ່າງທັງຄິດ :

– ການມຸ່ງໜ້າ ເຂົ້າໃສ່ສະໜາມຮົບ ໃນຄັ້ງນີ້ບໍ່ຮູ້ວ່າຈະໄດ້ປະເຊີນໜ້າກັບສັດຕູດ້ວຽສະພາບຄື ແນວໃດ ແລະທັງບໍ່ທັນກຳໄດ້ແນວຄິດຈິດໃຈຂອງອ້າຽນ້ອງຊ້າ, ຄວາມລຶ້ງເຄີຽຮັກແພງຖານຜູ້ບັນຊາ ກັບອ້າຽນ້ອງນັກຮົບ ທົ່ວໄປຍັງບໍ່ທັນມີ, ຂ້ຽຄິດນັ່ງໃຈໃນຍາມບັນຊາສູ້ຮົບ ຢ້ານອ້າຽນ້ອງຈະບໍ່ປະຕິບັດຕາມ.

ການເຄື່ອນທັບໄດ້ ຜ່ານໄປຕາມປ່າຄັງທີ່ແປນປານທົ່ງນາ  ຫາຕົ້ນໄມ້ພໍທີ່ຈະເປັນບ່ອນຊົ້ນຣົ່ມນັ້ນ ຕົ້ນດຽວ ກໍບໍ່ມີ ແດດຕອນ ສິບສອງໂມງຊ້າພັດຮ້ອນໃໝ້ປານໄຟເຜົາ,  ຂ້ຽພວມຄິດຢູ່ວ່າ ຈະໃຫ້ອ້າຽນ້ອງໄປຊົ້ນຣົ່ມຢູ່ໃສ, ແຕ່ໃນຂະນະທີ່ຂ້ຽພວມຄິດຢູ່ນັ້ນເທິງທ້ອງຟ້າ ທິດຕາເວັນອອກ  ໄດ້ປະກົດຍິນສຽງດັງຂອງຍົນ  ສຽງນັ້ນດັງໃກ້ເຂົ້າມາຈົນ ທຸກຄົນຈຳແນກໄດ້ວ່າແມ່ນສຽງຍົນເຕ ໒໘ ຂ້ຽອອກຄຳສັ່ງ:

– ອ້າຽນ້ອງທັງໝົດໃຫ້ຢຸດກັບທີ່  ຢ່າໄດ້ເຄື່ອນໄປມາ ຖ້າມັນບັງອາດຍິງທີ່ນີ້ພວກເຮົາຈຶ່ງຕັດສິນໃຈສູ້ຣົບ !

ບັນດາອ້າຽນ້ອງ ໄດ້ລົ້ມຕົວນອນລົງກັບທີ່ ຕາມຄຳສັ່ງ. ແຕ່ແລ້ວໃຜກໍມີຄວາມເສັຽດາຽ ເພາະໂອກາດສູ້ຣົບ ໄດ້ຜ່ານກາຽໄປຜູ້ໃດກໍໄດ້ແຕ່ແນມເບິ່ງພວກໂຈນອາກາດດ້ວຽຄວາມເສັຽຫວັງ. ເບິ່ງຍົນຄັນໃດກໍບິນສູງຕິດເມກ.  ສ່ວນຂ້ຽ ເວລານີ້ຮູ້ສຶກພາກພູມໃຈທີ່ເຫັນບັນດາອ້າຽນ້ອງປະພຶດຕົນ ຢູ່ໃນລະບຽບ ແລະ ປະຕິບັດຄຳສັ່ງຢ່າງເຂັ້ມງວດ  ພ້ອມນີ້ຂ້ຽກໍມີຄວາມເຊື່ອໝັ້ນໃນການຕັດສິນສະໜາມຮົບທີ່ຈະໄດ້ປະເຊີນໃນເວລາອັນບໍ່ຊ້ານີ້.  ເຫັນທີ່ຈະປອດໄພແລ້ວຂ້ຽກໍສັ່ງໃຫ້ອ້າຽນ້ອງເດີນທາງຕໍ່ໄປ.

– ອ້າງກອງສີວອນ! ອ້າງກອງສີວອນ!

ສຽງຮ້ອງຂອງໃຜຜູ້ໜຶ່ງຊຶ່ງເປັນສຳນຽງ ສຽງເອີ້ນຂອງເດັກຊາຍໄດ້ດັງແຫວກມາຕາມສາຍລົມທີ່ພັດວີ້ງ ຜ່ານປ່າດົງ,ຂ້ອຍບໍ່ແນ່ວ່າສຽງເອີ້ນນັ້ນສົນໃຈກັບຂ້ອຍທັງໆ ທີ່ຂ້ອຍປະຈຸບັນບໍ່ໄດ້ມີນາມວ່າສີວອນອີກ, ແຕ່ເຫດໃດສຽງເອີ້ນ "ອ້າງກອງສີວອນ" ນັ້ນຍັງດັງວັງແວວມາຈາກສົ້ນແຖວ, ຍ້ອນສຽງເອີ້ນນັ້ນຕຳຖືກຊື່ເກົ່າຂອງຂ້ອຍ.ສະນັ້ນເຮັດໃຫ້ຂ້ອຍຕ້ອງຄິດ

– ແມ່ນສຽງເອີ້ນຂອງໃຜຫລືເຈົ້າຂອງສຽງເອີ້ນນີ້ເຂົາບໍ່ທັນຮູ້ວ່າ ທອງໄຊແມ່ນຊື່ໃໝ່ຂອງຂ້ອຍຖ້າເປັນຄື ຈັ່ງຊັ້ນເດັກນ້ອຍຄົນນີ້ຈະໄປຮູ້ຊື່ "ສີວອນ" ຂອງຂ້ອຍນີ້ໄດ ແລະ ຮູ້ຢູ່ໃສ? ຍ້ອນຄວາມສົງໄສ ເກືອບຈະກາຍເປັນຄວາມຈິງ ສະນັ້ນຂ້ອຍຈຶ່ງຫລຽວໜ້າມາຫາບ່ອນ ທີ່ມີສຽງເອີ້ນຍາມນີ້ໃນສາຍຕາຂອງຂ້ອຍເຫັນເດັກຊາຍຄົນໜຶ່ງຊຶ່ງເຂົາຢູ່ໃນຊຸດເຄື່ອງໝາຍເປັນຮົ້ວຂອງຊາດກຳລັງແລ່ນຊ່ວງໜ້າໝູ່ຂຶ້ນມາຫາຂ້ອຍ, ຂ້ອຍບໍ່ຮູ້ວ່າ ເດັກຊາຍຄົນນີ້ແມ່ນໃຜ, ຂ້ອຍຟ້າວຍ່າງສີໄວໆ ໄປຕ້ອນເອົາເຂົາ.

ເຂົາໂດດກອດຂ້ອຍ ດ້ວຍອາຈິນຂອງຄວາມ ເປັນເດັກນ້ອຍແລ້ວເຂົາກໍລະບາຍຄວາມຮູ້ສຶກອອກມາ:

– ອ້າງສືວອນ ! ອ້າງຈຳນ້ອງໄດ້ຫລືປ່າງໃດ ? ເຂົາໃຊ້ຄຳວ່າ " ອ້າງ " ແທນຜູ້ກອງຂ້ຽຕຶກຕະລຶງ ປູ່ຊົວອຶດໃຈໜຶ່ງແລ້ວຕອບນັກຮົບຄົນໜຸ່ມຜູ້ທີ່ພວນປູ່ໃນອ້ອມແຂນຂອງຂ້ຽນັ້ນວ່າ :

– ບໍ ! ອ້າງບໍ່ລືມ, ອ້າງຈຳໄດ້ດີແຕ່ແລ້ວຄຳເວົ້າ ແລະທ່າທີຂອງ ຂ້ຽ ມັນບໍ່ໄດ້ເຂົ້າກັນ ຈັກດີ້ເພາະຈົນຮອດບາທີນີ້ຂ້ຽກໍບໍ່ທັນຮູ້ຈັກເຂົາວ່າແມ່ນໃຜ. ຂ້ຽຖອດສາງຕາອອກຈາກໃບໜ້າຂອງນ້ອງ ແລ້ວແນມໄປຕາມແຖວເຄື່ອນທັບຂອງອ້າງນ້ອງ, ສ່ວນໃນໃຈພັດຫວນຄືນເບິງວ່ານ້ອງຜູ້ນີ້ແມ່ນໃຜແທ້, ຂ້ຽກໍ່ນຶກເຫັນໃບໜ້າຂອງເດັກຊາງຄົນໜຶ່ງຊຶ່ງພວກຂ້ຽໄດ້ຈາກກັນໃນສອງປີກ່ອນແລ້ວຂ້ຽຖາມນ້ອງວ່າ :

– ນ້ອງແມ່ນສຸບັນແມ່ນບໍ ?

– ບໍ່ ! ນ້ອງບໍ່ແມ່ນ ສຸບັນ ! ອຸ້ຽ ! ອ້າງລືມນ້ອງອີຫລີອ້າງບໍ່ຈຳນ້ອງໄດ້ຈັກດີ້ແມ່ນບໍ ? ນ້ອງຜູ້ນັ້ນຕອບຄຳຕວງຂອງຂ້ຽດ້ວຍຄວາມຜິດຫວັງ, ນ້ອງກົ້ມລົງຊົດບາໂລໃຫ້ຊູດຂຶ້ນຫລັງເລັກນ້ຽແລ້ວນ້ອງກໍ່ດຶງແຂນຂ້ຽພ້ອມທັງເວົ້າ :

– ໄປ ! ຄ່ຽໆຍ່າງ ຄ່ຽລົມກັນໄປ ! ຈາກນັ້ນຂ້ຽ ແລະນ້ອງກໍພາກັນຄ່ຽຍ່າງໄປ ອາດແມ່ນນ້ອງ ປາກຫລີ້ນລະ

ຄອບກັບຂ້ອຍດັ່ງນັ້ນນ້ອງຈຶ່ງບໍ່ເວົ້າຄວາມຈິງມາກ່ອນ ນ້ອງລືມກັບຂ້ອຍຕັ້ງແຕ່ເລື່ອງນ້ອງຮຽນສູ້ຮົບ ເບື້ອງຕົ້ນມີຄວາມຫຍຸ້ງຍາກແນວໃດ ແລະ ນ້ອງບັງໃຫ້ຂ້ອຍຮູ້ວ່າເທື່ອທຳອິດທີ່ນ້ອງໄດ້ເຂົ້າສະໜາມຮົບຕົວຈິງ. ຍ່າງມາຮອດນີ້ນ້ອງປຸດໄຂປີດົງນ້ຳແລ້ວເຊີນຂ້ອຍ:

– ເຊີນອ້າຍກິນນ້ຳ!

– ຂອບໃຈນ້ອງ, ນ້ຳໃນປີດົງຂອງອ້າຍຍັງມີ! ນ້ອງດື່ມນ້ຳລົງສອງສາມກຶບແລ້ວຫັນໜ້າມາຖາມຂ້ອຍຄືນ :

– ອ້າຍບໍ່ທັນຮູ້ວ່ານ້ອງແມ່ນໃຜແມ່ນບໍ່? ດັ່ງນີ້ຂ້ອຍຮັບສາລະພາບກັບນ້ອງໂດຍບໍ່ຕ້ອງປິດບັງ.

– ແມ່ນແລ້ວນ້ອງ. ອ້າຍຈຳນ້ອງບໍ່ໄດ້ຈັກດີ ນ້ອງແມ່ນໃຜ?ນ້ອງຫລຽວໜ້າມາເບິ່ງຂ້ອຍພ້ອມຮຽບຍິ້ມຫວານໆແລ້ວນ້ອງເວົ້າ :

– ນ້ອງຄິດວ່າອ້າຍຍັງຈຳນ້ອງໄດ້, ແຕ່ເຖິງແມ່ນລືມອ້າຍອາດຈະລືມພຽງຮ່າງກາຍ ແລະ ໃບໜ້າຂອງນ້ອງເທົ່ານັ້ນ ດອກ, ສ່ວນເລື່ອງຄວາມເປັນຈິງໃນຊີວິດຂອງນ້ອງນັ້ນອ້າຍຄືຊິຈຳໄດ້ດີ. ຟັງຄຳເວົ້າເບື້ອງຕົ້ນຂອງນ້ອງເຮັດໃຫ້ຂ້ອຍຕື່ນຕັນຫົວໃຈແຕ່ບໍ່ທັນຮູ້ວ່ານ້ອງແມ່ນໃຜ.

ຂ້ຽພາດສາງຕາແບນເບິ່ງທິວແຖວ, ອ້າງນ້ອງພວມມຸ່ງໜ້າເຂົ້າປ່າດົງທີ່ຣິມເຝັ່ງ. ຂ້ຽອອກຄຳສັ່ງ :

– ອ້າງນ້ອງພາກັນພັກຜ່ອນຊື້ນຣິມສາກ່ອນ !

ອ້າງນ້ອງໄດ້ປົງບາໄລລົງພັກຜ່ອນ, ອ້າງນ້ອງບາງຄົນນັ່ງອີງບາໄລ, ບາງຄົນລະດຸມເສື້ອອອກຍ່າງໄປມາເພື່ອປັດເປົ່າຄວາມຮ້ອນ. ສ່ວນຂ້ຽ ແລະ ນັກຣົບໜຸ່ມຄົນນັ້ນໄດ້ພາກັນຍ່າງກາງອ້າງນ້ອງໄປພັກ ຢູ່ກ້ອງກົ້ນໄມ້ໃຫ່ຍທີ່ຣິມະຝັງ ແລະ ບໍ່ໄກອ້າງນ້ອງພໍສົບແນັດທັນໃດສະຫາງບົວໄທກໍທັກທ້ວງຂຶ້ນວ່າ :

ອ້າງກອງກັບພູທອງຄືພໍ່ກັບລູກບໍ່ມີຜິດ. ຂ້ຽສະເດືອກຮູ້ໃນຄຳເວົ້າທີ່ວ່າ "ພູທອງ" ແຕ່ກໍບໍ່ທັນແນ່ນອນ, ຂ້ຽສົ່ງຮຽຍິ້ມທີ່ເຕັມໄປດ້ວຍຄວາມພາກພູມໃຈ ໄປຕອບສຽງທັກທ້ວງຂອງລະຫາງບົວໄທ.

ປົງບາໄລລົງແລ້ວນັກຣົບໜຸ່ມຄົນນີ້ກໍຍ່າງມານັ່ງຄຽງຂ້າງຂ້ຽແລ້ວເວົ້າວ່າ:

– ເບື້ອງຕົ້ນນ້ອງກໍຈຳອ້າງບໍ່ໄດ້ເພາະຈາກກັນໄດ້ນານປີ, ມື້ນີ້ນ້ອງຮູ້ຄັກແລ້ວວ່າອ້າງ ແມ່ນອ້າງສິວອນຄົນຜູ້ຊ່ວຍເອົາຊີວິດຂອງນ້ອງ ເມື່ອງວັນໜຶ່ງກ່ອນໜ້ານີ້ ໑ ປີຊວນ

ໃຫ້ນ້ອງຈຳອ້າຽໄດ້, ວັນນັ້ນຖ້າບໍ່ມີອ້າຽສືວອນ ນ້ອງຄົງ
ຈະ...ນ້ອງເວົ້າປະໂຫຽກນີ້ດ້ວຽຄວາມບວບຊ້ຳ ແລະ ແຄ້ນ
ເຄືອງຂະນະນີ້ຫົວໃຈຂອງຂ້ຽຕົກວຸບຈາກກາງອົກ. ຂ້ຽຮູ້
ນ້ອງແລ້ວ ຂ້ຽຈັບແຂນນ້ອງໄວ້ແໜ້ນແລ້ວກໍຫັກຫ້ວງຊື່
ນ້ອງ:

– ນ້ອງແມ່ນ "ພູທອງ" ແມ່ນບໍ? ນ້ອງຍົກແຂນຂຶ້ນ
ເຊັດນ້ຳຕາແລ້ວຕອບຂ້ຽດ້ວຽສຽງອັນສັ່ນເຄືອ:

– ຈ້າວແມ່ນແລ້ວນ້ອງແມ່ນ ພູທອງ.

ພູທອງ!ພູທອງ! ຂ້ຽຮ້ອງຊື່ນດ້ວຽຄວາມຕື່ນເຕັ້ນ,ຂ້ຽບໍ່
ນຶກບໍ່ຝັນວ່າຈະໄດ້ມີໂອກາດພົບພູທອງ, ພູທອງນີ້ ນີ້ຕ່າງ
ພູທອງເມື່ອກ່ອນຫລາຽ; ນີ້ ນີ້ພູທອງແມ່ນຫນຶ່ງໃນ ຈຳ
ນວນນັກຮົບກອງຮ້ຽຂອງຂ້ຽ. ເຫັນໜ້ານ້ອງ ພາບແຫ່ງ
ຄວາມຫລັງກໍໄດ້ຟູຂຶ້ນຢູ່ໃນສ່ວນເລິກຂອງຫົວໃຈ, ຂ້ຽບໍ່
ໄດ້ຕັ້ງໃຈຈະໄຫ້ ແຕ່ປາດນ້ຳຕາກໍເລື່ອນລງຢູ່ໃນເບົ້າຕາທັງ
ຄູ່, ຂ້ຽສະອື້ນໄປຕາມຄວາມໂຫມະນັດໂສກາ ຂອງນ້ອງ,
ຂ້ຽອົດໃຈກັ້ນຄວາມສົງສານນ້ອງໄວ້ແລ້ວເວົ້ານຳນ້ອງ:

– ພູທອງອ້າຽດີໃຈນ້ອງຍັງມີຊີວິດຢູ່ ແລະ ໄດ້ມີໂອ
ກາດປົວແປງທົດແທນຄືນບັນດາຄວາມຊອກຊ້ຳລ້າວລານ

ໃນຊີວິດ. ຈິດໃຈນ້ອງ ກຳລັງວັງຊານ້ອງໜຸ່ມແໜ້ນ , ຊີວິດ ນ້ອງຈະບານງາມຢູ່ໃນໃຈກາງຂອງສັນຕິພາບ, ຂໍໃຫ້ນ້ອງ ຈົ່ງໃຊ້ຄວາມແຄ້ນນັ້ນເປັນຄູ່ແຂ່ງຂັນ ໃນໜ້າທີ່ວຽກງານ ຕົວຈິງ, ນ້ອງຈົ່ງສຸມຄວາມແຄ້ນທັງໝົດບວກເຂົ້າກັບ ກະສຸນປືນເພື່ອລ້າງແຄ້ນແທນພໍ່ແມ່ພີ່ນ້ອງທີ່ ຖືກເຄາະ ຮ້າຽຈາກການທາລຸນກຳຂອງພວກປຸ້ນບ້ານຊິງເມືອງ, ຂ້ຽ ຍິ່ງຄິດພາບຕົວຈິງໃນຄວາມຫລັງ ກໍຍິ່ງຝັງຢູ່ໃນ ມະ ໂນ ພາບຂອງຂ້ຽ. ເຫັນພວກຂ້ຽປະສົບກັບບັນຫາຄືຈັ່ງຊີ້ອ້າຽ ນ້ອງໃຜໆ ກໍຫຸ້ນມານັ່ງຄຽງຈະແບ່ງປັນເອົາຄວາມເຈັບຊ້ຳ ແລະ ລະທົມຂົມຂື່ນຈາກພວກຂ້ຽ, ອ້າຽນ້ອງຫລາຽຄົນ ໃຜກໍຢາກຮູ້ເລື່ອງລາຽລະອຽດຂອງນ້ອງເປັນຄືແນວໃດ. ຂ້ຽ ເອງກໍບໍ່ສາມາດທີ່ຈະອົດເລື່ອງນີ້ໄວ້ ແລະ ມັນກໍແມ່ນໂອ ກາດແລ້ວ ທີ່ຂ້ຽຈະຕ້ອງຍົກເອົາເລື່ອງຂອງນ້ອງມາ ເຜີຽ ແຜ່ຕໍ່ອ້າຽນ້ອງ, ເພື່ອອ້າຽນ້ອງຈະໄດ້ຄວັດເລີກຄວາມຄຽດ ແຄ້ນຂອງຕົນແລ້ວເຮັດຫລ້ອນໜ້າທີ່ການສູ້ຮົບ,ຂ້ຽຄິດຢູ່ ຄາວໜຶ່ງ ຂ້ຽຂໍໂທດນຳນ້ອງແລ້ວເລົ່າເລື່ອງການເປັນມາ ໃຫ້ອ້າຽນ້ອງຟັງ.

– ກ່ອນນີ້ ໒ ປີເຕັມ, ໃນຍາມນັ້ນເຮົາແມ່ນນັກສື່ສານ,

ເຮົາຖືກປະຈຳການຢູ່ ສຳນັກຂອງກອງບັນຊາການ ດ້ານ ຣົບເຮົາໄດ້ເປັນກະບອກສຽງປາກຕໍ່ປາກ ລະຫວ່າງ ດ້ານ ຣົບກັບແນວຣົບຕ່າງໆ.

ຂ່າວຕີຂັບໄລ່ສັດຕູປຸ້ນບ້ານ ຈີ້ງເມືອງ ໄດ້ຖືກສົ່ງມາ ດ້ານຣົບລຽນຕິດທັງເວັນ ແລະ ຄືນຂ້ຽມີຄວາມທະນົງໃຈຕໍ່ ໄຊຊະນະທຸກຄັ້ງຂອງພວກເພື່ອນເຫລົ່ານັ້ນ, ຣູບ ພາບ ເລົ່າຣົບປະຕິວັດສັງຫານຂ້າເສິກອາເມລິກາ ແລະ ລູກມື ນັ້ນກໍປະກົດຢູ່ໃນຫ່ວງນຶກຂອງຂ້ຽ. ບັງເອີນ, ໃນສອງສາມ ມື້ຜ່ານມາຈັກກະພັດ ອາເມລິກາ ແລະ ລູກມືໄດ້ປ່ວງບ້າ ໃສຕາງໃຊ້ກຳລັງທັບປ່າງຫລວງຫລາຽບຸກຕີພວກເຮົາຄືນ ຢ່າງຮ້າຽແຮງ, ສະພາບກີແນວນ້ອງກາງານຂອງຂ້ຽນັ້ງເພີ່ມ ຂື້ນ ແລະ ມັນກໍເປັນເລື່ອງທຳມະດາຢູ່ເອງທີ່ນ້ຳໃຈຮັບຜິດ ຊອບຕໍ່ວຽກງານນີ້ຂອງຂ້ຽກໍຈະຕ້ອງຢູ່ໃນ ລະ ດັບ ສູງ ເຊັ່ນ ດຽວ, ຂ້ຽຈະຕ້ອງເຮັດວຽກຮັບຂ່າວ ແລະ ສົ່ງຂ່າວທັງເວັນ ແລະ ຄືນ, ອີກເວລາຕໍ່ມາເຄື່ອງວິຊາສະເພາະຂອງຂ້ຽຖືກ ຕິດຂັດ, ໂທລະເລກຮັບສົ່ງບໍ່ໄດ້ວຽກງານຊ້ຳພັດຈຳໃຫ້ພົວ ພັນກັບ ສະໜາມຣົບທິດເນ ຢ່າງໃກ້ຊິດພວກສັດຕູໄດ້ມີ ແຜນການ ແລະ ພວມຈະບຸກເອົາຈຸດໜຶ່ງຂອງສະໜາມ

ຣົບທິດເບ, ກອງບັນຊາການດ້ານຣົບປາກຈະບອກໃຫ້ສະໜາມຣົບທິດເບຮູ້ແຜນການຂອງສັດຕູນີ້ໄວທີສຸດ, ເມື່ອເປັນແນວນັ້ນມັນກໍແມ່ນໜ້າທີແລ້ວ ທີເຮົາຈະຕ້ອງໄດ້ຍ່າງເອົາໃນໄລຍະທາງຍາວເກືອບສິບຫລັກ. ເຮົາຮັບເອົາຄຳສັ່ງຈາກຜູ້ບັນຊາການດ້ານຣົບແລ້ວກໍ ອອກ ເດີນ ທາງ ເຮົາບໍ່ຫານໄປຕາມທາງແປນເພາະເຮົາຢ້ານຖືກນິບສັດ ຕູ ເຮົາຈະຕ້ອງໄປຕາມທາງລັດມີບາງບ່ອນເຮົາຕ້ອງໄດ້ບຸໄປຕາມປ່າທຶບ. ໃນຍາມນີ້ບັງເອີນເຮົາໄດ້ຍິນສຽງໄຫ້ຂອງເດັກດັງແວວອອກມາຈາກຮ່ອມຫ້ວຍເບື້ອງຂ້າງ ທາງທີ ເຮົາພວມໄປ.

– ແມ່ນສຽງຫຍັງສຽງສັດຮ້ອງບໍ ຫລືວ່າແມ່ນສຽງຄົນໄຫ້. ຄົນ! ແຕ່ເປັນຫຍັງມາຮ້ອງໄຫ້ຮ່ຳໄຮຢູ່ກາງປ່າເລິກດົງໜາເຊັ່ນນີ້? ຄຳຖາມດັ່ງກ່າວໄດ້ເກີດຂຶ້ນໃນໃຈ, ໃນຍາມນີ້ບໍ່ທັນມີອັນໃດໃຫ້ຄວາມແນ່ນອນກັບເຮົາ, ທຸກສິ່ງທຸກຢ່າງຢູ່ໃນສະພາບທີສົງໄສ, ເພື່ອຕອບຄຳຖາມນີ້ໃຫ້ຖືກເຮົາພະຍາຍາມບຸປ່າເຂົ້າໄປຫາບ່ອນທີມີສຽງຮ້ອງໄຫ້ດ້ວຍ ຄວາມລະມັດລະວັງ:

– ອູ້ຍ! ຕາຍຄົນ! ຂ້ອຍຕື່ນໝົດແຮງຂ້ອຍຮ້ອງຖາມຂຶ້ນ

ໂລດ.

– ປຸດ ! ແມ່ນໃຜເຮັດຫຼັງປູ່ຫັ້ນ !

- ຈັ່ງມາຂ້າກູໃຫ້ຕາງສາ ຢ່າເຮັດບາບໃຫ້ກູແນວນີ້, ນັ້ນຄື ຄໍາຕອບຂອງຜູ້ຄົນທີ່ພວມຮ້ອງຄາງດ້ວຍຄວາມປວດຫົວໃຈ. ເຮົາພະຍາຍາມເຂົ້າໄປໃກ້ກ່ວາເກົ່າແລ້ວສ່ອງເບິ່ງໃຫ້ຄັກ:

– ໂອ້ຍ ບໍ່ແມ່ນສັດຕູມັນແມ່ນປະຊາຊົນ,ຫນຶ່ງ–ສອງ–ສາມ–ສີ່. ໂຫ້ຮອດສີ່ຄົນພຸ້ນສາມຄົນນັ້ນນອນໄດ່ວກັນຢ່າງມິດງຽບ, ໃນນັ້ນມີເດັກຍິງສອງຄົນ ອາຍຸໃນລາວ ໑໑–໑໒. ເຮົາຟ້າວໂດດເຂົ້າໄປອູ້ມເອົາເຂົາຜູ້ທີ່ພວມຮ້ອງຄາງນັ້ນ.

– ນ້ອງ! ນ້ອງເປັນຫຼັງໃຜເອົານ້ອງມາທີ່ນີ້ເຂົາມືນຕາເບິ່ງເຮົາແລ້ວ ເອົາມືໂອບກອດເຮົາແລ້ວຮ້ອງໄຫ້ຂຶ້ນ ຢ່າງຫນ້າສົມເພດ. ເຮົາເລົ່າເລື່ອງມາຮອດນີ້ນ້ອງສະອື້ນ ໄຫ້ຂຶ້ນ, ຂ້ອຍຮູ້ວ່າຂ້ອຍໄດ້ຄືນເອົາຄວາມຫລັງມາບີບໃຈນ້ອງເປັນເທື່ອທີ່ສອງ ເຮັດໃຫ້ນ້ອງໄດ້ຮັບຄວາມລະທົມຂົມຂື່ນແລະຮ້ອງໄຫ້ຊຸ່ນນີ້. ຂ້ອຍໂອບກອດເອົານ້ອງ ແລະ ຂໍໂທດນໍານ້ອງ.

– ນ້ອງຈົ່ງເຮັດໃຈແຂງໆ ອະນຸບາດໃຫ້ອ້າຍເລົ່າ ເພື່ອ

ໃຫ້ໝູ່ເພື່ອນອ້າຍນ້ອງ ແບ່ງປັນເອົາຄວາມແຄ້ນເຄືອງນີ້ ຈາກນ້ອງ ແລະ ພ້ອມກັນທົດແທນຄືນຊ່ວຍນ້ອງ, ໃນຂະນະນີ້ຂ້ອຍຫລຽວເບິ່ງອ້າຍນ້ອງໃຜໆ ກໍ່ຫນ້າແດງ ແລະ ສະແດງຄວາມຄຽດແຄ້ນນຳນ້ອງ, ຂ້ອຍຂໍອະນຸຍາດນຳນ້ອງອີກເທື່ອຫນຶ່ງແລ້ວເລົ່າຕໍ່ໄປ.

– ຈາກຄຳຖາມຂອງເຮົານັ້ນ ນ້ອງໄດ້ເວົ້ານຳເຮົາດ້ວຍສຽງອັນສັ່ນຄ້າມ.

– ສັດຕູມັນຍິງນ້ອງພ້ອມດ້ວຍພໍ່ ແລະ ເອື້ອຍຂອງນ້ອງຕາຍແລ້ວ, ສ່ວນນ້ອງຖືກຈັບ ! ເຮົາບໍ່ຖາມນ້ອງຕໍ່ໄປອີກຫລາຍເລື່ອງ, ຟັງນ້ອງເວົ້າເຮົາກໍເຂົ້າໃຈເຖິງສະພາບທີ່ພວມເປັນຢູ່ ໃນທຸກມື້ນີ້, ເຮົາຟ້າວເຈ່ຍເອົານ້ອງບຸປ່າອອກມາແລ້ວມຸ່ງຫນ້າໄປຫາສະໜາມຣົບທິດເບ, ສົ່ງຄຳສັ່ງຂອງດ້ານຣົບໃຫ້ແນວຣົບແລ້ວເຮົາກໍ່ເຈ່ຍເອົາ ນ້ອງ ຄືນດ້ານຣົບ. ແມ່ນຕອນແລງຂອງມື້ນີ້ເອງ ທີ່ນ້ອງໄດ້ເຂົ້າປິ່ນປົວຢູ່ໂຮງຫມໍຂອງດ້ານຣົບ, ຈາກນັ້ນ ຜູ້ບັນຊາການດ້ານຣົບ ກໍມອບໃຫ້ເຮົາພາເອົາອ້າຍນ້ອງເຈັດແປດຄົນ ໄປມ້ຽນຊາກສົບພໍ່ ແລະ ເອື້ອຍຂອງນ້ອງຢູ່ກາງປ່າດົງ.

ອາທິດຫນຶ່ງຜ່ານມາ ອາການເຈັບຂອງນ້ອງໄດ້ເບົາ

ບາງລົງ ແລະ ໄກ້ຈະດີ ເຮົາໄດ້ເຂົ້າໄປ ຢ້ຽມຢາມນ້ອງ, ຫລຽວເຫັນເຮົາ ນ້ອງກໍຮ້ອງໄຫ້ຂື້ນໂລດ, ນ້ອງໄຫ້ບໍ່ແມ່ນ ຍ້ອນນ້ອງຢ້ານເຮົາ ແຕ່ແມ່ນນ້ອງຮູ້ສຶກແນວໃດກໍບໍ່ຮູ້, ມີແຕ່ນ້ອງເວົ້າວ່າ:

– ຍ້ອນນີ້ອ້າຽນ້ອງຈຶ່ງບໍ່ຕາຽ.

ເຮົາເຂົ້າໄປນັ່ງແປະຂ້າງນ້ອງ ເອົາມືລູບຫົວນ້ອງ ລະດົມໃຫ້ນ້ອງກິນເຂົ້າ, ເຮົາຢາກຖາມ ກ່ຽວກັບເລື່ອງການເປັນມາຂອງນ້ອງ, ແຕ່ເຫັນວ່າ ມັນຈະເປັນການລົບກວນອາການເຈັບຂອງນ້ອງ, ນ້ອງຈະເພີ້ມຄວາມເຈັບຂື້ນຕື່ມ, ສະນັ້ນເຮົາຈຶ່ງບໍ່ຖາມ. ເຮົາບໍ່ຖາມ ແຕ່ນ້ອງພັດເວົ້າໃຫ້ເຮົາຟັງ:

– ນ້ອງບໍ່ຄິດ ວ່ານ້ອງຈະຍັງມີຊີວິດຢູ່, ນ້ອງມີແຕ່ເຊື່ອວ່ານ້ອງຕ້ອງຕາຽເປັນແນ່ແທ້. ແມ່ນ້ອງຖືກຕາຽຢູ່ຄາເຮືອນ ໃນເວລາສັດຕູບຸກເຂົ້າບ້ານ, ມັນຈູດເຜົາບ້ານ ແມ່ນ້ອງ ຖືກລູກປືນຢູ່ເທິງເຮືອນ, ເວລານັ້ນພໍ່ ແລະ ເອື້ອຍຂອງນ້ອງຫນີໄປໄຮ່ຫມົດ, ສັດຕູຈູດເຮືອນນ້ອງ ນ້ອງບໍ່ຊ່າງເຮັດແນວໃດໄດ້ ນ້ອງມີແຕ່ໄຫ້ຢູ່ກາງບ້ານ, ເຮືອນລົ້ມລົງທັບແມ່ນ້ອງ, ແມ່ນ້ອງຖືກ ເສຽຊີວິດໄປ. ເວົ້າ

ຮອດນີ້ ນ້ອງນຸບໜ້າໃສ່ຕັກຂ້ຽງ ແລ້ວຮ້ອງໄຫ້ຂື້ນຢ່າງໜ້າສົງສານ; ນ້ອງພະຍາຍາມ ບີບຮັດຄວາມແຄ້ນເອົາໄວ້ ແລ້ວເວົ້າຕໍ່: ພວກສັດຕູມັນຈູດບ້ານ ແລ້ວກໍກວາດຕ້ອນເອົາປະຊາຊົນໄປນຳພວກມັນ, ໃນຊົ່ວເວລາດຽວກັນນີ້ພໍ່ ແລະ ເອື້ອຍຂອງນ້ອງກໍພໍດີກັບມາແຕ່ໄຮ່, ວັດຖຸສິ່ງຂອງບໍ່ໄດ້ຫຍັງ ແຕ່ກໍຖືກພວກມັນ ກວາດຕ້ອນເອົາໄປ, ໝົດພໍ່ລູກພວກນ້ອງ ໃຜກໍ່ຮ້ອງໄຫ້ ແລະ ດ່າ ປ້ຽພວກມັນ, ພໍ່ລູກພວກນ້ອງຖືກມັດຕິດກັບປາວຮອດຂຽດ ພວກນ້ອງຢ່າງບໍ່ທັນໝູ່ ເພາະນ້ອງເມື່ອຍ ທັງເຈັບຕີນຍ່າງໄວບໍ່ໄດ້ ແລະ ກໍແມ່ນໃນຍານີ້ເອງ ທີ່ອ້າງນ້ອງກອງທັບປົດປ່ອຍໄດ້ໄລ່ຕັບສູບພວກມັນເພື່ອກອບກູ້ເອົາປະຊາຊົນຄືນມາ.

ພວກນັ້ນ ຢ້ານກອງທັບປົດປ່ອຍໄລ່ທັນ ແລະ ຈະເອົາປະຊາຊົນຄືນ, ຮອດຮ່ອງຫ້ວຍທີ່ນັ້ນ ມັນເອົາປືນຍິງກວາດໃສ່ພໍ່ລູກພວກນ້ອງ, ພໍ່ ແລະ ເອື້ອຍຂອງນ້ອງ ລົ້ມລົງ ນ້ອງຖືກລູກປືນສອງນັດປູ່ຂາ ນ້ອງກໍລົ້ມລົງ, ມັນຍິງຊ້ຳກວາດໄປກວາດມາຕັ້ງຫລາຍເທື່ອ ແຕ່ບຸນຫລາຍລູກປືນບໍ່ຖືກນ້ອງຕື່ມ, ນ້ອງນອນໝູບດັ່ງຄົນຕາຍແລ້ວ. ພວກມັນຍິງຂ້າພໍ່ລູກພວກນ້ອງ ແລ້ວກໍແລ່ນໜີຈາກພວກນ້ອງ

ໄປ, ຮູ້ວ່າມັນຫນີແລ້ວ ນ້ອງລຸກຂຶ້ນແຕ່ກໍລຸກບໍ່ໄດ້ ນ້ອງຮູ້ວ່ານ້ອງຖືກເຈັບປູ່ຂາ. ນ້ອງພະຍາຍາມ ຄານໄປຫາພໍ່ແລະ ເອື້ອຍນ້ອງ ເອີ້ນພວກເພິນແຕ່ພວກເພິນບໍ່ເຮັດຫຍັງໄດ້ແລ້ວ ແລະ ທັງບໍ່ຮູ້ສຽງຂອງນ້ອງ ທີ່ເອີ້ນຫາເພິນນັ້ນອີກ ພໍ່ ແລະ ເອື້ອຍສິ້ນຈາກນ້ອງໄປແລ້ວ, ນ້ອງຟຸບລົງກອດຊາກສົບຂອງພວກເພິນ ແລະ ນ້ອງ ກໍສະຫລົບໄປ, ຈັກດົນປານໃດນ້ອງຈຶ່ງຟື້ນສະຕິຄືນ ນ້ອງບໍ່ຊ່າງເຮັດຫຍັງນອກຈາກແຕ່ປ່ອຍສຽງຮ້ອງໄຫ້ ກ່ອມປ່າດົງພົງພະນາ, ແຕ່ເຖິງແມ່ນນ້ອງຊິຮ້ອງໄຫ້ປານໃດ ພໍ່ ແລະ ເອື້ອຍເພິນກໍບໍ່ຍິນດອກ, ພວກອາເມລິກາວາງປາວ ຊ່າງເຮັດບາບເຊັ່ນນີ້ໃຫ້ແກ່ນ້ອງ, ຍາມນີ້ນ້ອງບໍ່ຢ້ານໃຜອີກແລ້ວ ນ້ອງຮ້ອງໄຫ້ດ່າປ່ອຍ ພວກມັນຈົນ ອິດເມື່ອຍ, ນ້ອງເລົ່າເລື່ອງຊີວິດການເປັນມາຂອງນ້ອງ ໃຫ້ເຮົາຟັງ ດ້ວຍຄວາມ ບອບຊ້ຳແລະ ເຈັບແສບ, ເຮົາບໍ່ຢາກໃຫ້ນ້ອງຮ້ອງໄຫ້ເພາະຈະໄດ້ຮັບແຕ່ຄວາມເຈັບປວດຫົວໃຈ ສະນັ້ນ ເຮົາຈຶ່ງໄດ້ແຕ່ ລະດົມນ້ອງ:

– ນ້ອງຈົ່ງຢ່າຮ້ອງໄຫ້ ອ້າຍສົງສານນ້ອງຫລາຍ ນ້ຳຕາອ້າຍກໍອອກນຳ, ພວກອ້າຍຢູ່ທີ່ນີ້ ບໍ່ປະໃຫ້ນ້ອງຕາຍ.

ນ້ອງຈຶ່ງອົດທົນປິນປົວໃຫ້ດີໄວ ເພື່ອຊອກຫາ ຊ່ອງທາງລ້າງແຄ້ນ ທົດແທນໃຫ້ແກ່ ພໍ່ແມ່ ອ້າຍເອື້ອຍນ້ອງ ທີລົ້ມຕາຍໄປຍ້ອນສີມື ຂອງພວກຄົນທີ່ບໍ່ມີສັນດານ ຂອງຄວາມເປັນມະນຸດ, ອ້າຍຮູ້ແລ້ວ ຮູ້ຄວາມເຈັບຊ້ຳຂອງນ້ອງແລ້ວ, ມື້ອື່ນ ພວກອ້າຍຈະໄດ້ອອກສະໜາມ ພວກອ້າຍທີ່ຈະລ້າງແຄ້ນແທນນ້ອງ.

ຂ້ຽໄດ້ເຂົ້າປ່ຽມຢາມນ້ອງພຽງເທື່ອດຽວ, ຮອດມື້ໃໝ່ມາ ຂ້ຽກໍໄດ້ອອກຈາກດ່ານຮົບ ໄປສູ່ສະໜາມ, ຕໍ່ນັ້ນມາດົນປານໃດ ເພິ່ນຈຶ່ງສົ່ງນ້ອງມາແນວຫລັງຂ້ຽກໍບໍ່ຮູ້ ແລະເວລາຂອງການຈາກກັນລະຫວ່າງ ຂ້ຽກັບນ້ອງກໍແກ່ຍາວຈົນເຖິງແປດປີ. ມື້ນັ້ນ ນ້ອງບໍ່ຄື ພູທອງ ຄາວກ່ອນ ນ້ອງຕຸ້ຍພີ ມີສຸຂະພາບແຂງແຮງ: ນ້ອງຕ່າງເກົ່າຫລາຍ. ຂ້ຽເວົ້າມາຮອດນີ້ຂ້ຽຟາດສາຍຕາໄປເບິ່ງບັນດາອ້າຍນ້ອງທີ່ນັ່ງຟັງຂ້ຽເລົ່າປະຫວັດການເປັນມາຂອງນ້ອງ ພູທອງນັ້ນໃຜໆ ກໍ່ຍັງຄົງສະແດງຄວາມເຄັ່ງຄຽດ ບົ່ມເຊື້ອງໄວ້ຢູ່ໃນສ່ວນເລິກແຫ່ງຫົວໃຈຂອງໃຜມັນ, ການເລົ່າຂອງຂ້ຽສິ້ນສຸດລົງ ແຕ່ກີນພາບ ຂອງຄວາມບວບຊ້ຳ ໃນຊີວິດຂອງນ້ອງນັ້ນ ມັນເຮັດໃຫ້ຜູ້ຄົນ ທີ່ໄດ້ຮູ້ເລື່ອງຂອງນ້ອງ ບໍ່ສາມາດ ລືມໄດ້,

24/VII

ພວກເຮົາຢູ່ທີ່ນີ້ ໃນກ່ບັ່ງນິດ ສັບຊ້ອນອາລົມ ຂອງໃພນັບ, ອີກເວລາຕໍ່ມານ້ອງຈຶ່ງໄດ້ເວົ້າໃຫ້ພວກເຮົາຟັງວ່າ:

– ນ້ອງດີໃຈຫລາຍ ທີ່ນ້ອງພົ້ນຈາກຄວາມຕາຍ, ໃນຄາວຫນຶ່ງທີ່ຖືກເຈັບຢູ່ກາງປ່ານ້ອງຄິດວ່າຊີວິດຂອງນ້ອງຄົງຈະສາບສູນໄປຢູ່ກາງປ່າໃພແຫ່ງນັ້ນ, ແຕ່ແລ້ວແນວຄິດນັ້ນໄດ້ຖືກທຳລາຍໄປ ດ້ວຍການປະພຶດ ອັນເຕັມປ່ຽມໄປດ້ວຍສິນທຳ ຂອງອ້າຍນ້ອງກອງທັບປົດປ່ຍ. ນ້ອງບໍ່ພຽງແຕ່ໄດ້ຮັບມາເບິ່ງແຍງປິ່ນປົວ ທາງດ້ານສຸຂະພາບ ເທົ່ານັ້ນ ແຕ່ນ້ອງ ຍັງໄດ້ຮັບ ການສຶກສາຮ່ຳຮຽນອີກ ຄືອອກຈາກໂຮງຫມໍດ້ານຮົບແລ້ວ ນ້ອງກໍໄດ້ມາຢູ່ ແນວຫລັງ, ນ້ອງໄດ້ເຂົ້າໂຮງຮຽນບຳບັນດານ້ອງນ້ຍ, ນ້ອງມີຫມູ່ເພື່ອນຫລວງຫລາຍ ໃນຈຳນວນຫມູ່ເພື່ອນຂອງນ້ອງນັ້ນ ກໍມີຫລາຍຄົນທີ່ຢູ່ໃນສະພາບອັນດຽວກັນກັບນ້ອງ.

ຫມູ່ເພື່ອນອ້າຍເອື້ອຍນ້ອງໃນງ ກໍຮັກແພງພວກນ້ອງແລະເອົາໃຈໃສ່ເບິ່ງແຍງພວກນ້ອງຊຶ່ງບໍ່ຕ່າງຫຍັງກັບມາດາຜູ້ໃຫ້ກຳເນີດຮັກແພງນ້ອງ ໃນເມື່ອກ່ອນ, ປີນີ້ອາຍຸນ້ອງໄດ້ສິບຫ້າປີພໍດີນ້ອງຮຽນຈົບຫ້ອງສີ່ບໍລິບູນ, ຍ້ອນຄວາມຄຽດແຄ້ນໄດ້ບີບຮັດຫົວໃຈຢ່າງບໍ່ມີວັນຫລົງລືມ, ສະນັ້ນ

ພໍແຕ່ນ້ອງເສັງຈົບຊັ້ນປະຖົມສຶກສາແລ້ວນ້ອງກໍລະຫນັກ ຈັບປືນອອກສູ່ແນວຮົບເພື່ອລະງັບຄວາມບວບຊ້ຳໃນຊີວິດ ຂອງນ້ອງ ກໍຄືຂອງເພື່ອນຮ່ວມຊາດທີ່ພົບ ແລະ ກຳລັງ ພົບຢູ່ໃນປະຈຸບັນ, ນ້ອງຈະຈູດຄວາມແຄ້ນ ໃຫ້ລຸກໄຫມ້ ປົດຄ້ຽງ ແລະພວກປຸ້ນຊາດໃຫ້ສົມແຄ້ນ, ເລືອດທຸກປາດ ຂໍເອົາບູຊາ ແນວຮົບ. ນ້ອງລຸກຢືນຂຶ້ນ ກຳກ່ຳປັ້ນແຫນ້ນ ສະແດງຄວາມຕັດສິນໃຈ ຂອງຕົນ. ໃນບານນັ້ນ ສຽງປືນ ໃຫຍ່ສັງຫານສັດຕູ ກໍດັງກ້ອງມາສູ່ທີ່ນີ້, ສິ່ງນັ້ນ ມັນ ໄດ້ບອກໃຫ້ພວກເຮົາຈົ່ງກ້າວເດີນໄປ ໃຫ້ທັນກັບສະພາບ, ຊຶ່ງໄດ້ສັ່ງໃຫ້ອ້າຍນ້ອງອອກເດີນທາງຕໍ່ໄປ.

# ທ່ານໝໍພອນສຸກ

**ໂດຍ : ສ. ວົງດາລາ**

ລາວຍ່າງອອກມາຢືນເອື້ອງເສົາລະບຽງ ທາງໜ້າ ແລະ ຖອດກອກຢາມາສູບຢ່າງສະຫວາດສະເຫວີຍຫລັງຈາກທີ່ເຮັດວຽກຢ່າງເອົາຈິງເອົາຈັງມາແຕ່ເຊົ້າພຸ້ນ... ນັ້ນແມ່ນພອນສຸກທ່ານໝໍໜຸ່ມໆ ຫາກໍຮຽນຈົບວິຊາແພດຊັ້ນສູງມາຈາກປະເທດຝະລັ່ງ ລາວມີຮູບຮ່າງສົມສ່ວນ, ເນື້ອໜັງຂາວງາມ, ໜ້າຕາແຈ່ມໃສ " ຊິງເປັນເຈົ້າເປັນນາຍໄດ້" ຄືດັ່ງພໍ່ຂອງລາວເຄີຍເວົ້າ. ນາກຳວຽກຕາງພໍ່ຢູ່ໂຮງໝໍສ່ວນຕົວແຫ່ງນີ້ພຽງປີປາຍເທົ່ານັ້ນ, ລາວໄດ້ມີຊື່ສຽງຊ່າກັນໄປທົ່ວວຽງຈັນວ່າເປັນທ່ານໝໍຜູ້ມີໃຈບຸນ, ຮູ້ຈັກເມດຕາກະລຸນາ ຜູ້ທີ່ຖືກເຈັບໄຂ້ໄດ້ປ່ວຍທັງຫລາຍ. ນັ້ນກໍຍ້ອນທ່ານໝໍໜຸ່ມຜູ້ນີ້ມີໃຈມັກວິຊາອາຊີບຂອງຕົນທີ່ສຸດ.

ຕັ້ງແຕ່ຫວ່າງໄປເມືອງຝະລັ່ງພຸ້ນລາວເລືອກຮຽນວິຊາແພດກໍບໍ່ແມ່ນແຕ່ຍ້ອນອານາຄົດສ່ວນຕົວ ຄື ຫລາຍຄົນທີ່ໄປກ່ອນ, ແຕ່ຍັງແມ່ນຍ້ອນລາວມັກວິຊາແພດ ວິຊາທີ່ມີລິດຊ່ວຍຊູເອົາຊີວິດຄົນໄວ້ໄດ້. ຜ່ານການຮ່ຳຮຽນຢູ່ຕ່າງປະເທດ, ໄດ້ອ່ານ ຫລາຍ ປຶ້ມ ຫລາຍພັບ, ໄດ້ລົມກັບກັບຫລາຍຜູ້ຫລາຍຄົນ, ໄດ້ສົນທະນາກັບໝູ່ຄູ່ຕັ້ງຫລາຍຄັ້ງຫລາຍຫົນ, ລາວແຮ່ງເຊື່ອແນ່ກວ່າເກົ່າວ່າເສັ້ນທາງຊ່ວຍຊູເອົາຊີວິດ, ຂອງຄົນໄວ້ໄດ້ມີແຕ່ທາງດຽວ, ນັ້ນຄືວິຊາແພດ. ກໍແມ່ນຢູ່ຕ່າງປະເທດທີ່ລາວຍອມວ່າສີວິໄລກວ່າບ້ານຕົນນັ້ນ. ລາວແຮ່ງເກີດມີແນວຄິດຮັກແພງຄົນລາວທີ່ກຳລັງທຸກຍາກຢູ່ທາງປະເທດ, ແຕ່ລະເທື່ອທີ່ໄດ້ຮັບຂ່າວວ່າຢູ່ທາງບ້ານມີການເສັຽຊີວິດຊີວັງໄປຍ້ອນເລື່ອງນັ້ນເຫດນີ້, ລາວອຸກໃຈນຳທີ່ສຸດ. ລາວໄດ້ສ້າງໃຫ້ຕົນເອງມີແນວຄິດບາດໝາງກັບກັບຄວາມຕາຍ, ສະນັ້ນເຫດການອັນໃດທີ່ນຳໄປສູ່ຄວາມຕາຍ ກໍລ້ວນແຕ່ຖືກລາວຕີລາຄາວ່າບໍ່ດີ ແລະ ໂຫດຮ້າຍ ສາມານອີກຢ່າງໜຶ່ງຍ້ອນໄດ້ຮັບຄວາມສັ່ງສອນຈາກທ່ານໝໍເຖົ້າຜູ້ເປັນພໍ່ມາແຕ່ຍາມຍັງນ້ຽພຸ້ນ, ລາວຈຶ່ງເກີດມີແນວຄິດມັກວຽກມັກງານ, ມັກວິຊາ

ອາຊີບ ແລະ ຮູ້ຈັກປູ່ເພື່ອຜູ້ອື່ນ. ຍ້ອນເຫດນັ້ນລາວຈຶ່ງບໍ່ມັກສົງຄາມ ບໍ່ວ່າຈະເປັນສົງຄາມແບວໃດ. ລາວລັງກຽດພວກຂີ້ຄານມັກງ່າຍ; ຫມິ່ນປະໝາດ ພວກ ຮູ້ ແຕ່ ຕົນເອງໂດຍບໍ່ເຫັນແກ່ຜູ້ອື່ນໆ ກຽດຊັງພວກທີ່ກໍ່ຄວາມລຳບາກບາກແຄ້ນ ໃຫ້ແກ່ຜູ້ທີ່ບໍ່ມີໂທດມີໄພຫຍັງໃນຊີວິດ. ລາວກັບຄືນມາວຽງຈັນດ້ວຍທຶນເຄື່ອງພຽງສາມໜ່ວຍເທົ່ານັ້ນ: ຫນ່ວຍຫນຶ່ງໃສ່ເຄື່ອງນຸ່ງຖືສ່ວນຕົວ, ຫນ່ວຍຫນຶ່ງໃສ່ປຶ້ມຣຽນຕ່າງໆ ແລະ ຫນ່ວຍຫນຶ່ງອີກເຕັມແຕ່ເຄື່ອງມືທັນສະໄໝຂອງຜູ້ເປັນແພດ.ລາວຂຶ້ນເຄື່ອງບິນລາຈາກຝະລັ່ງດ້ວຍຄວາມຫວັງຈະກັບຄືນເມືອບ້ານແລ້ວຊ່ວຍກູ້ເອົາຊີວິດຄົນລາວໄວ້, ພະຍາຍາມຖອກເຫື່ອເທແຮງຊ່ວຍໃຫ້ລາວທຸກຄົນໄດ້ມີສຸຂະພາບເຂັ້ມແຂງ, ບຸທ່າງທຳມາຫາກິນຕາມສະບາຍໃຈ ແລະ ມີເງື່ອນໄຂພ້ອມກັບສ້າງສາປະເທດຊາດໃຫ້ຮຸ່ງເຮືອງເຫລືອງເຫລື້ອມຄືບ້ານເພິ່ນເມືອງເຂົາ.

ຕົກມາຮອດວຽງຈັນ, ລາວໄດ້ແອບກຳໂຮງຫມໍສ່ວນຕົວຕາງພໍ່ ແລະ ໄດ້ປົວໃຫ້ຫລາຍຄົນຫາຍໄພໄຂ້ເຈັບໄປຍ້ອນ. ຜົນສຳເລັດທີ່ຜ່ານມາໄດ້ມີສ່ວນເຮັດໃຫ້ລາວພໍໃຈກໍ່ວຽກງານໄປຫລາຍເຕີບແລະແຮ່ງພາໃຫ້ລາວເຊື່ອແນ່ວ່າວິ

ຊາະເພາະແມ່ນເສັ້ນທາງດຽວ ທີ່ພໍຈະຊ່ວຍນຳຄວາມສຸກມາໃຫ້ມະນຸດໄດ້. ມີຫລາຍເທື່ອລາວກໍຄິດເຖິງເລື່ອງທີ່ເກີດຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ, ຈຸດຫນັກແມ່ນຢູ່ໃນປະເທດນີ້. ລາວໄດ້ເປີດວິທະຍຸຟັງຂ່າວຄາວຈາກຫລາຍໆ ສະຖານີຕ່າງກັນແລະກໍໄດ້ຮູ້, ໄດ້ຍິນຫລາຍຢ່າງຫລາຍແບບ ນອກນັ້ນລາວຍັງໄດ້ຮັບຈົດໝາຍ ຫລາຍສະບັບຈາກຫມູ່ຄູ່ທີ່ກັບຄືນປະເທດຕາມຫລັງແຕ່ບໍ່ແມ່ນກັບນາວຽງຈັນ.ແລະຜ່ານບັນດາຈົດໝາຍນັ້ນ. ລາວກໍຄິດບໍ່ແມ່ນງ່າຍ ຢ່າງໃດກໍດີທຸກສິ່ງທຸກຢ່າງທີ່ລາວໄດ້ຮູ້, ໄດ້ເຫັນ, ໄດ້ຍິນ, ໄດ້ຄຶດລ້ອນແຕ່ເຮັດໃຫ້ລາວສຳນຶກເລິກ ກ່ວາເກົ່າວ່າເສັ້ນທາງທີ່ລາວກຳລັງດຳເນີນໄປທຸກມື້ນີ້ ແມ່ນເສັ້ນທາງຊີວິດ ເສັ້ນດຽວທີ່ຖືກຕ້ອງ ແລະ ຈົບງາມກ່ວາເພີ່ນຫມົດ.

"ຈະເປັນນັກການເມືອງຫລື ມັນກໍພຽງແຕ່ໄປໃດນັ້ນໃດນີ້ຊື່ໆ, ແລ້ວພາຄົນໄປລົ້ມໄປຕາຍນຳລ້າງ ຈະເປັນນັກຮົບນັກເລວຫລື ກໍພຽງແຕ່ໄປຊອກຂ້າຜູ້ອື່ນໆຫລືໄປໃຫ້ຜູ້ອື່ນຂ້າຕົນເອງຢ່າງອັບປະໂຫຍດ. ວ່າ ຈະ ປ່ຽນ ສັງ ຄົມຫລື ...?" ເລື່ອງນີ້ລາວເຊື່ອນຳບໍ່ໄດ້ ເພາະລາວເຂົ້າໃຈວ່າສະໄຫມນີ້ຕ່າງກັບເປີງລັດເຊຍຫລາຍແລ້ວ ແລະ ຖ້າປ່ຽນ

ໄດ້ເຫັນນັ້ນລາວກໍບໍ່ຫຍຸ້ງຍາກຍ້ອນ: ບໍ່ສະຫນຸກສະຫນານ
ຫຍັງຍ້ອນ; ຢູ່ສັງຄົມໃດລາວກໍເປັນແພດປົວຄົນເຈັບຢູ່ສັງ
ຄົມນັ້ນ, ຢູ່ໃສກໍແມ່ນລາວ, ປົວຄົນລາວ, ສະນັ້ນລາວຈຶ່ງ
ເຫັນວ່າຕົນເອງໄດ້ຮູ້ຈັກນີຊີວິດຢູ່ຢ່າງຈົບງາມແລ້ວ. ສ່ວນ
ເລື່ອງອານາຄົດຂອງລາວເອງ ມັນ ກໍ ເປັນ ອັນ ຈະແຈ້ງຢູ່
ແລ້ວລາວຈະແອບກຳໂຮງຫມໍນີ້ ໄປຈົນກວ່າ ຈະກາຍເປັນ
ເຈົ້າຂອງຂອງມັນຕາງພໍ່ ແລ້ວລາວຈະກໍ່ເຮືອນສ້າງຫໍ່ຂຶ້ນ
ຢູ່ຂ້າງເຮືອນ ຫລັງໃຫ່ຍໆຂອງພໍ່ຫັ້ນ, ຈະໄດ້ລູກເຕົ້ານຳ
ເພິ່ນ;ແລ້ວຈະເຮັດວຽກບໍ່ປຸດບໍ່ປ່ອນເພື່ອຊ່ວຍນຳຄວາມສຸກ
ມາໃຫ້ຄົນລາວຜູ້ພົບເຄາະຮ້າຍ ແລະແລ້ວຄວາມຊະລາຈະ
ມາເຖິງ, ລາວຈະລາໂລກປະຊື່ສຽງອັນ ຈົບງາມ, ຫອມ
ຫວນໄວ້ໃຫ້ແກ່ຄົນລາວທັງຫລາຍທີ່ເກີດໃຫມ່ໃຫ່ຍລຸນ...

ນາດນັ້ນມາ, ລູກຫລານຂອງຜູ້ທີ່ລາວປົວໃຫ້ພົ້ນຈາກ
ຄວາມຕາຍໃນວັນນີ້ຈະເວົ້າເຖິງຊື່ ພອນສຸກຂອງລາວດ້ວຍ
ຄວາມຮັກແພງ, ນັບຖື ແລະ ສຸດແສນອາໄລ...

ລາວຍ່າງເລາະໄປຕາມລະບຽງ ທີ່ ປູດ້ວຍດິນກະເບື້ອງ
ຂາວ ສະ ອາດ ດີ, ທັງຄິດເຖິງວຽກງານໃນມື້ ອື່ນທັງພົນ
ຄວັນຢາອອກຢ່າງເພິ່ງພໍໃຈທີ່ສຸດ, ພໍລົງພົ້ນພະນັກລະ

ບຽງ ແລະ ຍ່າງແວ່ະໄປຕາມຮ່ອມທາງບ້ຽງ ປູຫີນແຮ່ທີ່ຜ່ານເດີ່ນໂຮງຫມໍອັນເປັນຄືສວນດອກໄມ້ບັງແຫ່ງຫນຶ່ງ ໄປຫາເຮືອນໄວ້ລົດ,ທ່ານຫມໍຫນຸ່ມ ຫລຽວເຫັນລົດຊຸກບ້ຽງຄັນຫນຶ່ງປຸດຢູ່ຕໍ່ຫນ້າໄກຈາກລາວປະມານສິບຫລາ, ໃນນັ້ນມີຄົນເຈັບຜູ້ຫນຶ່ງນັ່ງເຫົ້າຢູ່, ນັ້ນແມ່ນຂັນທອງຜູ້ຫນຶ່ງໃນບັນດາຄົນເຈັບທີ່ໂຮງຫມໍສ່ວນຕົວຫລັງນີ້ ຮັບປົວໃຫ້ລ້າງ, ແລະ ນັ້ນກໍ່ແມ່ນກໍລະນີພິເສດກວ່າເພິ່ນໃນບັນດາຄົນເຈັບທັງມວນ ຢູ່ໃຕ້ການປິ່ນປົວຂອງທ່ານຫມໍພອນສຸກ. ຕະຫລອດທັງຫມົດຫົກເດືອນຜ່ານມາ, ທ່ານຫມໍຫນຸ່ມຜູ້ນີ້ໄດ້ຖອກເຫື່ອແຫເຮງອອກບໍ່ແມ່ນຫນ້ຽງ ຈຶ່ງເຮັດໃຫ້ປຸກປາທານັງ ແລະ ວິຊາແພດຂອງລາວເອົາຊະນະຄວາມຕາຍທີ່ກຽມຍຶດເອົາຂັນທອງໄປ.

ທ່ານຫມໍຄ່ຽງຍ່າງໄປກາລົດຊຸກຄັນນັ້ນ, ຄ່ຽງນັ່ງລົງບ່ອນວາງມືເບື້ອງຊ້າຍຂອງລົດແລ້ວ ຖາມ ຂຶ້ນ ກ່ອນ ດ້ວຍສຽງເປັນກັນເອງ:

– ຈັ່ງໃດ, ໄຄແດ່ແລ້ວຕີ? ມັນບໍ່ເຈັບພິລຶກຄືເກົ່າແລ້ວດວາ?

ຄົນເຈັບກອດມືເຂົ້າແນບຢຳເກົາ, ຕີງໆຂາທັງສອງ

ເບື້ອງທີ່ບັງແຕ່ຂາຕຸ່ນແລ້ວແຫງນຫນ້າຂຶ້ນຕອບດ້ວຍສຽງ
ສັ່ນໆ:

– ໂດຍດີໄປນຳທຸກນີ້ແລ້ວຂ້ານ້ຍ ບຸນ ຄຸນ ຂອງ ທ່ານ ຫມໍແມ່ນລົ້ນເກົ້າເຫລືອຂະຫນ່ອນແທ້ໆແລ້ວຂ້ານ້ຍ.

ທ່ານຫມໍຫນຸ່ມເກືອບຕິກສະເງີ້ໄປ ເມື່ອ ຫລຽວ ເຫັນ ຮຍນ້ຳຕາທີ່ຍັງບໍ່ທັນຖືກເຊັດໃຫ້ແຫ້ງຄັກ ຢູ່ ເທິງ ແກ້ມ ສີ ຫຍ່ວງ ຈືດໆ ທັງສອງເບື້ອງຂອງຄົນເຈັບ. "ດີຊິແມ່ນຄິດຮອດບ້ານຮອດເຮືອນແລ້ວ" ລາວຄິດແນວນັ້ນແລ້ວຈຶ່ງຄ່ອຍເວົ້າອຍໃຈ:

– ອົດທົນຕື່ມຈັກສອງ, ສາມເດືອນປາກບາດຫຸ້ມດີແລ້ວກ່າຊິໄດ້ເມືອເຮືອນເມືອຊານດອກ ລາວປຸດຈັກຫນ້ຍແລ້ວຈຶ່ງເວົ້າຕໍ່:

– ລູກເມັຍເຈົ້າມາຢາມຈັກເທື່ອແລ້ວ?

– ເຂົາມາບໍ່ໄດ້ດອກຂ້ານ້ຍ. ອີກຢ່າງຫນຶ່ງເຂົາກ່າບໍ່ຮູ້ຈັກຂ່າວນີ້ດອກ...ຣໍ... ຄົນເຈັບຜູ້ນັ້ນຕອບແລ້ວກໍຫັນໃຈໃຫ່ຍບາດຜືດໆ.

– ບໍ່ເປັນຫຍັງດອກ, ຢ່າອຸກໃຈຫລາຍກໍລະນີຂອງເຈົ້າແມ່ນປົວລ້າງ,ຄ່າປຸກປາກໍບໍ່ຕ້ອງໃຊ້ຄືນເຈົ້າຢ່າຢ້ານເລື່ອງ

ເງິນເລືອງຄຳຫັ້ນ. ເບິ່ງບັດປະຈຳຕົວຂອງເຈົ້າຂ້ຽກ່າຮູ້ສະ
ພາບເຈົ້າສ່ວນໃດສ່ວນຫນຶ່ງແລ້ວ. ອົດທົນຢູ່ນີ້, ຂ້ຽຊິປົວ
ໃຫ້ຕື່ນຈັກສອງ; ສາມເດືອນແລ້ວກ່າຊິເມືອຫາລູກ ຫາ
ເມັຽໄດ້ແລ້ວ.

ໂດຽ, ຂ້ານ້ຽກ່າຮູ້ວ່າທ່ານຫມໍປົວໃຫ້ທານລ້າງ: ບາງ
ແພດກ່າເວົ້ານຳຂ້ານ້ຽແລ້ວ. ແຕ່ບາດແລ້ວຂ້ານ້ຽຊິດີ,ແລ້ວ
ຊິເປັນຄົນຂາກຸດກັບເມືອແມ່ນບໍ່ຂ້ານ້ຽ?

– ຄຳຖາມຂອງຄົນເຈັບເຮັດໃຫ້ທ່ານຫມໍຫນຸ່ມທັງອິ
ດົນ, ທັງໃຈຮ້າງຍ້ອນ. ລາວຕອບຄົນດ້ວຽສຽງຫຍຸ້ງໆໃຈ:

– ເອີ, ມັນກ່າຈຳເປັນຊັ້ນແລ້ວ, ແຕ່ກ່າຍັງມີຊີວິດຢູ່ໄປ
ນຳລູກນຳເມັຽໄດ້ດົນຫລາຽປູ່. ເຈົ້າຢ່ານ້ຽໃຈໄປກ່ອນແມ.

ຄົນເຈັບຫັນໃຈໃຫ່ຽເປັນສີຝົດໆ ເຂົ້າກ່ວາເກົ່າ, ຍົກມື
ເບື້ອງຂວາຂຶ້ນຕິລົມຕິແລ້ງບາດຫນຶ່ງແລ້ວເວົ້າຕໍ່ດ້ວຽສຽງ
ອຸກອັ່ງບິງ:

– ມັນບໍ່ແມ່ນແນວນັ້ນ, ຂ້ານ້ຽມາປົວຢູ່ນີ້ກ່າເຮັດໃຫ້
ເສັຽປຸກເສັຽປາ, ທ່ານຫມໍລ້າງບາດດີມາແລ້ວຂ້ານ້ຽກ່າກັບ
ເມືອສະຫວັນນະເຂດບໍ່ໄດ້ດອກ ຊິເອົາເງິນໃສມາຈ້າງຍົນ
ຈ້າງບາບໄດ້ເຖິງຖ້າກັບເມືອໄດ້ກ່າແມ່ນໄປເຮັດໃຫ້ລູກເມັຽ

ທຸກຍາກລຳບາກຍ້ອນລ້າໆ.

– ເຂົາຫັນໃຈໃຫຍ່ບາດຫນຶ່ງອີກແລ້ວ ອ່ອນ ສຽງ ລົງ ກ່ວາເກົາ.

- ແຕ່ກ່ອນ, ຫວ່າງຍັງມີເຫື່ອມີແຮງຢູ່ກ່າຍັງຫາກິນບໍ່ກຸ້ມປາກຈົນໄດ້ຂຶ້ນມາຊອກວຽກຢູ່ວຽງຈັນພີ້, ບາດນີ້ເສັງອົງຄະໄປແລ້ວແຮ່ງຊິປານໄດບ່າໄຫລ່ທັງສອງເບື້ອງ ຂອງຄົນເຈັບສັ່ນຂຶ້ນເປັນບາດເປັນບາດ ພາຍໃຕ້ສາຍຕາສັງເວດຂອງຜູ້ເປັນແພດ. ສຽງຫັນໃຈໃຫຍ່ສອງສຽງພ້ອມກັນດັງຂຶ້ນບາດຫນຶ່ງຍາວໆ ແລະ ຄົນເຈັບຜູ້ນັ້ນເວົ້າຕໍ່ຢ່າງຄັ່ງແຄ້ນ.

– ແມ່ນແທ້, ທ່ານຫມໍປ່ອຍໃຫ້ຂ້ານ້ອຍຕາຍແພດສາກ່າຍັງຊິໄດກ່ວານີ້.

– ຄິດບ້າ! ທ່ານຫມໍຫນຸ່ມເວົ້າສຽງແຮງໆຄື ຮ້ອງຂຶ້ນບາດຫນຶ່ງ.

– ເສັງອົງຄະມັນກ່າຍັງດີກ່ວາຊິຕາຍປະລູກປະເມຍເຈົ້າຫັ້ນລ່າບໍ.

– ຂໍໂທດນຳທ່ານຫມໍຫລາຍໆ ຄົນເຈັບແຫງນຄໍຂຶ້ນເວົ້າດ້ວຍສຽງຊື່ສັດສຸດຂະຫນາດ.

ສະເພາະຂ້ານ້ຽແລ້ວ,ຕາຽຍັງດີກ່ວາເສັຽອົງຄະ.ຫວ່າງກ່ອນນີ້, ຂ້ານ້ຽກ່າຍັງບໍ່ປາກຕາຽດອກ, ຂ້ານ້ຽຍັງປິນໄດ້ປິນເຫນືອຊອກວຽກຊອກງານເພື່ອລ້ຽງໂຕແດ່, ລ້ຽງລູກລ້ຽງເມັຽແດ່ປານນັ້ນກ່າຍັງເກືອບຕາຽອຶດຕາຽປາກໄປ ຫຼາຽເທື່ອ. ບາດນີ້ມາເປັນແນວນີ້ໄປ, ຜູ້ຊິໃຊ້ຊິແຫນກ່າບໍ່ມີຜູ້ຊິເບິ່ງຊິແຍງກ່າບໍ່ມີຄັນດີນາ, ກັບໄປຫາລູກ ຫາເມັຽກ່າບໍ່ຕ່າງຫຍັງກັບເອົາຜີຕາຽອຶດໄປຂື້ນເຮືອນຂື້ນຊານຫັ້ນ ແລ້ວ. ຊອກບໍ່ມາຫາບໍ່ໄດ້ລູກອຶດເມັຽປາກໂຕເອງພັດໄປນອນແກ່ນດນຢູ່ໃນເຮືອນຫັ້ນ, ມັນໂລດປານຜັງກັບທັງດິບເອົາໂລດ.

– ອ່າວ. ເຈົ້າກ່າໄປຂື້ນທະບຽນຄົນເສັຽອົງຄະຊັ້ນລ່າບໍ, ແລ້ວກ່າຮັບເງິນຄຳນຳກົມປະຊາສົງເຄາະຫັ້ນລ່າບໍ, ຊູໄປຄົດຫຍຸ້ງຄົດຍາກຫລາຽ.

ພໍເວົ້າສຸດຄວາມ, ທ່ານຫມໍພອນສຸກຕ້ອງຕົກສະເງີ້ໄປຍ້ອນສຽງຫົວອັນຜິດປົກກະຕິຂອງຂັນທອງ.

– ຄັນເປັນແນວນັ້ນມັນກ່າແມ່ນສະຫວັນເຫ້ລ່າບໍ ຂ້ານ້ຽ. ແຕ່ໂລກນີ້ມັນພັດບໍ່ເປັນແນວນັ້ນຫັ້ນຕີເບິ່ງແຕ່ພວກທະຫານເສັຽອົງຄະກ່າຍັງໄປຂໍທານຕະພຶດຢູ່, ທ່ານຫມໍກ່າຊິເຫັນດີປານນັ້ນມັນຊິມີໃຜມາເວົ້າຮອດຄົນຂາກຸດຍ້ອນ

ລົດປຽບຄືຂ້ານ້ອຍ, ກົມປະຊາສົງເຄາະນັບກາຍເປັນກົມປະ
ທານສົງເຄາະ ໄປແຕ່ນີ້ນັບຫາກໍເປັນນອນຢູ່ໃນເປືອກພຸ້ນ
ເງິນຂອງກົມນັບບໍ່ປົວໄປຫາມືປະຊາຊົນຈັກເທື່ອດອກ, ມີ
ແຕ່ຫລັ່ງໄປເຂົ້າຖົງປະທານໝົດ.

– ຫື້ງ...ນັບຊິເຖິງຂັ້ນນັ້ນໄດ້ບໍ?

– ທ່ານໝໍໜຸ່ມເວົ້າຢ່າງປຸດໆປ່ອນໆ.

– ຊັ້ນແລ້ວຂ້ານ້ອຍ ດຽວນີ້ອອກຈາກໂຮງໝໍນີ້ໄປຂ້ານ້ອຍ
ກ່າວຕາຍທີ່ນັ້ນແຫລະ ຄັນກັບໄປຫາລູກເມັຍ ລູກເມັຍກ່າວຕາຍ
ນໍາກັນແຕ່ນີ້ຕໍ່ໄປຂ້ານ້ອຍຢູ່ກ່າວຄືຕາຍ, ຮື, ນັບຍັງບໍ່ທໍ່ຕາຍຊ້າ
ບ່າ.

ແມ່ນແທ້ທ່ານໝໍສົດປາລາໂລກໃຫ້ຂ້ານ້ອຍຈັກຫລອດ
ໜຶ່ງກ່າຍັງຊິດີກ່ວາປົວໃຫ້ຂ້ານ້ອຍນັບນີ້ ນັບດີຂຶ້ນແຕ່ພັດ
ແມ່ນນັບມື້ນັບຕາຍໄປ.

– ໂຫ! ທ່ານໝໍໜຸ່ມເວົ້າຢ່າງຄິດນໍາບໍ່ຕົກ.

– ຄັນຊັ້ນຂ້ອຍຊ່ວຍເຈົ້າແຕ່ພັດແມ່ນຂ້າເຈົ້າຊ້າລ່າບໍ?

– ກ່າບໍ່ວ່າແນວນັ້ນ ຂ້ານ້ອຍກ່າຮູ້ບຸນຮູ້ຄຸນທ່ານໝໍຢູ່
ແຕ່ວ່າເລື່ອງສ່ວນຕົວຂ້ານ້ອຍມັນເປັນແນວນັ້ນແທ້. ດຽວນີ້
ຂ້ານ້ອຍຢ້ານແຕ່ຊິດີຄືນທີ່ສຸດ ຄັນແມ່ນນັບມື້ນັບເຈັບໜັກ

ລົງແລ້ວກາງແພວສາ. ກ່າບັງເປັນແວ່ບຸນແດ່.

– ຫື້ ຄືນາຊິພິລຶກແທ້ອັນໂລກນີ້ກ່າວາງ:

– ຜູ້ເປັນແພດທັງເວົ້າທັງກັດແຂ້ວດັງກອດໆ.

– ໄດ້ແລ້ວ, ເຈົ້າປ່າດິດອຸກຫລາຍ ຂ້ຽຊິສະເຫນີເຈົ້າໃຫ້ກິນປະຊາສົງເຄາະຮູ້ເບິງ, ແລ້ວຊິເປັນແນວໃດຈຶ່ງແກ້ໄປຕາມຫລັງດຽວນີ້ໃຫ້ອົດທົນປູ່ປິ່ນປົວໄປສາກ່ອນ, ຄິດຫລາຍມັນບານດີໃດ.

– ໂດຍ, ຂອບໃຈທ່ານຫມໍແລ້ວຂ້ານ້ຽແຕ່ປາງໃດໄດ້ຊິວິດຂ້ານ້ຽກ່າຫມົດໄປແຕ່ເວລາຂ້ານ້ຽນອນສະຫລົບປູ່ແຄມທາງພຸ້ນ, ອາ! ບໍ່ແຕ່ຫວ່າງຕີນລົດຄັນບັ້ນຢຽບເອົາຂາ ຂ້ານ້ຽພຸ້ນ ດຽວນີ້ຄວາມຕາຍອັນໃຜໆ ກ່າປ້ານຫັ້ນແມ່ນສິງປາດຖະນາອັນສູງສຸດຂອງຂ້ານ້ຽ.

– ...ຮື...ທ່ານຫມໍຫັນໃຈໃຫ່ຍບາດຫນຶ່ງອີກແລ້ວຖອດເອົາປາມາສູບ, ພ້ອມທັງຍື່ນໃຫ້ຂັນທອງກອກຫນຶ່ງຄວາມມິດງຽບໄດ້ກ້າວເຂົ້າມາກວມເອົາບຸກຄົນທັງສອງເທິກ່າລັງພົ້ນຄວັນປາຂຶ້ນກ້ຽວກັບປະສານເຂົ້າກັບປູ່ດໍ່ຫນ້າ ແລະເທິງຫົວຂອງເຂົາເຈົ້າຄົນເຈັບຄ່ຽງ ແຫງນຫນ້າຂຶ້ນແລ້ວເວົ້າດ້ວຍສຽງທຸ່ນທ່ຽງຄືນມາແດ່:

– ນ່ຊິຄ່ຳແລ້ວຂ້ານ້ອຍ ເຊີນທ່ານຫມໍເມືອພັກຜ່ອນສາ ຂ້ານ້ອຍຊິລອງຢູ່ໄປເບິ່ງຊັ້ນແຫລະ.

ພອນສຸກບິກແຂນຊ້າຍທີ່ຄີບກອກປາຢູ່ນັ້ນຂຶ້ນມາເບິ່ງໂມງ : ເຂັ້ມໃຫຍ່ທັງສອງພ້ອມກັນເບົ່ງຊື່ອອກເປັນຄືເຂັມດຽວທີ່ມີສົ້ນທັງສອງເບື້ອງຊີ້ໃສ່ເລກສິບສອງ ແລະ ເລກຫົກ, ລາວຄ່ອຍໆລຸກຂຶ້ນແລ້ວກົ້ມຫົວຢ່າງບາດຫນັກໆ ໄປຫາເຮືອນໄວ້ລິດໂດຍບໍ່ສັ່ງບໍ່ລາຫຍັງຈັກຄວາມ.

x x

x

ຕອນເຊົ້າຂອງວັນໃຫມ່ ນາງແພດຊ່ວຍວຽກຜູ້ຫນຶ່ງໃນໂຮງຫມໍສ່ວນຕົວ ໄດ້ຮັບໂທລະສັບຂອງທ່ານຫມໍຫນຸ່ມຜູ້ເປັນເຈົ້າຂອງ ບອກວ່າ ຕອນແລງຈຶ່ງຈະ ໄປເຮັດວຽກຢູ່ໂຮງຫມໍຫັ້ນ. ນັ້ນກໍຍ້ອນແປດໂມງເຊົ້າວັນນັ້ນ, ພອນ ສຸກໄດ້ມີ ຫນ້າຢູ່ຫ້ອງວ່າການຂອງກົມປະຊາສົງເຄາະ. ລາວໄດ້ເຮັດການສິ່ງທີ່ໄດ້ກະໄວ້ໃນຄືນຜ່ານມາ: ສະເຫນີຕົວຂັບຫອງໃຫ້ກົມຮັບເບິ່ງແຍງ ໃນເວລາຄົນເຈັບຜູ້ນັ້ນອອກໂຮງຫມໍໄປຫລັງຈາກຟັງເລື່ອງລາວຢ່າງຖີ່ຖ້ວນແລ້ວ, ຜູ້ວ່າການຂອງກົມຄ່ອຍໆຖອດກອກ "ຊີກາ" ບັກໃຫຍ່ອອກຈາກ

ປາກທີ່ເປັນຄືຮຽມີດປາດບາດເບື້ອງເບື້ອງຢູ່ເທິງໃບຫນ້າອັນເຄັ່ງຂຶມໄປດ້ວຍນ້ຳມັນ ທີ່ຖືກຣັດໄວ້ຢູ່ໃຕ້ ຫລືບຫນັງ ຊີງບາງໆ ຫັ້ນ, ແລ້ວຕອບດ້ວຍວາດເສີ້ຽງ:

ເອີ! ປົວໃຫ້ລ້າໆຊັ້ນກ່າດີແລ້ວ ແຕ່ທ່ານຫມໍກ່າຄືຊິຮູ້ແລ້ວວ່ານັ້ນເປັນເລື່ອງທຳມະດາໄປໃນບ້ານເຮົາທຸກມື້ນີ້ຄົນຜູ້ໃດຖືກລົດຢຽບກ່າເອົາມາຊຸກໃສ່ກົມປະຊາສົງເຄາະຫມົດມັນຊິເຮັດແນວໃດລ້ຽງຫລ້ອນ, ອີກຢ່າງຫນຶ່ງຄົນເຈັບຂອງທ່ານຊ້າບໍ່ຂຶ້ນກັບບໍລິສັດປະກັນໄພໃດໆ. ບໍ່ແມ່ນອົງການໃດໂຮງງານໃດສົ່ງໄປປົວ, ສະນັ້ນບໍ່ມີໃຜຮັບປະກັນວ່າ ນັ້ນແມ່ນຄົນເປັນແນວໃດແທ້. ດີບໍ່ດີໄປຮັບຄົນພວກແນວລາວມາລ້ຽງກ່າບໍ່ຮູ້.

– ໂຫ, ມັນຊິເປັນປານນັ້ນບໍ?

– ພອນສຸກຖຽງຄືນດ້ວຍທ່າທີຫມິ່ນປະຫມາດ.

– ເຂົາ ທຸກ ຍາກ ມັນກ່າບໍ່ຂຶ້ນກັບບໍລິສັດໃດໄດ້ລ່າບໍ. ເຂົາພັດບໍ່ມີຜູ້ຊ່ວຍຜູ້ຊູແລ້ວຊິເຮັດແນວໃດ ນີ້ ອົງ ການ ອົງງານໃດສົ່ງໄປປິ່ນໄປປົວໄດ້ແກ່ຜູ້ທຽວໄປຢາມເຂົາຢູ່ໂຮງໝໍກ່າບໍ່ມີຊ້ຳຫນ່າ.

– ລາວຢຸດຢູ່ຫນ້ຽງຫນຶ່ງ, ກືນນ້ຳລາຍ ດ້ວຍຄວາມຄັ່ງ

ແຄ້ນແລ້ວຈຶ່ງເວົ້າວ່າ:

– ອັນເລື່ອງແບບລາວຫັ້ນມັນກໍ່ແຮ່ງໄກລະບໍ.

ເຂົາມີບັດປະຈຳຕົວ, ມີກາຂອງເຈົ້າໜ້າທີ່ປູ່ຄັກແນ່ ມີທັງຊື່ສຽງ, ບ້ານເກີດເມືອງນອນຂອງເຂົາຄັກແນ່.

– ໂອຽ! ແບບໃດກໍ່ສ່ຳນັ້ນຫັ້ນແລ້ວ.

– ເພີ່ນຜູ້ຕຸ້ງດີພີຫນຳ ທີ່ນັ່ງຢູ່ຕັ່ງນວມທາງຟາກໂຕະເບື້ອງນັ້ນທັງເວົ້າທັງເບະຮິມປາກຫົວເຣ່ງ ບາດໜຶ່ງ,ປະໃຫ້ເຫັນແຂ້ວເຂື້ອງງບ້ອນຄ້ວນປາຊ້ອນຈີມກັບປູ່ເບື້ອງໃນ.

– ຄົນແບບບໍ່ມີຫົວຕີນປາງນອນແບບນັ້ນ ມັນກໍ່ຕັ້ງຍາກແລ້ວ, ອັນນີ້ກໍ່ບໍ່ຈັກຊິແກ້ແບບໃດດອກ ມັນບໍ່ແມ່ນໜ້າທີ່ກົມໃດ.

– ຂ້າພະເຈົ້າເຊື່ອວ່າ ນີ້ແມ່ນກົມປະຊາສົງເຄາະຊັ້ນດອກ, ຄັນບໍ່ ກໍ່ບໍ່ມາຫາໃຫ້ມັນເສັຽເວລາດອກ.

– ພອນສຸກເວົ້າດ້ວຍສຽງຂົມຂື່ນ.

– ເອີ! ກໍ່ກົມປະຊາສົງເຄາະຫັ້ນແລ້ວ ແຕ່ບໍ່ແມ່ນສຳຫລັບໄວ້ລ້ຽງຜູ້ເປັນແບບຄົນ:ຈັບຂອງທ່ານຫັ້ນ, ອີກຢ່າງໜຶ່ງຄົນຜູ້ນັ້ນກໍເຂົ້າໃຈຍາກຢູ່ ຂ້າພະເຈົ້າເຫັນວ່າທາງທີ່ດີແລ້ວທ່ານຄວນສະເໜີໃຫ້ທາງເຈົ້າໜ້າທີ່ສືບ

ສວນເບິ່ງຄັກແນ່, ຄັນວ່າແມ່ນຄົນດີແທ້ກ່າໃຫ້ເຂົາສົ່ງຄືນ ເມືອບ້ານເມືອເຮືອນໃຫ້. ຄັນບໍ່ ມັນຍັງຊິຍາກໃສ່ທ່ານໄດ ພອນສຸກຮູ້ສຶກຮ້ອນຫນ້າຮ້ອນຕາຂຶ້ນ ຄືຖືກຕົບຫນ້າຈົນ ຫນັກແຮງ.

ລາວອົດກັ້ນຄວາມຮ້າງໄວ້; ພະຍາຍາມເວົ້າເທື່ອລະ ຄວາມດ້ວຍສຽງຫນັກໆ:

- ໂອ່! ຄັນຊັ້ນປານນີ້ຂ້າພະເຈົ້າຈຶ່ງເຂົ້າໃຈຄັກ.

ລາວລຸກຂຶ້ນຫຍັບອອກຈາກຕັ່ງ ແລະ ເວົ້າຕໍ່:

- ຂ້າພະເຈົ້າຍັງມົວງຸກຫລາຍແນວຊັ້ນແຫລະຮູ້ແນວ ນີ້ ກ່າ ດີ ແລ້ວ. ສ່ວນເລື່ອງເງິນເຈົ້າຫນ້າທີ່ນັ້ນເຫັນວ່າບໍ່ ຕ້ອງການດອກ. ຂໍລາກ່ອນແຫລະ!

ລາວຈັບມືທີ່ຕຸ້ງອຸ້ງລຸ້ງຈົນນີ້ວມືຄື ວ່າພອງຂຶ້ນຂອງຜູ້ ວ່າການກົມປະຊາສົງເຄາະແລ້ວ ຫັນຫລັງຍ່າງຊື່ອອກໄປ ດ້ວຍບາດຕີນສີຫັນໆ.

x x

x

ຄ່ຳມື້ນັ້ນ; ເວລາສິບເອັດໂມງປາງຫນັ່ງຫນຶ່ງຄົນໃຊ້ໃນ ເຮືອນເຄາະປະຕູຫ້ອງພອນສຸກເປັນບາດຟ້າວໆ ແລະ ໃຫ້ ຮູ້ວ່າມີໂທລະສັບຮ້ອງທ່ານໄປໂຮງຫມໍດ່ວນ, ມີເຫດເກີດ

ຂຶ້ນປູ່ຫັ້ນ ລາວຟ້າວນຸ່ງເຄື່ອງ ແລ້ວລົງເຮືອນຂັບລົດພຸ່ງ
ອອກຈາກເດີ່ນບ້ານໄປ...

ຈົນຮອດສີໂມງເຊົ້າຂອງວັນໃຫມ່ ພອນ ສຸກ ຈຶ່ງ ກັບ ເມື່ອຮອດເຮືອນດ້ວຍທ່າທີຫງ່ອມເຫງົາ ທີ່ບໍ່ເຄີຍມີມາກ່ອນເລີຍ ລາວເຂົ້າໄປໃນຫ້ອງນອນ ອັດປະຕູ ແລະ ໃສ່ໄລຄັກແນ່ແລ້ວໄປນັ່ງຫມູບຫນ້າລົງໃສ່ໂຕະ : ຄືນຜ່ານມານັ້ນ, ຂັນທອງໄດ້ຂ້າຕົນເອງຕາຍເສຍແລ້ວ. ທ່ານຫມໍຫນຸ່ມຮູ້ສຶກອຸກອັ່ງຄັ່ງແຄ້ນຈົນຕັ້ງສະຕິບໍ່ທ່ຽງໄດ້ ລາວຄິດອີ່ຕົນຂັນທອງ, ຄິດເສຍດາຍຄວາມເອົາໃຈໃສ່ ຂອງຕົນ ໃນເວລາຜ່ານມາ ຄິດກິນແຫນງ ເພາະແລງວານນີ້ ໄດ້ເລົ່າເລື່ອງໄປກິນປະຊາສັງເກາະໃຫ້ຂັນທອງຟັງ. ສິ່ງທີ່ພາໃຫ້ລາວອຸກອັ່ງກ່ວາເພີ່ນຫມົດ ແມ່ນຄວາມຕາຍຂອງຂັນທອງ ໄດ້ພາໃຫ້ລາວຮູ້ສຶກຜິດຫວັງຢ່າງແທ້ຈິງເປັນເທື່ອທຳອິດຕໍ່ອຸດົມຄະຕິຂອງລາວເອງ.

– ໂທ! ໂລກອັນນີ້ເນາະ.

– ລາວພຶມພຳ ຂຶ້ນແຮງສົມຄວນແລ້ວລຸກອອກຈາກຕັ່ງໄປຢືນຢູ່ແປະປ່ອງຢ້ຽມແກ້ວ. ປູ່ລຸ່ມພຸ້ນ ລົດແມກເຊີແດັດສີດຳຄັນຫນຶ່ງແລ່ນພຸ່ງຫນ້າໄປຢ່າງຟ້າວຟັ່ງ,ປະໃຫ້

ເກີດມີຂີ້ຝຸ່ນກຸ້ມຂຶ້ນຕາມຫລັງ ຈົນພາໃຫ້ເຮືອນຊານຮ້ານຕຶກ ແລະ ຜູ້ຄົນຫງວງຫາງແຖບນັ້ນ ຕ້ອງຖືກເປິເປື້ອນໄປຍ້ອນ.

– "ຣື, ແມກເຊີແດັດພວກຮ່ານນັ້ນອີກບໍ່ຈັກ. ຜີເຜດມັນນີ້" ພອນສຸກທັງຄິດທັງຫລຽວນຳລົດຄັນນັ້ນໄປຄາວໜຶ່ງ. ລາວຫັນໃຈໃຫ່ຍບາດໜຶ່ງ ແລ້ວກັບມານັ່ງມິດຢູ່ບ່ອນເກົ່າ, ເອົາມືທັງສອງເບື້ອງມາຄ້ຳແກ້ມໄວ້ແລະຄິດຄືນເລື່ອງທີ່ເກີດຂຶ້ນກ່ອນນັ້ນຫົກເດືອນ :

...ມື້ນັ້ນ, ກໍ່ຄືທຸກໆມື້ທີ່ເຄີຍຜ່ານມາຫລັງຈາກທີ່ຫມົດໂມງເຮັດວຽກຕອນເຊົ້າແລ້ວ, ທ່ານຫມໍພອນສຸກກໍ່ຂັບລົດກັບເມືອເຮືອນຕາມຖະໜົນວຽງຈັນທີ່ກວ້າງຂວາງນັ້ນ,ລົດຂອງລາວໄດ້ສວນສົນກັນກັບລົດຄັນອື່ນໆ ທີ່ກຳລັງຫລັ່ງກັນໄປ ເປັນຫນ້າອອນຊອນນຳ ແຕ່ພໍໄປຮອດ ໃກ້ສີ່ແຍກບ່ອນຫນຶ່ງ ປະມານຮ້ຽຫລາ, ລາວຕ້ອງຟ້າວຢຽບເຄື່ອງຫ້າມດ້ວຍຄວາມຕົກໃຈລົດຄັນທາງຫນ້າບຸດຢ່າງບໍ່ຊີ້ບ່ານກ່ອນ ເຫັນມີເລື່ອງຜິດປົກກະຕິ, ລາວຈຶ່ງນອດຈັກລົດໄວ້ປະພວງມະໄລແລ້ວຫຽບໄປນັ່ງຢູ່ສົ້ນເບື້ອງຂວາປ່ອນ ຫົວອອກສັງເກດເບິ່ງຢູ່ທາງຫນ້າພຸ້ນ, ຕຳຫລວດ ( ທີ່ຢູ່ວຽງ

ຈັບເຖິງເອີ້ນວ່າເຈົ້າຫນ້າທີ່) ສອງຄົນພາກັນແລ່ນໄປຫາ ລົດຄັນຫນຶ່ງທີ່ມີຜູ້ຄົນຫຸ້ມຢູ່ເກືອບຈອດ. ພອນສຸກໄຂຕູ້ລົດ ຍ່າງອອກໄປຫາບ່ອນທີ່ເກີດເຫດ ແລະ ແຫ້ຽໆ ວົງລ້ອມ ເຂົ້າຈອບເບິ່ງ, ຫົວໃຈລາວເຕັ້ນຜິດຈັ່ງຫວະໄປເມື່ອ ຮູບ ພາບອັນຫນ້າສັງເວດໄດ້ປະກົດຢູ່ຕໍ່ຫນ້າຫັ້ນ: ຄົນຜູ້ຫນຶ່ງ ຂ້າວເປັນພໍ່ເຮືອນແລ້ວ, ນຸ່ງເຄື່ອງຮຽບຮ້ຽສົມຄວນ, ກຳລັງ ນອນຟຸບເລືອດຢູ່ກ້ອງລົດແມກເຊີແດັດ ໒໒໑ ສີດຳທີ່ມີຄົນ ອາເມລິກາສີ່ທ່ານນັ່ງຢູ່ທາງໃນ, ຕຳຫລວດລາວສອງຄົນ ທີ່ຕິດອາວຸດ ແລະ ປອກດາວຄັກແນ່ກຳລັງຢືນເບິ່ງບັດປະ ຈຳຕົວຂອງທ່ານຕ່າງປະເທດ ຜູ້ນັ່ງຢູ່ຕັ່ງທາງຫນ້າແປະ ປະຕູເບື້ອງຂວາ, ເພິ່ນຜູ້ນີ້ກຳລັງນັ່ງສູບຢາຢູ່ຢ່າງເສິຽມັ່ງ ຄືສ່ຽວທັງສາມຂອງເພິ່ນໃນລົດຄັນນັ້ນ ປະມານສອງນາທີ ຜ່ານໄປ, ຕຳຫລວດຜູ້ຫນຶ່ງຢືນບັດແຂງໆສີດຳສົ່ງໃຫ້ທ່ານ ຜູ້ເປັນເຈົ້າຂອງມັນ, ແລ້ວພ້ອມຫມູ່ຂອງຕົນຢືນກົງຄຳນັບ ບາດຫນຶ່ງຢ່າງຖືກລະບຽບ. ຫລັງຈາກນັ້ນສ່ຽວຕຳຫລວດ ທັງສອງກໍຟ້າວພາກັນຫັຽບໄປ ກົ້ມລົງດຶງ ເອົາ ຜູ້ ທີ່ ຖືກ ເຄາະຮ້າຍອອກໄປປະໄວ້ແຄມຖະຫນົນ ແລະກົງຫລັງຂອງ ລົດແມກເຊີແດັດນັ້ນກໍ່ຄ່ຽໆ ລົ້ງຜ່ານວັງເລືອດທີ່ກົງ ຫນ້າ

ຂອງມັນສ້າງຂຶ້ນແລ້ວກົງຕໍ່ໄປຕາມຖະໜົນ, ປ່ງໃຫ້ເກີດມີເລືອດແດງເປັນສາຍຕິດຕາມໄປນຳຫລັງ.

ແຕ່ສາຍເລືອດນັ້ນກໍບໍ່ແກ່ຍາວໄປຮອດໃສ່ ບ້ອນຂີ້ຝຸ່ນທີ່ປົກຕາມຖະໜົນວຽງຈັນຢູ່ນັ້ນໄດ້ຫຸ້ມໄປໂອບເອົາກິງທັງສີ່ຂອງລົດຄັນນັ້ນໄວ້ຈົນບໍ່ມີຜູ້ໃດຈະຄິດໄດ້ວ່ານັ້ນແມ່ນລົດ ທີ່ຫາກໍປຽບຄົນມາຖ້າບໍ່ໄດ້ເຫັນເຫດການນັ້ນກັບຕາ.

ທ່ານໜໍພອນສຸກຢືນເບິ່ງຕາມລົດສີດຳຄັນນັ້ນຈົນມັນແວະເຂົ້າຖະໜົນເສັ້ນອື່ນ ແລ້ວຈຶ່ງຍ່າງກັບ ມາ ຫາ ລົດຂອງຕົນ, ລາວຕິດຈັກລົດຂຶ້ນດ້ວຍທ່າທີບໍ່ພໍໃຈປານໃດຫັກພວງມະໄລໄປທາງຂວາແລ້ວກົງລົດທັງສີກໍຄ່ຽງ ແລ່ນໄປປຸດຈົກຢູ່ແຄມຖະໜົນບ່ອນມີຜູ້ຄົນຢືນຫຸ້ມຢູ່ນັ້ນ.

ລາວຂອກຈາກລົດໄປ, ຖອດເອົາບັດປະຈຳຕົວຈາກຖົງຫລັງມາຍື່ນໃຫ້ຕຳຫລວດຜູ້ຢືນພິບຄ້ອນປາປູ່ມໆນັ້ນ, ແລ້ວເວົ້າຫຍັງໜ້ງໜຶ່ງດ້ວຍສຽງບໍ່ແຮງປານໃດ.ຕຳຫລວດຜູ້ນັ້ນ ອ່ານລວດເບິ່ງບັດປະຈຳຕົວຂອງທ່ານໜໍໜຸ່ມ, ແລ້ວຍື່ນສົ່ງຄືນພ້ອມທັງຈັບມືລາວດ້ວຍທ່າທີຂອງຜູ້ໃຊກດີໄດ້ພົ້ນມືພົ້ນຕີນໄປໃນຄາວດຽວ, ລົດສີໜົ່ນໆຂອງພອນສຸກກໍຄ່ຽງ ແລ່ນໄປພາຍໃຕ້ສາຍຕາແປກປະຫລາດຂອງ ຜູ້

ຄົນທີ່ຢືນຈຸ້ມກັນຢູ່ບ່ອນຫາກໍເກີດເຫດ, ລົດຄັນນັ້ນແວະຂວາ,ແວະຂວາອີກເທື່ອຫນຶ່ງແລ້ວມຸ່ງຫນ້າໄປຫາຖະໜົນທີ່ມີໂຮງຫມໍສ່ວນຕົວ ຂອງຜູ້ກຳລັງຈັບພວງມະໄລຢູ່ນັ້ນ. ໃນລົດຄັນນັ້ນ, ຜູ້ຖືກເຄາະຮ້າຍນອນນິດຢູ່ຕັ່ງທາງຫລັງໂດຍບໍ່ຮູ້ກ່ອນເລີຍວ່າຫລັງຈາກນັ້ນພຽງສາມສິບນາທີ ຂາແຄ່ງທັງສອງເບື້ອງ ທີ່ອາບເລືອດໄປນັ້ນ ຈະຖືກຕັດຖິ້ມແລ້ວເຂົາຈະກາຍເປັນຄົນຂາກຸດໄປຈົນເທົ່າສິ້ນຊີວິດ...

ທ່ານຫມໍຫນຸ່ມຫລັບຕາເຂົ້າ ຄືປະກົດລືມຮູບພາບໃນຫ້ອງຜ່າຕັດຂອງລາວໄປ, ໃນນັ້ນ ຂາແຄ່ງທີ່ມຸ່ງໄປທັງສອງເບື້ອງຂອງຂັນທອງ ໄດ້ຖືກຕັດອອກໄປວາງໄວ້ເທິງພານໂລຫະທີ່ປູດ້ວຍແພຂາວສະອາດ.

"ໂທ! ໂຕເປັນຜູ້ຕັດຂາເຂົາ, ໂຕໄປຂ້າເຂົາຊ້ຳແມ່ນແທ້ປະໃຫ້ເຂົາຕາຍຢູ່ແຄມທາງຫັ້ນສາກ່າຊິບໍ່ເຖິງປານນີ້ໂຕໄປປົວຄົນແຕ່ພັດແມ່ນຂ້າຄົນ, ແມ່ນຜູ້ຝັງຄົນທັງດິບ" ຄືຂັນທອງເວົ້າມັ້ນນັ້ນເປັນຫຍັງມາເປັນແນວນີ້?

– ໂທ! ໂລກເບົາຫມັນ, ໂລກຊົ່ວຊ້າ, ໂລກປ່າເຖື່ອນ. ຢາກເຮັດແນວດີກໍກາຍເປັນແນວຊົ່ວ,ຢາກສ້າງບຸນພັດກາຍເປັນສ້າງບາບໂລກນີ້ມັນມາໝຸດຫມັດເອົາແທ້: ຢາກມີຊີ

ວິດປູ່ແຕ່ຈຳເປັນຕ້ອງຕຽງ, ຄັນບໍ່ຕຽງມັນກ່າຊິບໍ່ແລ້ວແທ້ນີ້,ປູ່ກ່າຄືຕຽງຈັກຊິປູ່ກິນຫັງງ... ຂັນທອງ

ລາວຫມູບໜ້າລົງໃສ່ສອງຝາມືທີ່ແປປູ່ເທິງໜ້າໂຕະຫັ້ນ ແລະ ໃນຄາວໜຶ່ງເລີງເງີຽງໜ້າຂຶ້ນໄຂລີ້ນຊັກໂຕະອອກແລ້ວຖອດເອົາຈົດໝາຍສະບັບໜຶ່ງ ປູ່ພົ້ນຕັບຈົດໝາຍບັກໝາງໆອອກມານັ້ນ ແມ່ນຈົດໝາຍ ຂອງຫມູ່ເກົ່າ ທີ່ຮຽນນຳກັນປູ່ຜະລັ່ງ ຊຽນປາກມາກ່ອນທີ່ເຂົາ ຜູ້ນັ້ນ ຈະກັບຄືນປະເທດແຕ່ບໍ່ແມ່ນນາວຽງຈັນນີ້.ໜ້າຜາກຂອງໝໍພອນຫຍຸ້ງເຂົ້າ ຂົນຄິ້ວທັງຄູ່ຂອງລາວກໍ່ຫຍັບເຂົ້າຫາກັນ ແລະ ສຽງຫັນໃຈຂອງລາວກໍ່ຄືວ່າຄ່ຽງໆລົງຊັກໄຊ້ ເມື່ອອ່ານຈົດໝາຍກ້ານນັ້ນ. ໜ້າທີ່ສີ່ຂອງຈົດໝາຍຂຽນວ່າ:

ພອນສຸກ ທີ່ຮັກແພງ, ເຮົາຮູ້ດີວ່າເພື່ອນອາດຈະຍັງບໍ່ທັນເຂົ້າໃຈເຮົາໄດ້ໃນວັນນີ້, ແຕ່ເຮົາຫວັງຕໍ່ສິ່ງນັ້ນໃນວັນຫນ້າ, ອາດຈະມີມື້ຫນຶ່ງໃນຕໍ່ຫນ້ານີ້ເພື່ອນຈະເຫັນ ວ່າເຮົາໄປຕາມທາງທີ່ຖືກ ແລະ ເພື່ອນກໍ່ຈະໄປຕາມທາງເສັ້ນນັ້ນຄືກັນ ຖ້າຄິດໃຫ້ຄັກແນ່ແລ້ວ ເພື່ອນຈະເຫັນວ່າເສັ້ນທາງຊ່ວຍມວນມະນຸດພົ້ນຈາກຄວາມຕຽງທີ່ບໍ່ສົມເຫດສົມຜົນນັ້ນບໍ່ແມ່ນວິຊາແພດ, ແຕ່ຫາກແມ່ນວິຊາຫນຶ່ງ

ອີກທີ່ຍິ່ງໃຫຍ່ກ່ວານັ້ນ, ສັກສິດກ່ວານັ້ນຄື: ເຮັດການປະຕິວັດ. ເວລາໃດເຮົາກໍຫວັງດີຕໍ່ເພື່ອນ ແລະ ເຊື່ອວ່າເພື່ອນບັງຄົງມີອຸດົມຄະຕິທີ່ຫນ້າສັນລະເສີນ. ຈົ່ງຍົກອຸດົມຄະຕິຂອງເພື່ອນຂຶ້ນສູ່ລະດັບສູງຂອງມັນແລ້ວເພື່ອນ ຈະບໍ່ມີຜິດຫວັງໃນຊີວິດ.

ເຮົາຫວັງສະເຫມີວ່າເພື່ອນຈະຄິດຄືນໃຫ້ຄັກແນ່ກ່ວາເກົ່າ ນັບພື້ນຖານສະພາບຕົວຈິງຂອງປະເທດເຮົາ, ແລ້ວຈະເຫັນໄດ້ວ່າ ຄວນດຳເນີນຊີວິດໄປຕາມເສັ້ນທາງໃດຈຶ່ງຈະຖືກຕ້ອງ.

ນ້ອນທ້າງຈົດຫມາຍກ້ານນັ້ນ, ຜູ້ຂຽນຍັງໃຫ້ຮູ້ອີກວ່າເຂົາກັບເມືອປະເທດເທື່ອນີ້ພ້ອມຫມູ່ອີກຫ້າຄົນຊຶ່ງກໍລ້ວນແຕ່ແມ່ນຜູ້ລີ້ງເຄີງກັບພອນສຸກທັງນັ້ນ.

ລາວຈັບຈົດຫມາຍປູ່ໃນມື ແລະ ເຫລືອດຕາເບິ່ງອອກໄປທາງປ່ອງຢ້ຽມ. ແສງສະຫວ່າງຂອງວັນໃຫມ່ໄດ້ເຮັດໃຫ້ທ້ອງຟ້າວຽງຈັນພົ້ນຈາກຄວາມມືດ ມົນ ຂອງ ຄືນ ທີ່ຜ່ານມາລົດແມກເຊີແດດສີດຳຄັນຫນຶ່ງ ແລ່ນກາງໄປຢ່າງຟ້າວຟັ່ງປູ່ລຸ່ມພຸ້ນ ແລ້ວຂີ້ຝຸ່ນວຽງຈັນກໍຫຸ້ມກັນເປັນກຸ່ມ…ຕາມໄປເຮັດໃຫ້ເຮືອນຊານຮ້ານຕຶກ ແລະ ຜູ້ຄົນແຄບ

ນັ້ນຕ້ອງເປີເປື້ອນໄປນ້ອນ.

ພອນສຸກ " ຣີ " ບໍາລິດຄັນນັ້ນບາດຫນຶ່ງ ແລ້ວເງີຽຫນ້າຂຶ້ນ, ສົ່ງແສງຕາເບິ່ງຊື່ໄປທາງໄກໆ ພຸ້ນ; ບ່ອນທັ້ນແສງຕາເວັນກໍາລັງພຸ່ງອອກມາ ແລະ ຈະຄ່ຽສົ່ງແສງສະຫວ່າງຂອງມັນໄປຮອດທຸກຈອກທຸກແຈ, ແລ້ວວຽງຈັນນີ້ກໍຈະໄດ້ເຮືອງຮຸ່ງຂຶ້ນຢູ່ພາຍໃຕ້ຕາເວັນດວງນັ້ນ. ທ່ານຫນໍຫນຸ່ມໄຂປ່ອງຢ້ຽມວາມືອອກກ້ວາງໆ ແລ້ວທັນໃຈບາດບາວເອົາອາກາດອັນສົດໃສ ຂອງວັນໃຫມ່ທີ່ຫລັ່ງກັບເຂົ້າມາໃນຫ້ອງນອນອັນຫນຸດຫນັດໃຈຂອງລາວ ໃນຫວ່າງກີ້ນີ້.

# ນ້ຳຕາຊາວອົບພະຍົບ

ໂດຽ: ບັນດິດ

ໃນປິຕຸພູມອັນແສນຮັກ ຂອງພວກເຮົານີ້ ມີຫລາຽຮ້ຽຫລາຽພັນຄອບຄົວທີ່ໄດ້ຮັບນາມປ່າງໆ ບ້າງອາດວ່າເປັນ "ຊາວອົບພະຍົບຫລົບໄພ" ແນ່ນອນແລ້ວບັນດາຄອບຄົວຫລືບຸກຄົນທີ່ໄດ້ຮັບນາມໃຫມ່ນີ້ ຍ່ອມຈະມີການຜັນແປໃນຊີວິດຕັ້ງຮ້ຽແປດພັນປະການ, ສົງຄາມໄດ້ບັງຄັບໃຫ້ຊີວິດຂອງພວກເຂົາເຈົ້າຈຳຕ້ອງກາຽເປັນຄົນພັດເຊພະເນຈອນທີ່ສິ້ນເນື້ອປະດາຕົວເຂົ້າຂາດແລງແກງຂາດໝໍ້ຫາເຊົ້າກິນຄ່ຳມືອູ້ມໜ້າບ່າເຈັ່ງຫລັງ, ຟາງນ້ຳຕາອົບພະຍົບຄອບຄົວໄປອາໄສຢູ່ໃນແດນນາຣົກເມືອງຄົນທີ່ບໍ່ເພິງປາດຖະໜາ.

ຄອບຄົວລຸງປໍ ກໍແມ່ນຄອບຄົວໜຶ່ງທີ່ຕົກຢູ່ໃນກໍລະນີແບບນີ້ລະ! "ຄ້າງອົບພະຍົບຫລົບໄພ" ບ້ານ "ກ" ເຂດ

ທ່າງ່ອນໄດ້ເປັນບ່ອນເລີ່ມຕົ້ນ ຊີວິດອັນລຳບາກຍາກແຄ້ນຂອງຄອບຄົວເຂົາ ມາຣອດດຽວນີ້ຄື ຈັ່ງວ່າກະທ່ອມນ້ອຍທີ່ຄອບຄົວລຸງປໍອາໄສຢູ່ອ່າວສີໃຫຍ່ໆ ຂຶ້ນແດ່, ຄົນໃນຄອບຄົວ ແລະ ຊາວບ້ານຕ່າງກໍບໍ່ໄດ້ໃຫ້ຄວາມສົນໃຈໃນການປ່ຽນແປງຈັກເລັກນ້ອຍຄື ແນວນີ້ກໍຍ້ອນວ່າກະທ່ອມນ້ອຍ ໄດ້ຊູດເນື້ອເຖືອໜັງລຸງປໍໄປກິນເກືອບຈະໝົດແລ້ວ. ມີຫລາຍເທື່ອໃນຄວາມພະຍາຍາມສ້ອມແປງກະທ່ອມນ້ອຍຫລັງນີ້ ລຸງປໍກໍເປັນໄຂ້ເປັນເຈັບ ແຕ່ລຸງຍັງຕ້ອງໄດ້ສູ້ທົນກັບຄວາມອຶດຫິວອີກ, ລູກ ແລະ ເມັຽຂອງລຸງປໍໄດ້ອ້ອນວອນໃຫ້ລຸງພັກຜ່ອນ ແຕ່ລຸງກໍບໍ່ຍອມປະຕິບັດຕາມ, ລຸງຄຶດວ່າຖ້າຊັກຊ້າໄປມື້ໜຶ່ງຄອບຄົວຂອງລຸງປໍກໍຍັງຈະຕ້ອງສູ້ທົນ ຢູ່ກັບແດດ ແລະຝົນໄປອີກມື້ໜຶ່ງ,ບາດເຖິງຍາມຝົນລົງມາແລ້ວຈະໃຫ້ລູກເມັຽໄປອາໄສຢູ່ໃສຢູ່ກ້ອງລ່າງຂອງໃຜ ? ລຸງປໍຈື່ຈຳພາບຂອງຕອນແລງວັນໜຶ່ງໄດ້ດີ ວັນນັ້ນກໍແມ່ນ ວັນທີ່ຊາວພວນພວກລຸງ ໄດ້ອົບອະຍົບລົງມາຮອດຄ້າງ ອົບພະຍົບບ້ານ " ກ " ເປັນມື້ທຳອິດນັ້ນລະ ! ໃນຕອນແລງຂອງວັນນັ້ນຊາວບ້ານຕ່າງກໍຍັງ ບໍ່ທັນໄດ້ກິນແລງໝົດຊ້ຳ ຝົນຫ່າໃຫຍ່ກໍໄດ້ຫຸ້ມເທລົງມາໂດຍແຮງຈົນເຮັດໃຫ້ວູບຂອງ ຊາວ

ອົບພະຍົບທີມຸງດ້ວຍແພປາງ ແລະ ໃບຕອງປຸກປາງກັບ ຢູ່ນັ້ນເພພັງໝົດ ສຽງເນື້ອງນັນຂອງຊາວບ້ານກໍໄດ້ຟົດສະ ໜັ້ນຂຶ້ນປານສຽງຂຽດຮ້ອງມີຫລາຍຄອບຄົວໄດ້ຫອບເຄື່ອງ ຂອງໄປອາໄສຢູ່ນຳກ້ອງລ່າງເຮືອນຂອງຊາວບ້ານທີ່ຢູ່ໃກ້ໆ ຫັ້ນມີຫລາຍເຮືອນເຂົາເຈົ້າກໍເອົາໃຈໃສ່ເຫ້ຜູ້ເພິ່ນມີມະນຸດ ສະທຳແດ່ເພິ່ນກໍໄດ້ເອີ້ນເອົາເດັກນ້ຽຫລື ແມ່ລູກອ່ອນຂຶ້ນ ຢູ່ເຮືອນຂອງເຂົາຫລືບາງທີ່ຜູ້ເພິ່ນມີເຮືອນກ້ວາງແດ່ ເພິ່ນ ກໍຮັບເອົາຕັ້ງ ໒-໓ ຄອບຄົວແຕ່ຍັງມີຄອບຄົວເຈົ້າຂຸນມຸນ ບາງຢູ່ບໍ່ນ້ຽທີ່ໜ້າລັງກຽດ ພວກເຂົາໄດ້ຖື ຊາວອົບພະຍົບ ຕ່ຳກວ່າຊີວິດຂອງສັດລ້ຽງເຂົາຊ້ຳ, ເຂົາບໍ່ຍອມໃຫ້ຊາວອົບ ພະຍົບໄປອາໄສຢູ່ກ້ອງລ່າງໂດຍອ້າງເຫດຜົນວ່າ " ໄກ່ຈະ ບໍ່ເຂົ້າຄອກ" ນັ້ນຈະເປື້ອງນັ້ນ ແລະ ອື່ນໆ ອີກ...ລຸງປຸ່ບໍ່ ຍອມໃຫ້ນາບເຫລົ່ານີ້ເກີດມາສູ່ຄອບຄົວ ຂອງຕົນເປັນຄັ້ງ ທີ ໒ ອີກສະນັ້ນລຸງຈຶ່ງຍອມທົນຕໍ່ອຸປະສັກທຸກສິ່ງທຸກຢ່າງ ເພື່ອຄ່ຽງ ປົດເປື້ອງຄວາມທຸກຈົນອອກຈາກຄອບຄົວຂອງ ເພິ່ນ, ມີຫລາຍເທື່ອລຸງປໍ່ໄດ້ຫາຫນໍ່ໄມ້ ແລະ ຜັກບາງ ຕ່າງໆ ເປັນອາຫານສຳລັບລ້ຽງຊີບ, ເພິ່ນໄດ້ປະຕິເສດບໍ່ ຮັບເອົາເຂົ້າແກງຖ້ວຍນ້ຽງ ທີ່ລູກ ແລະ ເມັຽຕົກແຕ່ງໃຫ້,

ລຸງປໍເຄີຍເວົ້ານຳເມັຍເລື້ອຍໆ ວ່າ :

ເງິນທີ່ຍັງເຫລືອບໍ່ພໍເທົ່າໃດຮ້ຽນນັ້ນ ໄປຊອກຫາຊື້ເຂົ້າມາໄດ້ດ້າມເລັກນ້ຽກໍຄວນປະຫຍັດໄວ້ ໃຫ້ລູກກິນສ່ວນຍັງມືຫັງງກໍກິນໄປ !

ວັນເວລາໄດ້ໝູນວຽນໄປໂວປານລົມພັດ ແຕ່ໃນແຕ່ລະວິນາທີແຫ່ງການໝູນວຽນປ່ຽນໄປຂອງເວລານັ້ນເໝືອນກັບວ່າມັນໄດ້ຈ່ອງດຶງເອົາໂຊກຊາຕາກຳ ແຫ່ງຄວາມທຸກຈົນຂອງຄອບຄົວລຸງປໍ ໃຫ້ໜັກລົງຊຸກໄຊ້ ຊັບສົມບັດທີ່ຍັງເຫລືອຢູ່ບາງເລັກນ້ຽ ກໍໄດ້ຈັບຈ່າງຂາງກິນໝົດແລ້ວຈະອາໄສກຳການຊ່ວຍເຫລືອຂອງ "ລັດຖະບານ" ກໍພໍສຳນັ້ນແຫລ້ວຈະມີຫັງງ ພໍຈະມາຊົດຊ່ວຍເອົາຊີວິດຂອງຄອບຄົວລຸງປໍໄວ້ຕໍ່ໄປອີກ. ບ້ອນຄວາມຫິວໂຫຍ ແລະເຮັດວຽກເຫລືອບ່າກ່ວາແຮງໂພດນາຣອວມັ້ນຮ່າງກາຍຂອງລຸງປໍ ທີ່ງູ້ຍອຸ່ຍລຸ່ຍຊຶ່ງຜູ້ຄົນທັງຫລາຍເຄີຍເອີ້ນເພິ່ນວ່າ "ພໍ່ເຖົ້າງູ້ຍ" ນັ້ນກໍຈ່ອຍຜອມລົງປານຂຍດຢ້າງ. ລຸງປໍຮູ້ດີວ່າມື້ນີ້ເພິ່ນພໍສຳນີ້, ມື້ໜ້າເພິ່ນອາດຈະແຫ້ງກະແດ້ງກ່ວານີ້, ແຕ່ລຸງກໍຍັງດີໃຈເພາະເພິ່ນຍັງຄິດເຖິງລູກຄິດເຖິງນາງໄພສອນຄິດເຖິງບັກຫລ້າແດງ ແລະ ໂດຍສະເພາະກໍແມ່ນຄິດເຖິງນາງບົວ

2/VII
ຫ້າມຈຳໜ່າຍ

ພອນທີ່ພວມມີຊີວິດຕໍ່ສູ້ຢູ່ທາງເມືອງພວນພຸ້ນ ! ພວກ
ລູກເຫລົ່ານີ້ຈະແກ້ແຄ້ນແທນພໍ່, ພວກເຂົາມີອານາຄົດ,
ອານາຄົດອັນສວຍງາມ ຂອງປະເທດລ້ານຊ້າງ ຍັງລໍຄອຍ
ພວກເຂົາຢູ່.

x x

x

ສາຍລົມອ່ອນໆ ໃນຍາມເຊົ້າໂຊຍພັດມາເປັນຮູດໆ
ຕ້ອງກັບຊາຍຄາຫ້າວທຳໃຫ້ເກີດສຽງດັ່ງແຊດ...ໆ... ມ່ານ
ນ້ຳໝອກອັນດົກໜາ ໄດ້ປົກຄຸມໄປທົ່ວທົ່ງພຽງ ວຽງຈັນ
ເປັນຫລືບໆ. ສວາຍສົມຄວນດວງຕາເວັນສີແດງຈຶ່ງຄ່ອຍໆ
ໂຜ່ຂຶ້ນແນບສະໜິດຢູ່ກັບຂອບຟ້າສີຄາມ ທາງທິດບູລະ
ພາແຜ່ແສງລັດສະໝີຜ່ານເມກໝອກ ລົງມາສູ່ພູມີພາກ
ເປັນສີມ່ວງ, ມັນໄດ້ເປັນສັນຍາລັກເຕືອນວ່າລະດູໜາວໄກ້
ຈະໝູນວຽນມາເຖິງອີກຄັ້ງໜຶ່ງແລ້ວ, ໃນຍາມນີ້ຕາມປົກ
ກະຕິແມ່ນຍາມທີ່ ຊາວນາເມືອງພວນມີຄວາມສຸກທີ່ສຸດ
ພວກພໍ່ເຖົ້າແມ່ນາຍພວກບ່າວນາງສາວ ຕ່າງກໍໄດ້ມີໂອ
ກາດທ້າທາຍກັນທຳການເກັບກ່ຽວເຂົ້າ ໃນທ່າມກາງແສງ
ແດດອ່ອນຢູ່ທົ່ງນາອັນມະຫາສານ ດ້ວຍຄວາມເບີກບານ

ມ່ວນຊື່ນຮອດຍາມຕາເວັນລົງແລງ  ນາພວກຜູ້ບ່າວບາງສາວກໍໄດ້ເກາະແຂນກັບຍ່າງທ່ຽວຊົມທຳມະຊາດທົ່ງພຽງປູ່ກ້ອງຣິມແປກຫລື  ບາງພ່ອງກໍພ້ອມພາກັນຍ່າງທ່ຽວຊົມສວນໝາກກ້ຽງ ໝາກຈອງ ທີ່ກຳລັງເປັ່ງ ອະນຸພາບແຫ່ງຄວາມຫວານ  ຊຶ່ງບຳຜົນມາສູ່ຊາວຜູ້ອອກແຮງງານເມືອງພວນ ດ້ວຍຄວາມອອນຊອນຈິດ,  ພາບເຫລົ່ານັ້ນແມ່ນວິນຍານອັນມີຊີວິດຊີວາທີ່ໄດ້ລໍ່ລ້ຽງຊີວິດ ແລະ ຈິດໃຈຂອງຊາວເມືອງພວນ ໃຫ້ມີຄວາມຮັກຊາດ ຮັກພູມລຳເນົາຂອງຕົນມາຕັ້ງແຕ່ດຶກດຳບັນພຸ້ນ !  ແຕ່ມາບັດນີ້ ແມ່ນໃຜບໍ່ມາເຮັດໃຫ້ທົ່ງພຽງ ເມືອງພວນມີຄວາມງຽບເຫງົາ ?  ແມ່ນໃຜບໍ  ນາກໍ່ກຳທຳເວນ  ໃຫ້ຊາວເມືອງພວນໄດ້ຮັບຄວາມທຸກຍາກຫນາກແຄ້ນເຄືອງພຽງນີ້ !. .

ລຸງປໍ່ສຳນຶກໃນໃຈແລ້ວກໍຕອບຕົນເອງວ່າ :

– ບໍ່ ... ບໍ່ແມ່ນດອກທົ່ງພຽງເມືອງພວນຍັງບໍ່ຫັນງຽບ, ຕົ້ນເຂົ້າຕົ້ນໝາກກ້ຽງ ໝາກຈອງ ໝາກຄາງ ແລະ ຜົນລະປູກອື່ນໆ  ກໍຍັງຄົງປົ່ງໜໍ່ອອກໃບຂຽວອຸ່ມທຸ່ມປະດັບທົ່ງພຽງເມືອງພວນໃຫ້ສວຽງາມປູ່ຄືເກົ່າ,  ແນ່ນອນດ້ວຍນ້ຳມື ຂອງພວກເຜັດຊະຄາດ ບ້າເລືອດກະຫາຍສົງ

ຄາມ, ທຳມະຊາດເມືອງພວນສ່ວນໜຶ່ງອາດຈະຖືກທຳລາຍ, ຊາວເມືອງພວນຈຳນວນໜຶ່ງອາດຈະສິ້ນຊີວິດໄປ ຫລື ອາດຈະຕົກທຸກໄດ້ຍາກກໍດີ ສູ້ມັ້ນ ລະ !

ແຕ່ເດັດຂາດມັນບໍ່ສາມາດຈະມາທຳລາຍ ຈິດ ໃຈ ຮັກຊາດຮັກບ້ານເກີດເມືອງນອນ ຂອງປະຊາຊົນຊາວເມືອງພວນໃຫ້ສູນເສັຽໄປໄດ້, ຊາວເມືອງພວນຍັງເປັນໝື່ນເປັນແສນໄດ້ອຸທິດ ແລະພວມສືບຕໍ່ອຸທິດຕົນເພື່ອການຕໍ່ສູ້ຢູ່ຕໍ່ໄປກວາດລ້າງພວກຂາຍຊາດເຮັດໃຫ້ແຜ່ນດິນ ເມືອງພວນໄດ້ກັບຄືນມາສູ່ອ້ອມອົກຂອງ ປະ ຊາ ຊົນ ຊາວ ເມືອງພວນຢ່າງແທ້ຈິງ.

– ລຸງປໍ່ຍິ່ງຄິດເຖິງເລື່ອງນີ້ເທົ່າໃດ ພາບແຄ້ນແຫ່ງຄວາມຫລັງທີ່ຝັງຢູ່ໃນສ່ວນເລິກຂອງຫົວໃຈກໍໄດ້ທະ ຍານອອກມາສູ່ຮ່ວງນຶກຄິດຂອງລຸງປໍ່ອີກຄັ້ງໜຶ່ງ.

– ຄ່ຳຄືນຂອງວັນໜຶ່ງເດືອນມືດປານກ່ຳຕາ ເດິກບໍ່ພໍເທົ່າໃດລູກເມັຽ ແລະຊາວບ້ານຕ່າງກໍນອນງຽບສະຫງັດ ຍັງແຕ່ແສງໄຟໄໝ້ໄມ້ແປກຂອງລຸງປໍ່ຜູ້ດຽວທີ່ໄສ່ມອງໆຢູ່. ຫລັງຈາກສານແລ້ວໆ ລຸງປໍ່ກໍຈັບເອົາກິດຕອກມາມັດກົ້ນກະຕ່າຂຶ້ນຫຍັງໄວ້ກ່ອນວ່າຈະເຂົ້ານອນ ແຕ່ບັງເອີນສຽງ

ປືນບັກທຳອິດກໍໄດ້ວັງຂຶ້ນຢູ່ຫົວບ້ານ ລຸງປໍ ຟ້າວມອດໄຟ ຕິດຕາມເບິ່ງເຫດການ. ຈາກນັ້ນສຽງປືນນ້ຽໃຫ່ຽສົມທົບ ກັບສຽງໝາເຫົ່າ ແລະ ສຽງເຕັ້ນແລ່ນຂອງຄົນກໍດັງອຶກກະ ທຶກຂຶ້ນລຸງປໍຕົກໃຈວາບຫມົດແຮງ.

– ໂອຽຕາຽ! ທະຫານຂີ້ປຸ້ນວັງປາວໄດ້ມາເຖິງແລ້ວ!

– ລຸງປໍຟ້າວໂດດເຂົ້າຮ້ອນປຸກລູກປຸກເມັຽລຸກກຽມລະ ວັງໄພ.

– ໃຜບໍ່ຢາກຕາຽໃຫ້ລຸກມາເດີ! ທະຫານສັດຕູບັກໜຶ່ງ ຮ້ອງແຜດຂຶ້ນຫມົດແຮງ ພ້ອມນັ້ນກໍມີສຽງປັ້ງດ່າຕະພຶດ ຕະພື, ທົ່ວບ້ານໄດ້ຕົກຢູ່ໃນສະພາບເດືອດຮ້ອນຢ່າງກະ ທັນຫັນ ສຽງຄາງ ສຽງຮ້ອງໄຫ້ຂອງຊາວບ້ານກໍເລີ່ມດັງ ພົດສະໜັ່ນຂຶ້ນ ແກມກັບສຽງບາບຊູ່ ແລະ ທຸບຕີ ຂອງ ພວກເພັດຊະຄາດເປັນບົນ...ໆ...

– ບັກຈ່າເອກ ຄຳແສນ ຖືໂດ້ນໄຟ ບັກໃຫຍ່ ໂດດຂຶ້ນ ເຮືອນລຸງປໍພ້ອມທັງຮ້ອງທ້າທາຍວ່າ:

– ບັກເຖົ້າເຮືອນນີ້ລຸກເມັຽຄັນບໍ່ຢາກຕາຽ, ຫລ້າແດງ ສະເດີດຕື່ນ ແລ້ວຮ້ອງໄຫ້ຂຶ້ນທັນທີ ລຸງປໍລຸກມາໄຂປະຕູ ຄິດວ່າຈະຖາມມັນໂດຍດີ ແຕ່ກໍຖືກລາກແຂນແກ່ລົງເຮືອນ

ພ້ອມທັງເວົ້າວ່າ:

– ໄປໂຮມປູ່ກາງເດີນພຸ້ນຄັນບໍ່ປາກດາງ! ໄດ້ຍິນແລ້ວບໍ່? ລູກແມ່ງເຈົ້າປູ່ໃສ?

– ໂດງ! ຂ້ານ້ອຍຍັງບໍ່ທັນຮູ້, ປູ່ເຫິງເຮືອນຫັ້ນແຫລ້ວ!

ໄດ້ຍິນເຫດຮ້າຍເກີດຂຶ້ນຄືແນວນີ້ ນາງໄພສອນ ແລະ ແມ່ ກໍຟ້າວອຸ້ມເອົາຫລ້າແດງ ແລະ ຫຸບຫອບເອົາເຄື່ອງຂອງທີ່ຈຳເປັນຈຳນວນຫນຶ່ງແລ້ວກໍລົງເຮືອນໄປ ... ຊາວບ້ານໄດ້ພາກັນຫລັ່ງໄຫລ ໄປເຕົ້າໂຮມປູ່ກາງເດີນໃນທ່າມກາງສຽງຮ້ອງໄຫ້ປ່າງຫນ້າສັງເວດ. ບັກຮ້ງເອກເປົາລີຂັດປືນສັ້ນເຕືອງເຕະເຊະ ມືຖືໄມ້ແສ້ແກ່ວງວິດງ ປືນເຮັດຂາຈ່າງຈະ ປູ່ກາງເດີນໃນໃຈກາງວົງລ້ອມ ຂອງທະຫານເສືອປ່າ, ມັນສັກສາງຕາອັນຄົມແຫລມ ລວາດຫນຶ່ງກວດເບິ່ງປະຊາຊົນແລ້ວ ກໍອອກຄຳສັ່ງ ໃຫ້ທະຫານບັງຄັບເອົາປະຊາຊົນອອກຈາກບ້ານ.

– ໂອງ! ອາດບາເອີຍ ຂ້ານ້ອຍຂໍນຳຫ້ອນ ຂ້ານ້ອຍຂໍເມືອເອົາຜ້າຫົ່ມໃຫ້ລູກສາກ່ອນ(ແມ່ຄຳອຸທານຂຶ້ນ) ພໍ່ເຖົ້າພັນກໍເວົ້າຕໍ່:

– ສາທຸເທາະອາດບາ...ປັ້ງ...ງ...ໂອຍ...ງ...!

ພໍ່ເຖົ້າພັນເວົ້າບໍ່ທັນສຸດປືນສັ້ນຂອງເປົາລີກໍໄດ້ດັບຊີບ ພໍ່ເຖົ້າພັນໄປເສັຽແລ້ວ.

- ຖ້າຜູ້ໃດບັງດື້ດ້ານຈະຖືກບົງຄື້ນ!

ພວກເຈົ້າບັງເປັນຫ່ວງຫາບັງອີກ! ພວກເຈົ້າ ຈົ່ງເບິ່ງ ພຸ້ນ...!

ນັກເປົາລີ ເວົ້າບັງບໍ່ເກັບສຸດຄວາມ ແປວໄຟກໍພຸ່ງກະຈາຽ ຂຶ້ນຈາກເຮືອນ ປະທານບ້ານ ແລ້ວກໍ ລາມໄປທົ່ວກາງບ້ານ ຄອບຄົວລຸງປໍ ແລະ ຊາວບ້ານຕ່າງກໍຈໍາຕ້ອງໄດ້ບ່າງກົ້ມໜ້າ ກ່ອງນ້ຳຕາ ອຳລາຈາກບ້ານເກີດເມືອງນອນຂອງຕົນໄປໃນທ່າມກາງການນາບຊູ້ ຈາກກະບິປາງປືນໃນທ່າມກາງ ຄວາມສົ້ນເນື້ອປະດາຕົວ ແລະ ລະທົມຂົມຂື່ນໃນຄືນຂອງວັນນັ້ນ.

ແປວໄຟບົງລຸກໄໝ້ແຮງເທົ່າໃດ ດວງໃຈຂອງລຸງປ່ກໍບົງເຕັ້ນແຮງຜິດປົກກະຕິ ລຸງປໍຖອນໃຈໃຫຍ່ໜັກແຮງເພື່ອ ຈະຂະຈັດປັດເປົ່າ ຄວາມແຄ້ນ ອອກຈາກສ່ວນເລິກຂອງຫົວອົກ. ແຕ່ແລ້ວ ສະພາບທຸກສິ່ງ ທຸກຢ່າງ ກໍບໍ່ນອກເໜືອໄປຈາກຄວາມຈິນຢູ່ໃນກະທ່ອມອັນນ້ອຍໆນັ້ນ.

ມື້ນີ້ລຸງປໍບໍ່ເຂົ້າປ່າຫາກິນຄືທຸກໆມື້ ກໍບ້ອນວ່າ ເພີ່ນຮູ້

ສຶກບໍ່ສະບາຍຫລາຍ ລູກ ແລະ ເມັຽ ໄດ້ອ້ອນວອນໃຫ້ເພິນ
ພັກຜ່ອນຢູ່ເຮືອນ ຫລາຍຕໍ່ຫລາຍເທື່ອ ເພິນຈຶ່ງຍອມປະຕິ
ບັດຕາມ ສ່ວນ ມີ ແມ່ລູກເຂົາ ແມ່ນໄດ້ອອກຈາກເຮືອນ
ໄປຊອກຫາກິນ ຕັ້ງແຕ່ເຊົ້າໆ ພຸ້ນ. ບັກຫລ້າແດງ ແລະ
ແມ່ມັນພາກັນເຂົ້າປ່າ ຫາຂຸດເຜືອກຂຸດມັນ ຫລື ຜັກບາງ
ອາງຫຍ້າຕ່າງໆ ມາກິນ, ສ່ວນນາງໄພສອນ ກໍສືບຕໍ່ເຂົ້າ
ໄປເມືອງ ເພື່ອຮັບຈ້າງຂາຍສິນຄ້າ ນຳແມ່ຄ້າ ເມື່ອໄດ້ເງິນ
ມາກໍຫາຊອກຊື້ເຂົ້າເມື່ອສູ່ຄອບຄົວ. ໄພສອນ ໄດ້ເລີ່ມດິ້ນຊີ
ວິດ ໃນເສັ້ນທາງຫາກິນ ເປັນລູກຄ້ານມາໄດ້ ເກືອບ ໑-ມີ
ເດືອນແລ້ວ. ນັ້ນນັບວ່າເປັນການປ່ຽນແປງອັນໃຫຍ່ຫລວງ
ທີ່ສຸດ ໃນຊີວິດອັນອັບຈົນຂອງນາງ, ກ່ອນຫນ້ານີ້ເກືອບ
ມີ ປີ ໃນເວລາທີ່ ນາງດຳລົງ ຊີ ວິດ ຢູ່ ດິນ ແດນ ເມືອງ
ພວນ ອະນຸພາບ ແຫ່ງຄວາມສວຍງາມ ແລະ ຄວາມສຸ
ພາບຂອງນາງ ມັນໄດ້ມາປະຄອງ ເອົາຊີວິດອັນຫນຸ່ມນ້ຽ
ຂອງນາງ ສູງເດັ່ນຂຶ້ນ ໃນສາຍຕາຂອງ ເພດ ກົງກັນຂ້າມ
ພວກເຂົາໄດ້ຂະນານ ນາມໃຫ້ນາງວ່າເປັນ "ສຸພາບສັດຕີ"
ແຕ່ມາບັດນີ້ ນາງຊ້ຳເພັດໄດ້ບັງຄັບຫົວໃຈ ໃຫ້ຫລົງລືມ
ກຽດສັກສີເຫລົ່ານັ້ນຈົນຫມົດແລ້ວ.ນາງໄດ້ຕັ້ງໃຈທີ່ຈະຮັບ

ຈ້າງເປັນລູກຄ້າທີ່ຕະຫລິກຕະແຫລງເກັ່ງຜູ້ຫນຶ່ງ.

ເພື່ອສ້າງຮັ່ງຄູນມີ ໃຫ້ແກ່ແມ່ຄ້າ ຜູ້ປະສົງຫາລາຍໄດ້ ກຳໄລບຳການ ຊື້ຫ້າຂາຍສິບ ຊື້ສິບຂາຍຊາວ... ຖ້າວ່າຂ່າວ ນີ້ຫາກປິວໄປເຖິງຫູ ຂອງ ເພດກົງກັນຂ້າມທີ່ນາງເຄີຍທ້າ ທາຍໃນຊີວິດແລ້ວ ກໍ່ມີຫວັງ ທີ່ນາງຈະຕ້ອງໄດ້ກິນແກ້ເບ້ ຫມາກຕຸ່ມແບ... ເປັນແນ່...! ບາງຄັ້ງຄາວໄພສອນ ກໍ່ຄິດ ເຖິງເລື່ອງນີ້ປູ່ ແຕ່ ກໍ່ຕາມເທາະ! ເພື່ອ ຄວາມ ມີ ຊີວິດ ລອດ, ແລະ ກໍ່ມີແຕ່ໄພສອນຜູ້ດຽວ ທີ່ຈະ ບັນລະຍາຍໄດ້ ຢ່າງລະອຽດກ່ຽວກັບເລື່ອງນີ້!

ໃນຕອນແລງຂອງວັນນັ້ນ ນາງໄພສອນ ຂາຍເຄື່ອງ ຕິກ ຫນັ່ງກ່ວາທຸກມື້ ຍ້ອນພໍ່ຄ້າເຖື່ອນ ໄດ້ ນຳເອົາເຄື່ອງ ຂອງຈາກຝັ່ງໄທ ເຂົ້າມາຫລາຍ ນາງຄິດວ່າ ມື້ນີ້ ນາງຈະ ໄດ້ເງິນຄ່າຈ້າງຫນັ່ງກ່ວາທຸກມື້. ຢ່າງຫລາຍທີ່ສຸດແມ່ຕຸ້ຍ ຄຳຜົວ ຜູ້ເປັນເຈົ້າມື ກໍ່ຈະໃຫ້ນາງພຽງແຕ່ ໒໐໐ ກີບ ເທົ່າ ນັ້ນ ເພາະຕາມທຳມະດາມື້ໄດ້ຫລາຍທີ່ສຸດແມ່ຕຸ້ຍຄຳຜົວ ກໍ່ໃຫ້ນາງພຽງແຕ່ ໓໐໐ ກີບ ເທົ່ານັ້ນ. ດັ່ງນັ້ນຈະຊື້ຫຍັງ ເມືອຕ້ອນຄອບຄົວຈຶ່ງຈະດີ ຈະຊື້ເຂົ້າ ຫລືຊື້ປາ. ຖ້າຊື້ ເຂົ້າພັດເປັນຫ່ວງນຳພໍ່ຜູ້ໄຂ້ເຈັບ ຖ້າ ຊື້ ປາ ຊ້ຳ ພັດ ຄິດ

ເຫັນໃນເຮືອນບໍ່ມີເຂົ້າຊິກິນຈັກເມັດ. ນາງຄິດຢາກໄດ້ທັງ ໒ ຢ່າງ ແຕ່ຈະເຮັດແນວໃດເງິນດ້ານ ໒໐໐ ກີບ ຊິ້ເຂົ້າກໍ ໂລຫນຶ່ງກໍຫມົດແລ້ວ.

ໃນຂະນະທີ່ ໄພສອນກຳລັງສິນລະວົນ ນຳແນວຄິດ ຢູ່ ນັ້ນລິດຕັກຊີ ທີ່ນາງໂດງສາບກໍມາຈອດຈົກຢູ່ຕໍ່ຫນ້າເຮືອນ ແມ່ຕູ້ງຄຳຜິວເວລາໃດບໍ່ຮູ້ເນື້ອ.

– ໂອ! ອີ່ນາງມາແລ້ວບໍ (ແມ່ຕູ້ງຄຳຜິວ ອຸທານອອກ ມາຈາກເຮືອນ).

– ໂດງ! ມາແລ້ວມື້ນີ້ ຂາງເຄື່ອງກໍບໍ່ດົກຫລາງປານ ໃດ...

– ເອີໄດ້ແລ້ວນາງເອີງ ເຄື່ອງນັ້ນປະໄວ້ຫັ້ນສາກ່ອນ ເຂົ້າມາ... ເຂົ້າມາພັກຜ່ອນ ຢູ່ໃນເຮືອນພີ້ ( ແມ່ຕູ້ງເວົ້າຕັດ ຄວາມລາງງານຂອງໄພສອນ ).

– ອື! ລູກກໍຊິເມື່ອງຫລາງບໍ ? ບໍ່ຖ້າໃຫ້ນາງໄພສອນ ຕອບ.ແມ່ຕູ້ງຄຳຜິວກໍຮ້ອງໃສ່ລູກຂອງມັນໂລດ.

– ຜິວເອີງຜິວ !

– ໂດງ !

– ລູກຈົ່ງແຕ່ງກາເຟມາໃຫ້ແມ່ແດ່ ໒ ຈອກ ! ແມ່ຕູ້ງ

ຄຳຜົວເວົ້ານຳລູກຂອງມັນ ແລ້ວມັນກໍອ່ວາງຫນ້າມານັບເງິນບືນໃຫ້ໄພສອນ.

– ເອົ້າອີນາງມື້ນີ້ແມ່ໃຫ້ເຈົ້າທີ່ນີ້ສາກ່ອນເນີ, ມື້ຫນ້າແມ່ຈະໃຫ້ເຈົ້າຫລາຍກ່ວານີ້ອີກ, ມື້ນີ້ແມ່ຕູ້ງຄຳຜົວບໍ່ໄດ້ໄລ່ຜົນໄດ້ຜົນເສັຽຄື ທຸກໆມື້: ແທນທີ່ມັນຈະເອົາເງິນໃຫ້ໄພສອນພຽງແຕ່ ໑໐໐ ກີບເທົ່ານັ້ນ, ແຕ່ມັນຊ້ຳພັດເອົາເງິນໃຫ້ໄພສອນເຖິງ ໕໐໐ ກີບເຫັນເປັນແນວນັ້ນ ໄພສອນກໍສຸດແສນດີໃຈ ແຕ່ກໍສະຫງອນ ຄວາມແປກປະຫລາດໄວ້ໃນໃຈ ນາງພວມຈະກ່າວ ຄວາມຂອບໃຈ ແລະ ອຳລາແມ່ຕູ້ງຄຳຜົວກັບບ້ານແຕ່ບັງເອີນ ແມ່ຕູ້ງຄຳຜົວເລີ່ງເດີນມາຂວດບ່າໄຫລ່ໄພສອນ ເພື່ອສັນຍານໃຫ້ນາງໄພສອນຫຍັບໆເຂົ້າໃກ້ໆ ແລ້ວມັນກໍເວົ້າສີຄ່ຽງ ວ່າ:

– ອີນາງເອີຍມື້ນີ້ ແມ່ຄິດວ່າຢາກໃຫ້ລູກຢູ່ເຮືອນນຳແມ່ນີ້ສາກ່ອນ ເພາະວ່າມື້ອື່ນນີ້ແມ່ນວັນອາທິດ ພວກເຮົາອາດຈະບໍ່ທ່ຽວຂາຍເອົາກຳໄລຖ້າເປັນແນວນັ້ນແມ່ກໍຈະໃຫ້ເຈົ້າພັນກີບພຸ້ນແຫລ້ວເລືອງນີ້ລູກຈົ່ງຄິດເບິ່ງ. ໄດ້ຍິນແມ່ຕູ້ງເວົ້າແນວນັ້ນໄພສອນຮູ້ສຶກແຄ້ນໃນໃຈ ແຕ່ບໍ່ຈັກຈະເລືອກເອົາຄຳຕອບອັນໃດຊິດີ ຈິດຫນຶ່ງແມ່ນຢາກເມືອຫາຄອບ

ຄົວ ແຕ່ຈິດຫນຶ່ງ ພັດຄຶດເຫັນໃຈແມ່ຕູ້ງ ຄຳພົວແດ່ເພາະ ເພິ່ນບໍ່ເຄີຍໄດ້ຮ້ອງຂໍຫຍັງນຳຕົນ ເພິ່ນຮ້ອງຂໍນຳຕົນເທື່ອດຽວຄັນຖ້າຊິປະຕິເສດກະໄພດເພິ່ນເຮັດດີນຳໄດ ໃດຊ້ຳພັດບໍ່ເຫັນໃຈຂອງເພິ່ນຊິເປັນບໍ ໄພສອນຄຶດແບບນີ້ແລ້ວກໍຈຳແປັນຕ້ອງຮັບປູ່ເຮືອນນຳແມ່ຕູ້ງບາງເວົ້ານຳແມ່ຕູ້ງວ່າ:

– ເອີເລື່ອງນີ້ລູກກໍບໍ່ຂືນແມ່ໄດ້ດອກ ແມ່ໃຫ້ປູ່ກໍປູ່ໃຫ້ເມືອກໍເມືອ ແຕ່ຄັນຖ້າແມ່ປາກ ໃຫ້ລູກປູ່ແທ້ ລູກກໍຂໍໄປຄອບຫມູ່ ແລະ ຊື້ເຄື່ອງປາກ ເມືອໃຫ້ຄອບຄົວສາກ່ອນເພາະວ່າຫມູ່ຄູ່ເຂົາບັງຖ້າລູກປູ່.

– ເອີຊິໄປກະໄປລະບໍ ຈັກໜ້ງ ຈຶ່ງໃຫ້ນ້ອງຂອງເຈົ້າພາໄປແມ່ຕູ້ງເວົ້າຍັງບໍ່ທັນສຸດຄວາມຄຳພົວກໍນຳຈອກກາເຟມາເຖິງ ໂຕະແມ່ຕູ້ງຄຳພົວ ຈັບເອົາຈອກກາເຟຈອກຫນຶ່ງຍື່ນໃຫ້ໄພສອນແລ້ວມັນກໍເວົ້ານຳລູກຂອງມັນວ່າ:

– ນີ້ພົວໃຫ້ລູກ ເອົາລົດຖີບນັ້ນ ພາເອື້ອຍເຈົ້ານີ້ໄປຊື້ເຄື່ອງແລ້ວພາເອື້ອຍເຈົ້າກັບຄືນມາເຮືອນເຮົາເດີ. (ມັນທັງເວົ້າທັງຊີ້ມືໄປໃສ່ໄພສອນ).

– ໂດຽ! (ຄຳພົວຄອບແມ່ດ້ວຍຄວາມສຸພາບ).

ມື້ນັ້ນບາງໄພສອນຊື້ໄດ້ເຂົ້າຈ້າວ ໒–ປີ ກິໂລກັບປາກີ

ນິນ ໕ ກ້ອນຝາກເມືອໃຫ້ຄອບຄົວພ້ອມກັນນີ້ນາງຍັງໄດ້ສັ່ງ
ຄວາມເມືອຫາຄອບຄົວວ່າ: ນີ້ ນີ້ໄພສອນຍັງຄາວຽກຫນັ້ງ
ຫນຶ່ງຈຶ່ງບໍ່ໄດ້ເມືອນີ້ຫນ້າຈຶ່ງຈະເມືອ.

ຕາມເສັ້ນທາງກັບສູ່ເຮືອນແມ່ຕູ້ຽ ນາງຄຳຜົວຜູ້ຊຶ່ງເຄີຽ
ເປັນເຫຍື່ອຂອງສັງຄົມ ໄດ້ມີຄວາມທະເຍີທະຍານເປັນພິ
ເສດນຳຄວາມສີວິໄລຂອງໂຕເມືອງວຽງຈັນ ນາງໄດ້ຖີບລົດ
ພາໄພສອນໂຄ້ງໄປຫລາຽບ່ອນ ພ້ອມທັງເວົ້າຄຸຽ ກັບໄພ
ສອນວ່າ:

– – ໂອ! ໃນຕອນຄ່ຳນີ້ນີ້ ມ່ວນແທ້ໄດເອື້ອຽຜູ້ຄົນກໍ່
ຫລາຽເພາະວ່າມັນແມ່ນຕອນຄ່ຳ ວັນເສົາແດ່ ເອື້ອຽມັກ
ເບິງເຕັ້ນລຳຫລື ເບິງຊີເນມາ ຖ້າເອື້ອຽຢາກເບິງຊີເນມາ
ກໍເລືອກເບິງເລື່ອງໃດມັນມ່ວນນີ້ນີ້ຢູ່ໂຮງພາບພະຍົນ ບົວ
ສະຫວັນກໍສະເຫນີຊີເນມາຂອງໄທເລື່ອງ " ຄົນສູ້ຄົນ "
ຢູ່ແສງລາວກໍແມ່ນຂອງໄທຄື ກັບເລື່ອງ " ນີ້ແຫລະຣັກ "
ຫລືຈະໄປເບິງຊີເນມາຂອງຈີນເລື່ອງ" ອ້າງຂີ້ຈ້ຽມຕະໄວ
ເພິງ" ຢູ່ໂຮງພາບພະຍົນ ໂອດຽນອານາບໍ່ເອື້ອຽ?... ຕາມ
ນ້ອງນີ້ນ້ອງຄິດວ່າຈະໄປເບິງຊີເນມາຂອງໄທ ນີ້ແຫລະຣັກ
ນັ້ນຄືຊິມ່ວນກວ່າເພາະວ່າເລື່ອງຂອງໄທນີ້ມັນຈັບໃຈທີ່ສຸດ

ໃດເອື້ອງອັນຫນຶ່ງເຮົາກໍຮູ້ຈັກພາສາກັບດີກ່ວາເມື່ອເບິ່ງແລ້ວ ກໍມີບົດຮຽນໃຫ້ແກ່ຄວາມສຸກໃນຊີວິດຂອງພວກເຮົາ ຖ້າບໍ່ດັ່ງນັ້ນກໍໄປເບິ່ງເຂົາເຕັ້ນລຳສາຊິມ່ວນກ່ວາເລື່ອງນີ້ເອື້ອງຊິເຫັນດີນຳນ້ອງບໍ່?

– ຣື! ແນວໃດຊິເປັນບົດຮຽນພໍ່ຈະຮ່ຳຮຽນເອົາ ນັ້ນ ໄພສອນຄິດໃນໃຈແລ້ວກໍຕອບຄຳພີ່ວ່າ:

– ແລ້ວແຕ່ນ້ອງແລ້ວ. ເລື່ອງນີ້ເອື້ອງກໍບັງບໍ່ທັນຮູ້ວ່າເລື່ອງໃດມັນຊິມ່ວນ.

– ໃດ້ແລ້ວເອື້ອງຄືນນີ້ນີ້ຈະພາເອື້ອງໄປທ່ຽວເບິ່ງທຸກ ໆ ບ່ອນສາກ່ອນ ນີ້ຕ່າງໄປຈຶ່ງໃຫ້ເອື້ອງເລືອກເບິ່ງບ່ອນ ໃດ ຊິມ່ວນກ່ວາໝູ່....!

x x

x

ຫລາຍວັນຜ່ານໄປຄອບຄົວໄພສອນຄອງແລ້ວຄອງອີກ ຄອງຄຽງໄພສອນກັບຄືນ ເມືອເຮືອນ ແຕ່ກໍບໍ່ເຫັນໄພສອນກັບຄືນຈັກເທື່ອບຶງຄອງຄຽງໄປະທົ່ວໃດຂ່າວຄາວອັນອະກຸສົນກໍບຶງເພີ່ມທະວີຂຶ້ນຫລາຍມີບາງມື້ ບາງ ວັນ ແມ່ ຂອງ ໄພ

ສອນກໍໄດ້ຮັບແຕ່ຂອງຝາກຂອງໄພສອນເທົ່ານັ້ນ ຕາມພີ່ນ້ອງຊາວບ້ານມາເລົ່າສູ່ຟັງວ່າ ເຂົາບໍ່ໄດ້ເຫັນໜ້າຂອງໄພສອນ ໃນແຕ່ລະເທື່ອທີ່ເຂົາໄດ້ຮັບຂອງຝາກຈາກແມ່ຕູ້ງຄຳພິວຜູ້ຊຶ່ງເປັນແມ່ຄ້າທີ່ໄພສອນໄປຮັບຈ້າງ. ມີເທື່ອໜຶ່ງໃນຂະນະທີ່ເຂົາກຳລັງຍ່າງມຸ່ງໜ້າໄປຫາຕະຫລາດເຊົ້າ ລົດສິບຄັນໜຶ່ງທີ່ແລ່ນດ້ວຍຄວາມໄວສຸດຂະໜາດກໍແລ່ນຜ່ານໜ້າເຂົາໄປ ໃນລົດສິບຄັນນັ້ນມີນາຍທະຫານຊັ້ນຮ້ຽເອກຜູ້ໜຶ່ງນັ່ງປູ່ຽງຂ້າງກັບນາງສາວທີ່ ມີ ໃບ ໜ້າ ກົມ ສ້ວຍຄິ້ວກົ່ງຜົມດຳຄື ໄພສອນ ແຕ່ຈັກແມ່ນຫລືບໍ່ ...
ເພາະຍິງຄົນນັ້ນໄດ້ກັ້ງບັ້ງເລົາຄືງໃນຊຸດທີ່ໄທວຽງຈັນ ເຂົາເອີ້ນກັນວ່າ "ຟ້າແມບ" ແລະໃຊ້ຜ້າບິລິງສີຟ້າປົກຫົວ ໄດ້ຍິນຂ່າວເລົ່າລືແນວນີ້ ມັນແຮງເຮັດໃຫ້ຄອບຄົວຂອງໄພສອນ ເປັນຫ່ວງຫລາຍໂດຍສະເພາະກໍແມ່ນລຸງປໍທີ່ໄດ້ເຈັບປ່ວຍມາໄດ້ຫລາຍວັນແລ້ວ ນັ້ນສົມທົບກັບເລື່ອງນັ້ງຕື່ນ ໃສ່ເລື່ອງໃຫຍ່ມາຮອດມື້ນີ້ ອາການເຈັບຂອງເພິ່ນກໍໄດ້ລະບາດຂຶ້ນຢ່າງກະທັນຫັນ. ຍາດຕິພີ່ນ້ອງ ແລະ ຊາວບ້ານຕ່າງກໍຫຸ້ມຫໍ່ກັນມາເບິ່ງເພິ່ນດ້ວຍຄວາມເປັນຫ່ວງ ແຕ່ວ່າບໍ່ມີຫຍັງທີ່ພໍຈະມາຊຸດຊ່ວຍບັນເທົາຄວາມເຈັບປ່ວຍຂອງລຸງປໍ

ໃຫ້ລົດຜ່ອນລົງ, ຖ້າວ່າກໍລະນີນີ້ຫາກເກີດຂຶ້ນຢູ່ທາງບ້ານເກົ່າເມືອງຫລວງພຸ້ນແລ້ວເລື່ອງພໍຊໍານີ້ ບໍ່ເປັນບັນຫາຫຍັງທີ່ຊາວບ້ານຈະຊິດຊ່ວງກັນບໍ່ໄດ້ແຕ່ໃນທີ່ນີ້ ຈະຫາກິນພໍກຸ້ມປາກກຸ້ມທ້ອງໃພລາ:ງກໍທັງຍາກ ພວກເຂົາເຈົ້າຕ່າງກໍໄດ້ຕົກຢູ່ໃນສະພາບສິ້ນເນື້ອປະດາຕົວຄືໆງວກັນຫມົດ.

ໃນຕອນແລງຂອງວັນນັ້ນ ຫນັງສືສະບັບຫນຶ່ງ ກໍໄດ້ສົ່ງໄປເຖິງກໍານົ໊ຂອງໃພສອນ. ໃພສອນຈຶ່ງກຫນັງສືອອກມາອ່ານ ພ້ອມກັບນັ້ນນໍ້າຕາກໍໄດ້ໄຫລອອກເຕັມເບົ້າເນື້ອສາງຕາໄດ້ເລື່ອນລົງໄປ ກະທົບກັບຮຽ ເຊັນ ຂອງ ແມ່ ຂອງເຂົາ.

ລູກໃພສອນ ທີ່ຮັກແພງຍິ່ງ!

ໄດ້ສິບກ່ວາວັນແລ້ວທີ່ຄວາມທຸກຈົນໃນຄອບຄົວ ຂອງເຮົາໄດ້ບັງຄັບໃຫ້ລູກຈໍາຕ້ອງ ໄດ້ພັດພາກຈາກພໍ່ແມ່ມາຫາກິນຢູ່ທາງພີ້, ນັບຕັ້ງແຕ່ມື້ນັ້ນມາພໍ່ແມ່ກໍບໍ່ຮູ້ຂ່າວລູກຈັກເທື່ອ ແຕ່ເຖິງຢ່າງໃດກໍດີພໍ່ແມ່ກໍຍັງອຸ່ນອຽນໃຈຢູ່ ເພາະຄິດວ່າລູກຍັງສະບາຍດີຕາມເດີມ ແລະ ຈະບໍ່ກະທໍາສິ່ງໃດສິ່ງຫນຶ່ງທີ່ລູກບໍ່ເຄີຍກະທໍາ ແລະ ກໍບໍ່ຄວນກະທໍາ.

ໃພສອນ, ລູກຂອງແມ່ເປັນທີ່ໂຊກບໍ່ດີໃນຄອບຄົວຂອງ

ພວກເຮົາໃນຕອນເຊົ້ານີ້ນີ້ພໍ່ຂອງເຈົ້າໄດ້ລົ້ມເຈັບປ່ວຍຢ່າງໜັກ. ດັ່ງນັ້ນແມ່ຈຶ່ງຢາກໃຫ້ເຈົ້າກັບຄືນເມືອເຮືອນດ່ວນ ຖ້າເຈົ້າຫາກຢາກເຫັນໃຈພໍ່ຂອງເຈົ້າ.

໑໕-໑-໑໙໖

ເຊັນ: ແມ່ຂອງລູກ ພັນ.

ອ່ານໜັງສືຂອງແມ່ຍັງບໍ່ທັນສຸດ ຄວາມແຄ້ນຄັ່ງໄດ້ແລ່ນຂຶ້ນມາຕຳຫົວອົກດວງໃຈຮ້ອນເອົາເໝືອນພູໄຟຈວນຈະລະເບີດ ໄພສອນໄດ້ໄຫ້ສະອຶ້ນຂຶ້ນໜັກແຮງທຳລາຍຄວາມປຽວພຽບອັນງຽບສະຫງັດຂອງຫ້ອງເຮືອນໃຫ້ປັ່ນປ່ວນຢ່າງຜິດປົກກະຕິ ສຽງຮ້ອງໄຫ້ອັນເປືອກເປັນຂອງໄພສອນໄດ້ເຮັດໃຫ້ແມ່ຕູ້ຄຳພິວທີ່ກຳລັງຄິດໄລ່ຂີ້ເບ້ຍກຳໄລປູ່ຫ້ອງຊາລິງເບື້ອງພຸ້ນຕື່ນບຸບໜັກແຮງ.

– ໂອຜີເອີຍກູກະດຽວວ່າແມ່ນໃຜຕາຍຊັ້ນດອກ!

– ພິວເອີຍພິວໄປເບິ່ງອີພີນັ້ນເບິ່ງດູ ແມ່ນມັນໄຫ້ອີສັງລະ!

ບໍ່ດົນຄຳພິວກໍແລ່ນໄປເຖິງຫ້ອງນອນຂອງໄພສອນ.

– ເອື້ອຍໄພສອນເປັນຫຍັງລະຈິ່ງໄຫ້ດັງແທ້ ລະວັງແມ່ເພິ່ນຊິຮ້າຍເອື້ອຍໄດ.

- ເອື້ອຍໄດ້ຮັບຂ່າວວ່າພໍ່ຂອງເອື້ອຍເຈັບປ່ວຍຫນັກ... ເອື້ອຍ...ເອື້ອຍຢາກເມືອເຮືອນ.

ເມື່ອໄດ້ຟັງຄຳໃຫ້ການ ຂອງລູກຜູ້ບອກໄດ້ໃຊ້ຟັງແມ່ຕູ້ຍກໍເກີດໂມໂຫຂຶ້ນ ປານກັບກັບຈູດສະນວນລະເບີດ ມັນຟ້າວຫອບເອົາຕົວທີຕູ້ຍອຸ່ຍລຸ່ຍຂອງມັນ ໄປສູ່ ຫ້ອງ ນອນຂອງໄພສອນໄວປານລົມພັດ.

ມຶງໃຫ້ເຮັດຫຍັງອື້ຮ່າເຮີຍ ມັນຊິຂວາງເຮືອນຂວາງຊານກູແລ້ວ ມຶງຊິຫາເລື່ອງເພື່ອເປັນຂໍ້ອ້າງຢາກເມືອບ້ານອີກບໍ້ ອີ່ຂີ້ທຸກກະດູງວ່າກູຊີ້ຄ່າຫົວມຶງຫມົດແລ້ວ. ກູຫວັງດີຕໍ່ມຶງນີ້ ບໍ່ມຶງຊ້ຳພັດປາກເຮັດໃຫ້ກູເສັຽຫນ້າເສັຽຕາອີກບໍ.ມັນທັງເວົ້າທັງຊີ້ມືໃສ່ຫນ້າໄພສອນນັ້ນ ໂມໂຫຈົນວ່າຕົວສັ່ນສັ່ນວັບໆ...

ຄວາມຈິງ ຖ້າໄພສອນຫາກໄດ້ກັບຄືນເມືອບ້ານໃນຄືນນັ້ນກໍບໍ່ມີຫຍັງທີ່ພໍຈະເສັຽຫນ້າເສັຽຕາແມ່ຕູ້ຍ ດອກ. ແຕ່ແມ່ຕູ້ຍຫາກຈະບໍ່ໄດ້ລ້າລວງນຳການຂາຍເນື້ອ ຂາຍຕົວຂອງໄພສອນເທົ່ານັ້ນ ນັບຕັ້ງແຕ່ໄພສອນໄດ້ຖືກແມ່ຕູ້ຍຈອບຂູ່ຫລອກລວງໃຫ້ຢູ່ເຮືອນນຳ, ແມ່ຕູ້ຍກໍໄດ້ໃຊ້ທຸກວິທີເພື່ອບັງຄັບໃຫ້ນາງໄພສອນຈຳຕ້ອງໄດ້ຂາຍເນື້ອ ຂາຍຕົວໄປເພື່ອກູ້

ເອົາຄວາມປູ່ລອດຂອງຊີວິດ. ນາມ໌ບ໌ຣ້ຽເຂກ ຄ່ໍາຟອງກໍ່ໄດ້ເອົາເງິນສິບ ມັນມາຈັບ ຈ່ອງລ່ວງຫນ້າໄວ້ແລ້ວເພື່ອຈະໄດ້ເສບສົມ ໄພສອນ ບ້ອນແນວນັ້ນແມ່ຕູ້ງຄຳຜົວຈຶ່ງເປັນຜີເປັນເຜດບໍ່ໃຫ້ໄພສອນ ກັບເມືອເຮືອນ ເພາະມັນຈະບໍ່ໄດ້ລ້າລວງນຳຄວາມສວຽງາມຂອງໄພສອນຕໍ່ໄປ.

ຄວາມເຈັບຊ້າຄວາມລະທົມຂົມຂື່ນໃນຄ່ຳຄືນຂອງວັນນັ້ນປະກົດ ມັນໄດ້ມາອູ້ມເອົາວິນບານຂອງໄພສອນປິວຂື້ນສູ່ນ່ານເມກຫມອກອັນຕຶບໜາ ປູ່ກາງເວຫາອັນ ງຽບສະຫງັດຫມົດແລ້ວ, ເຫິງໆຄວາມລະທົມຂົມຂື່ນນັ້ນຈຶ່ງໄດ້ຖືກລະບາຽອອກຈາກສ່ວນເລິກຂອງຫົວອົກເປັນສຳນຽງສະອຶກລະອື້ນບາດຄ່ຽງ ແຮງໆ ໄປຕາມຈັ່ງຫວະເຕັ້ນເຕິນຂອງໝາກຫົວໃຈ. ເຫມືອນກັບວ່າ ສຳນຽງອັນໂສກເສົ້າແລະ ເປືອກເປັນນັ້ນມັນໄດ້ໄປວິງວອນໃຫ້ພໍ່ຂອງເຂົາຈົ່ງເຫັນໃຈລູກຜູ້ອັບຈົນ.ຂະນະນັ້ນຄວາມຄອງຄຽຂອງລຸງປໍທີຈະເຫັນຫນ້າລູກກໍ່ໄດ້ຜ່ານນີ້ມາເປັນຊົ່ວໂມງແລ້ວກໍ່ເປັນວິນາທີໄປ, ຖ້າວ່າໂລກນີ້ຫາກຍັງບໍ່ມີແວວທີ່ຈະມອງເຫັນເສັ້ນທາງອັນສະຫວ່າງແຈ້ງແລ້ວ ລຸງປໍກໍ່ຈະສິ້ນຊີວິດໄປຈາກໂລກນີ້ຢ່າງຄັກໆຕັ້ງແຕ່ເຫິງແລ້ວ,ເພື່ອໃຫ້ຫາງຈາກ

ຄວາມສົງສານ,  ລຸງປໍຍັງບໍ່ທັນຂາດໃຈກໍຍ້ອນວ່າກຽດຕິພູມຂອງເພິນຍັງມີກຳລັງແຮງ. ເພິນຍັງມອງເຫັນອານາຄົດອັນສະຫວ່າງແຈ້ງຂອງປະເທດຊາດຂອງເພິນ ແລະ ເພິນກໍຍັງປາກົດຕາມເສັ້ນທາງສາຍຫນຶ່ງ ທີ່ລູກຂອງເພິນກຳລັງເດີນຢູ່ທາງທິດປົວລະພາພຸ້ນ, ໃນຂະນະທີ່ລູກຍັງ ແລະ ບາດພີ່ນ້ອງກຳລັງຫຸ້ມຫໍ່ກັນມານັ່ງ ໂອບອ້ອມຈ້ອງມອງ ເບິ່ງຈິດໃຈອັນສຸດທ້າຍຂອງລຸງປໍໃນແຕ່ລະວິນາທີຢູ່ນັ້ນ  ຈົດຫມາຍກ້ານຫນຶ່ງຊຶ່ງອາດຈະ ຖືກສົ່ງມາທາງສາຍລັບກໍໄດ້ນຳມາຮອດມືຂອງແມ່ໄພສອນ.  ແມ່ໄພສອນຟ້າວຈີກຫນັງສືສະບັບນັ້ນອອກມາອ່ານເພື່ອເຕືອນສະຕິຂອງລຸງປໍ.

ເຖິງ ພໍ່ແມ່ເອື້ອຍນ້ອງ ທີ່ຮັກແພງ!

ລູກຮູ້ສຶກເສົ້າສະຫລົດໃຈຫລາຍພາຍຫລັງທີ່ລູກໄດ້ຍິນຂ່າວວ່າ ພໍ່ແມ່ເອື້ອຍນ້ອງ ໄດ້ຖືກ ຈັກກະພັດ ອາເມລິກາ ແລະ ລູກມືບັງຄັບຈັບກຸມເອົາໄປ, ນັບຕັ້ງແຕ່ມື້ນັ້ນມາ ກໍຫລາຍປີແລ້ວ ແຕ່ລູກກໍຍັງ ບໍ່ທັນໄດ້ ມີໂອກາດ ລະບາຍຄວາມຮູ້ສຶກນັ້ນອອກມາຈັກເທື່ອ ທັງນີ້ ກໍເພາະວ່າຢູ່ບົນເສັ້ນທາງອັນຍາວໄກ ລູກຈຶ່ງບໍ່ສາມາດຮູ້ໄດ້ວ່າ ພໍ່ແມ່

ແລະ ເອື້ອຍນ້ອງໄດ້ມີຊີວິດຢູ່ແຫ່ງຫົນໃດ? ມາມື້ນີ້ເປັນທີ່ໂຊກດີລູກໄດ້ຮູ້ຂ່າວວ່າ ພໍ່ແມ່ເອື້ອຍນ້ອງໄດ້ມີຊີວິດຢູ່ແຫ່ງນີ້, ສະນັ້ນລູກຈຶ່ງຖືໂອກາດນີ້ຂຽນ ຈ.ມ. ມາປ່ຽນປານຕາງໃບໜ້າຂອງລູກ.

ເປັນແນວໃດ ນັບຕັ້ງແຕ່ ພໍ່ແມ່ເອື້ອຍນ້ອງຖືກຈັກກະພັດອາເມລິກາ ແລະ ລູກມືບັງຄັບຈັບກຸມມາຢູ່ທາງພີ້ພໍ່ແມ່ເອື້ອຍນ້ອງກໍຍັງສະບາຍດີຫມົດທຸກຄົນບໍ ເວົ້າເຖິງການກິນຢູ່ນຸ່ງຖືເດເປັນແນວໃດຕາມລູກໄດ້ຍິນຂ່າວນີ້ຄື ວ່າໄດ້ມີປະຊາຊົນທີ່ຖືກຈັກກະພັດອາເມລິກາ ແລະ ລູກມືບັງຄັບຈັບກຸມເອົາໄປນັ້ນຫລາຍສິບຄອບຄົວ ໄດ້ທຸກຍາກອຶດຢາກຈົນເຖິງຂັ້ນໄປຂໍທານກິນ ເລື່ອງນີ້ເຮັດໃຫ້ລູກເຈັບໃຈ ແລະ ເປັນຫ່ວງເຖິງ ພໍ່ແມ່ເອື້ອຍນ້ອງທີ່ສຸດ!

ສ່ວນລູກເອງແມ່ນຍັງມີຄວາມສຸກກາຍສະບາຍໃຈຢູ່ຕະຫລອດມາ. ເວົ້າເຖິງການກິນຢູ່ນຸ່ງຖືກໍພຽງພໍທຸກປະການ ໂອກາດນີ້ ລູກຂໍເລົ່າບາງຕອນ ໃນຊີວິດຂອງລູກສູ່ພໍ່ແມ່ເອື້ອຍນ້ອງຟັງດັ່ງນີ້:

ພາຍຫລັງທີ່ລູກໄດ້ເສັງຈົບຊັ້ນມັດທະຍົມແລ້ວ ກໍພໍດີກັບນັ້ນລົບກູ້ກຽດ ໂດຍຕອບສະໜອງກັບຄຳຮຽກຮ້ອງຂອງ

ປະເທດຊາດ ລູກພ້ອມດ້ວຍໝູ່ຄູ່ຫລາຍໆຄົນກໍໄດ້ ພ້ອມ
ກັນສະມັກໃຈຕະລຸມບອນໄປລຳລຽງອົບສົ່ງຮັບໃຊ້ແນວໜ້າ
ຢ່າງເບີກບານມ່ວນຊື່ນບົນເສັ້ນທາງອອກສູ່ສະໜາມ ເຖິງ
ວ່າມີອຸປະສັກຫລາຍປ່າງກໍຕາມແຕ່ພວກລູກ ແລະ ໝູ່
ຕ່າງກໍເບີກບານຮ້ອງລຳທຳເພງແມ່ນໃຜກໍມີຄວາມ ພາກ
ພູມໃຈທີ່ຕົນໄດ້ມີໂອກາດຮັບໃຊ້ປະເທດຊາດປ່າງສົມກຽດ.
ໃນການຮັບໃຊ້ບັ້ນລົບຄັ້ງນັ້ນ ໜ່ວຍຂອງລູກກໍແມ່ນໜ່ວຍ
ໜຶ່ງທີ່ໄດ້ມີຜົນງານຫລາຍ ແລະ ໄດ້ຮັບການຍ້ອງຍໍຈາກ
ສູນກາງ ຫລັງຈາກບັ້ນລົບກູ້ກຽດສິ້ນສຸດລົງແລ້ວລູກກໍໄດ້
ຖືກບັນຈຸເຂົ້າຮັບການອົບຮົມ ຢູ່ໃນໂຮງຮຽນແພດຊັ້ນກາງທີ່
ຊຳເໜືອ ແລະ ນັບແຕ່ບັດນັ້ນເປັນຕົ້ນມາລູກກໍໄດ້ກາຍ
ເປັນພະນັກງານແພດລົງຮັບໃຊ້ປະຊາຊົນຢູ່ທາງທ້ອງຖິ່ນ
ຂອງເຮົາ.

ພໍ່ແມ່ເອື້ອຍນ້ອງທີ່ນັບຖື! ລູກດີໃຈທີ່ສຸດທີ່ບ້ານເມືອງ
ຂອງເຮົາໄດ້ມີສັນຕິພາບແລ້ວ. ສັນຍາທີ່ຄົນລາວທັງສອງ
ຝ່າຍໄດ້ເຊັນກັນແລ້ວນັ້ນມັນໄດ້ຮັບປະກັນສິດເສລີພາບຂອງ
ປະຊາຊົນເຮົາ ແລະ ຈາກສັນຍານັ້ນມັນກໍຈະເຮັດໃຫ້ພໍ່ແມ່
ແລະ ບາດຕີພີ່ນ້ອງໄດ້ກັບຄືນສູ່ບ້ານເດີມຂອງຕົນ ລູກກໍາ

ລັງລໍຖ້າພໍ່ແມ່ແລະຊາວບ້ານເຮົາກັບຄືນມາ. ໃນປະຈຸບັນນີ້ ທາງບ້ານເມືອງຂອງເຮົາພຸ້ນມີຄວາມເບີກບານມ່ວນຊື່ນທີ່ສຸດປະຊາຊົນ ສ່ວນຫລວງຫລາຍໄດ້ກັບຄືນເມືອສູ່ບ້ານເດີມຂອງຕົນຫມົດແລ້ວການທຳມາຫາກິນການໄປມາຄ້າຂາຍກໍໄດ້ຟື້ນຟູຄືນຫມົດແລ້ວ ລູກຄິດວ່າເມື່ອພໍ່ແມ່ເອື້ອຍນ້ອງກັບມາເມື່ອນັ້ນລູກຈະມີຄວາມສຸກທີ່ສຸດ, ແລະ ຈະໄດ້ພ້ອມກັບພໍ່ແມ່ເອື້ອຍນ້ອງກໍ່ສ້າງຄອບຄົວ ເຮືອນຊານຂອງພວກເຮົາໃຫ້ອຸດົມສົມບູນຄືເກົ່າ.

ສຸດທ້າຍ ລູກຂໍອວຍພອນໃຫ້ຄອບຄົວຂອງພວກເຮົາພົບແຕ່ຄວາມສຸກຕະຫລອດໄປ ລູກຫວັງວ່າ ພໍ່ແມ່ ຈະກັບຄືນມາໃນໄວໆນີ້.

໑໔/໒/໗໒

ລູກຂອງພໍ່ແມ່

ບົວພອນ

ເມື່ອໄດ້ຟັງ ຈ.ມ. ຂອງບົວພອນສິ້ນສຸດລົງລຸງປໍຮູ້ສຶກສະດຸ້ງໃຈ ເພິ່ນຕັ້ງໃຈຟື້ນສະຕິຂຶ້ນມາຕອບຄຳຖາມຂອງຜູ້ເປັນເມັຍອີກຄັ້ງຫນຶ່ງເພື່ອເປັນສັນຍາລັກບອກວ່າເພິ່ນຍັງມີຊີວິດຢູ່ຈິດໃຈຂອງເພິ່ນຍັງເຂັ້ມແຂງແລ້ວ ເພິ່ນກໍ ນອນ

ຫລັບສະຫນິດໄປ ໃນທ່າມກາງການຊື່ນຊົມຂອງບາດດີ ພີ່ນ້ອງເຜົ່າບອນຫລັບ ຫລັບໄປ, ຫລັບໄປເພື່ອຄອງຄອຍຫາວັນໃຫມ່ຄອງຄອຍຫາວັນແຫ່ງສັນຕິສຸກ ແລະ ວັນເວລາແຫ່ງແສງລັດສະຫມີຂອງດວງພະອາທິດຈະພົ້ນພຸ່ງຂຶ້ນ ແລະ ຈະສ່ອງແສງສະຫວ່າງອັນອົບອຸ່ນລົງມາສູ່ປະເທດຊາດຂອງເຜົ່າຂອງປະຊາຊົນລາວ.

ເລື່ອງສັ້ນ :

# ປ້າແຈ່ມ

ໂດຍ: ອຸທິນ ບຸນຍາວົງ

ປີນີ້ປ້າແຈ່ມອາຍຸ ໔໒ ປີ ເວົ້າອີກໃນຫນຶ່ງກໍແມ່ນ ວ່າປ້າແຈ່ມຕາບອດມາແລ້ວ ໔໒ ປີ.

ທີ່ເວົ້າແນວນັ້ນ ກໍບໍ່ຫມາຍຄວາມວ່າ ລາວພິການຕາ ມືດມິດຈົນໄປມາທາງໃດບໍ່ໄດ້ດອກ, ລາວພໍໄປຫັ້ນມາຫນີ້ ໄດ້ຢູ່ ແຕ່ຄວາມພິການຂອງປ້າເລິກກ່ວານັ້ນ ມືດມິດກ່ວາ ນັ້ນເພາະວ່າປ້າອ່ານແລະຂຽນຫນັງສືບໍ່ເປັນ.

ບໍ່ແມ່ນຄວາມຜິດຂອງປ້າທີ່ບໍ່ໄດ້ຮໍ່າຮຽນຫນັງສື. ປ້າ ເກີດຢູ່ຊົນນະບົດ ຕາຫນ່າງການສຶກສາບໍ່ໄດ້ຮັບຄວາມເອົາ ໃຈໃສ່ ແລະ ຂະຫຍາຍໃຫ້ທົ່ວເຖິງ ບ້ານປ້າຈຶ່ງເປັນຫນຶ່ງ ໃນຈໍານວນຫລາຍຮ້ອຍຫລາຍພັນບ້ານທີ່ບໍ່ມີໂຮງຮຽນ.

ເມື່ອປ້າໄດ້ແຕ່ງດອງເປັນຄອບຄົວ ແລະ ມາຢູ່ນໍາຜົວ

ຫົວງງຈັບ ປ້າຮູ້ສຶກວ່າມີດໄປຮອດແປດດ້ານ. ປ້າມີປົມ
ດ້ຍແຕ່ປ້າກໍພະຍາຍາມປົກປິດຈຸດອ່ອນນີ້ ທັງນີ້ກໍເພາະ
ວ່າປ້າເປັນເມັຽຂ້າລາຊະການຄົນໜຶ່ງ ຫລືໃນທັດສະນະ
ຂອງຊາວຊົນນະບົດກໍແມ່ນວ່າເປັນເມັຽເຈົ້ານາງຜູ້ໜຶ່ງ ຊຶ່ງ
ຖ້າວ່າມີຄົນຮູ້ຈັກວ່າປ້າບໍ່ຮູ້ອ່ານຂຽນໜັງສື ແມ່ນວ່າເປັນ
ເລື່ອງອັບອາຍຂາຍໜ້າ.

ດັ່ງນີ້ ປ້າ ຈຶ່ງ ຕ້ອງສະແດງຕົວ ໃຫ້ສົມຊື່ວ່າເປັນເມັຽ
ຂ້າລາຊະການໂດຍທຳທ່າວ່າອ່ານໜັງສືໄດ້.

ເມື່ອໜຶ່ງພະນັກງານສົ່ງໜັງສືພິມ ເອົາໜັງສືພິມ
ໄປສົ່ງໃຫ້ເຮືອນປ້າ, ເວລານັ້ນພໍດີປ້າຢູ່ໜ້າບ້ານ. ພະ
ນັກງານສົ່ງບອກວ່າສະບັບນີ້ມີເລື່ອງຕື່ນເຕັ້ນ, ປ້າຮັບເອົາ
ແລ້ວທຳທ່າອ່ານ. ພະນັກງານສົ່ງ ນ.ສ.ພ ເຮັດໜ້າຍິ້ມໆ
ແລ້ວ ຮີບ ໜີ ໄປ ເພາະຢ້ານອິດຫົວບໍ່ໄດ້ທີ່ເຫັນປ້າເບິ່ງ
ໜັງສືຫາງປິ້ນ.

ນອກຈາກພະນັກງານສົ່ງນ.ສ.ພແລ້ວກໍມີພະນັກງານ
ເກັບເງິນຄ່າໄຟຟ້າ ຄ່ານ້ຳປະປາທີ່ໄດ້ພົບກັບເລື່ອງໜ້າ
ຫົວໂດຍແມ່ນປ້າເປັນຕົວຕະຫລົກ. ເລື່ອງ ນັ້ນ ກໍ ແມ່ນ ທຳ
ນອງດຽວກັນທີ່ພະນັກງານສົ່ງໜັງສືພິມໄດ້ພົບພໍ້ ນັ້ນຄື

ປ້າຮັບເອົາປື້ຄ່າໄຟຟ້າຈາກນະນັກງານ ແລ້ວເອົາມາອ່ານຫາງປຶ້ນ.

– "ເປັນເງິນຈັກກີບ? ປ້າຖາມຢ່າງຂຶງຂັງ.

ພະນັກງານເກັບເງິນ ເບິງຫນ້າປ້າແລ້ວຮູ້ສຶກອຶດອັດໃຈ ແຕ່ກໍອິດບໍ່ໄດ້ທີ່ຈະບອກວ່າ:

"ປ້າເບິງຫາງປຶ້ນໃດຫັ້ນນ່າ !"

– "ຈັ້ງແມ່ນມັນສັບສົນ. ເອົາເບິງດູ! ບອກມາທີ່ໃດແລ້ວຊິຈ່າງໃຫ້ "ປ້າເວົ້າແກ້ເຂີນ.

ເພາະຄວາມບໍ່ຮູ້ຫນັງສືນີ້ເອງ ປ້າຕົກໂງ່ ມາຫລາຍເທື່ອ ເມື່ອປ້າເອົາຜົວໃຫມ່ໆນັ້ນ ມີຜູ້ສາວຂຽນຫນັງສືມາຫາຜົວຂອງປ້າ ພັນລະນາເຖິງເລື່ອງຄວາມຮັກ ແຕ່ປ້າກໍບໍ່ຮູ້ສຶກຫຍັງ ເພາະຜົວໄດ້ຕົວະວ່າເປັນຫນັງສືຂອງພີ່ນ້ອງຂຽນມາຖາມຂ່າວຕາມທຳມະດາ ພາຍລຸນມາປ້າຮູ້ຄວາມຈິງຈຶ່ງດົ້ນບັ່ດງ.

ຈະວ່າປ້າບໍ່ຮູ້ຫນັງສືຈັກໂຕເລີຍກໍບໍ່ຖືກ ເພາະປ້າຮູ້ຈັກຂຽນຊື່ຕົນເອງມາແຕ່ດົນ ແລະ ເປັນຄຳດຽວໃນພາສາລາວທີ່ປ້າຂຽນເປັນ. ແຕ່ໂຕຫນັງສືທີ່ປ້າຂຽນວ່າ "ແຈ່ມ" ນັ້ນໃຜເຫັນແລ້ວກໍຄົງອົດຫົວບໍ່ໄດ້ ເພາະມັນເປັນມະໂຄ່ງມະ

ເຄ່ງຄືດັ່ງເດັກນ້ຽປະຖົມປີທີ່ຫນຶ່ງຫັດຂຽນ. ທີ່ປ້າໃຊ້ຄວາມພຽນພະຍາຍາມຫັດຂຽນຊື່ນັ້ນ ກໍເພາະມັນກ່ຽວ ກັບເລື່ອງເງິນຄຳເຊັ່ນເຊັນຊື່ເພື່ອເບີກເງິນເຊັນຊື່ໃນແຈັກເງິນ ແລະໃນເອກະສານຕ່າງໆທີ່ກ່ຽວກັບເງິນ.ຖ້າບໍ່ແມ່ນເລື່ອງເງິນແລ້ວປ້າກໍຄົງບໍ່ຮຽນຂຽນຊື່. ຈະວ່າຮຽນຂຽນຊື່ກໍບໍ່ຖືກຄັກວ່າຫັດແຕ້ມຊື່ຈະເໝາະສົມກວ່າທັງນີ້ກໍເພາະປ້າບໍ່ຮູ້ເລີຍວ່າສ່ວນປະກອບຂອງຄຳວ່າ "ແຈ່ມ" ນັ້ນມີຕົວຫັຽງແດ່ປ້າອາດເຫັນວ່າສະລະແອນັ້ນແມ່ນຫຽ້າສອງເສັ້ນເອນໄປທາງດຽວຍ້ອນຖືກລົມພັດ ຕົວຈໍແມ່ນເບັດຊິດປາຊະນິດຫນຶ່ງ ຕົວນໍແມ່ນເຫງົ້າໄມ້ໄຜ່ທີ່ປ້າເຄີຽເຫັນຢູ່ບ້ານເດີມ ສ່ວນໄມ້ເອກນັ້ນປ້າອາດເຫັນເປັນເຂັມດວງຫນຶ່ງທີ່ຕົກມາແຕ່ເທິງຟ້າ. ທັງການຂຽນຊື່ ແລະເຊັນຊື່ນັ້ນປ້າແຕ້ມເປັນແບບດຽວກັນ.

ຕົກມາໃນລະບອບໃຫມ່ນີ້ກໍມີເລື່ອງຕະຫລົກກ່ຽວກັບປ້າແຈ່ມ ເທື່ອຫນຶ່ງມີການປະຊຸມຟັງເອກະສານການເມືອງໂດຽແມ່ນປະທານຕາແສງເປັນຜູ້ມາບັນຍາຽ ແລະໂອ້ລົມມີບາງຕອນສຳຄັນປະທານກໍບອກໃຫ້ຜູ້ມາປະຊຸມຈົດເອົາໄວ້. ປ້າແຈ່ມກໍບໍ່ນ້ຽຫນ້າຜູ້ອື່ນ ຈັບເອົາປາກກາບິກກົ້ມຫນ້າໃສ່ເຈັ້ຽຈົດເອົາຢ່າງຕັ້ງຫນ້າ. ຜູ້ຫນຶ່ງທີ່ນັ່ງຢູ່ໃກ້ປ້າ

ເສືອກຕາເບິ່ງ ເຫັນຕົວຫນັງສືເຕັມຫນ້າເຈັ້ຍ ແລະມີແຕ່ຄຳວ່າ "ແຈ່ມ" ເຕັມຫນ້າເຈັ້ຍ. ພໍເລີກປະຊຸມ ຜູ້ທີ່ນັ່ງຢູ່ໃກ້ສອດຫລອດໄປຖາມປ້າແຈ່ມ ເລີຍໄດ້ເລື່ອງຫົວກັນຈົນໄສ້ຂົດໄສ້ໃຂ, ນັບແຕ່ນັ້ນມາເລື່ອງທີ່ປ້າແຈ່ມບໍ່ຮູ້ ຫນັງສືຈຶ່ງຖືກເຜີຍແຜ່ອອກຢ່າງກ້ວາງຂວາງ.

– " ປ້າແຈ່ມບໍ່ໄດ້ແຈ່ມສົມຊື່ " ມີຜູ້ເວົ້າເຍີ້ຍດັ່ງນີ້.

ກຳມະການປົກຄອງບ້ານໄດ້ບອກໃຫ້ປ້າແຈ່ມໄປ ຮຽນຫນັງສືຊຶ່ງຈັດຂຶ້ນເພື່ອສອນຜູ້ໃຫຍ່ທີ່ບໍ່ຮູ້ຫນັງສື ແຕ່ປ້າກໍປະຕິເສດໂດຍກ່າວວ່າ:

– " ເຖົ້າແກ່ແລ້ວ ຮຽນໄປເຮັດຫຍັງ ? ເຈົ້ານາຍເພີນກໍເປັນຫມົດແລ້ວ ".

ມີເທື່ອຫນຶ່ງປ້າໄດ້ຮັບຈົດຫມາຍຈາກບ້ານເດີມ ເປັນຈົດຫມາຍຂອງນ້ອງສາວຊຶ່ງກໍແກ່ແລ້ວ ອາຍຸຫລຸດປ້າພຽງສອງປີ. ເຖິງຈະເປັນຈົດຫມາຍຖາມສຸກທຸກທຳມະດາ ແຕ່ກໍມີຄວາມຫມາຍສຳຄັນເພາະໃນຈົດ ຫມາຍ ນັ້ນ ນ້ອງ ສາວເປັນຜູ້ຂຽນເອງ ແລະ ວ່າປູ່ຊົນນະບົດບ້ານເດີມຂອງປ້າແຈ່ມ ກຳລັງຟົດຟື້ນໄປດ້ວຍຂະບວນປະຊາສຶກສາ, ບັນດາຍິງຊາຍເຖົ້າແກ່ທັງຫລາຍພາກັນຮຽນຫນັງສື ຢ່າງເປັນຂະ

ບວນ ນ້ອງສາວຂອງປ້າຂຽນໜັງສືເປັນແລ້ວ, ຕ່າງກັບແຕ່ກ່ອນຊຶ່ງເວົ້າກັນວ່າຕົວໜັງສືທໍ່ຄວາຍກໍບໍ່ຮູ້ຈັກ.

ພວກລູກໆ ແລະ ຜົວກໍໄດ້ບອກໃຫ້ປ້າແຈ່ມ ໄປ ຮຽນໜັງສືນຳໝູ່ ເພາະເປັນໂອກາດດີແລ້ວ, ການສຶກສາໄດ້ເປີດກ້ວາງສຳລັບທຸກຄົນ.

– " ແມ່ຊິບໍ່ອາຍເຂົາບໍ່ ! ປູ່ບ້ານບອກເຂົາກໍຮຽນ ແລະ ອ່ານຫນັງສືເກືອບເປັນຫມົດທຸກຄົນ. ເບິ່ງອາຈັນກໍຍັງຂຽນຫນັງສືເປັນແລ້ວສົ່ງຈົດຫມາຍມາຫາແມ່, ອາຈັນລາວແຮງຊິກ້າວຫນ້າລະບັດນີ້. ໂລກເພີ່ນກ້າວຫນ້າໄປຕາມກົດເກນ ແຕ່ແມ່ຊ້ຳຖຽຫລັງຊິເປັນບໍ ? " ລູກສາວກົກເວົ້າຈົນໃຫ້ແມ່ໄປຮຽນຫນັງສື. –

ປ້າແຈ່ມຄຶດຢູ່ຫລາຍມື້, ຄຶດເຫັນເລື່ອງເກົ່າໆ ທີ່ຕົນເອງຕົກໂງ່, ທີ່ຕົນເອງຖືກເວົ້າຂ້ອນ ແລະ ເຫັນວ່າໃນລະບອບນີ້ ຕົນເອງຍັງບໍ່ກ້າວທັນໝູ່ທັງທີ່ໄດ້ສະໜັບສະໜູນແລະອອກແຮງຊຸກຍູ້ລະບອບໃໝ່ຕະຫລອດມາ.ຄຶດເຈັບໃຈທີ່ຕົນເອງເປັນຕົວຕະຫລົກ ໃຫ້ເຂົາເວົ້າຫົວກັນບັນດອງໄປທົ່ວບ້ານ. ໃນທີ່ສຸດປ້າແຈ່ມກໍຕັດສິນໃຈເດັດຂາດລົບລ້າງຄວາມ ບໍ່ ຮູ້ ຫນັງສືໃຫ້ຕົນເອງ ໂດຍໄປສະໝັກເຂົ້າປະຊາ

ສຶກສາຊຶ່ງກຳມະການປົກຄອງບ້ານຈັດຂຶ້ນ, ການຮຽນແມ່ນຕັ້ງຕົ້ນ ໕ ໂມງ ແລງຮອດ ໗ ໂມງ.

ບົດຮຽນທີ່ໜຶ່ງ ແມ່ນຫັດອ່ານ ກໍ ອະ ກະ-ກໍ ອາ ກາ, ຫັດອ່ານແລ້ວກໍຫັດຂຽນ. ປ້າແຈ່ມອ່ານອອກສຽງດັງໆ ພ້ອມກັບໝູ່ ຕໍ່ຈາກນັ້ນຄູກໍໃຫ້ປ້າຂຽນ. ການຫັດອ່ານ ແລະ ຫັດຂຽນໃນບົດຮຽນທຳອິດດຳເນີນໄປໜຶ່ງຊົ່ວໂມງກໍເລີກ. ນັກຮຽນປະຊາສຶກສາມີທັງໝົດ ໓໒ ຄົນເປັນແມ່ຍິງສ່ວນຫລາຍຊຶ່ງອາຍຸກາງ ໓໐ ປີແລ້ວ ກ່ອນຈະຈາກກັນໄປສູ່ເຮືອນໃຜເຮືອນລາວ ມີຜູ້ເວົ້າວ່າປ້າແຈ່ມເປັນຕົວເດັ່ນໃນບົດຮຽນທີ່ໜຶ່ງ ເພາະອ່ານອອກສຽງດັງ ແລະ ຂຽນຕົວໜັງສືໄດ້ງາມກ່ອນໝູ່.

ນີ້ຕໍ່ມາແມ່ນ ຮຽນບົດຮຽນທີ່ສອງ ດໍ ອະ ດະ - ດໍ ອາ ດາ-ກໍ ອິ ກິ - ກໍ ອີ ກີ. ຈາກບົດ ນີ້ສູ່ ບົດຮຽນໃໝ່ຕໍ່ໄປເລື້ອຍໆ ໂດຍຮຽນມື້ລະບົດ.

ໃນບົດທີ ໒໔ ເວົ້າວ່າ: ເພີນວ່າຖີນຖານບ້ານເຮົາຈະເລີນໄດ້ກໍຕໍ່ເມື່ອຄົນເຮົາພາກັນຮ່ຳຮຽນໜັງສື ໃຫ້ອ່ານລ່ຽນຂຽນເປັນ ລ້າງສິ່ງຊ້າຂ້າສິ່ງໂງ່ ຂອງຮ່ອງຮຽທີ່ເກົ່າແກ່ໃຫ້ສູນສ້ຽງໄປ ເພື່ອສ້າງສາດິນແດນ ອັນເປັນທີ່ຫວງແຫນ

ຂອງເຮົາ.

ນອກຈາກອ່ານປື້ມແລ້ວ ຄູຍັງເວົ້າວ່າ:

– "ຮຽນໜັງສືແມ່ນຮັກຊາດ–ຮຽນເກັ່ງແລ້ວຊາດຮັກ".

ທີ່ເວົ້າແນວນີ້ ຄູອະທິບາຍວ່າຜູ້ໃດຮຽນໜັງສືເກັ່ງ ຮຽນຮູ້ວິທະຍາການໄດ້ສູງ ເພື່ອມາຮັບໃຊ້ປະເທດຊາດ ດັ່ງນີ້ຊາດບ່ອນຕ້ອງການ ບ່ອນຮັກແພງ ແລະ ຕີລາຄາສູງຄົນທີ່ຮຽນເກັ່ງ.

ປະຕິບັດຕາມຄຳເວົ້ານີ້ ປ້າແຈ່ມຕັ້ງໃຈຮ່ຳຮຽນຢ່າງເອົາຈິງເອົາຈັງ ໃຈໜຶ່ງແມ່ນຢາກລຶບລ້າງການເວົ້າເຍີ້ງເວົ້າສຽດສີຂອງຄົນທັງຫລາຍ. ອີກໃຈກນຶ່ງແມ່ນເພື່ອຈະໄດ້ອ່ານເອກະສານ. ການຮ່ຳຮຽນການເມືອງນັ້ນໃຫ້ລະອຽດແທ້ແລ້ວ ແມ່ນວ່ອງອ່ານໄປ ພິຈາລະນາໄປ ຈຶ່ງເຂົ້າໃຈເຖິງເນື້ອໃນ.

ປ້າແຈ່ມບໍ່ແມ່ນ ຄົນປຶກໜາ ປ້າມີຫົວວ່ອງໄວ ລະຫລຽວສະຫລາດ ດັ່ງນີ້ການຮຽນປະຊາສຶກສາພຽງສາມເດືອນປ້າກໍຂຽນໄດ້ໄວ ອ່ານອອກໄດ້ລ່ຽນ ປ້າບ່ຽນໄປສູ່ຄວາມກ້າວໜ້າຢ່າງບໍ່ຢຸດຢັ້ງ.

– " ເປັນຄົນຕາບອດມາຕັ້ງ ໔໒ ປີນີ້ "ຜົວເວົ້າປອກ.

-" ບໍ່ດຽງ, ແຕ່ດຽວນີ້ລະວັງເນີ້ ມີຈິດຫນາງລັບໆລີ້ໆ ແລ້ວຮີບຈູດ ຖິ້ມ". ປ້າເວົ້າເຕືອນຜົວແບບປອກຫລົບ.

ການອ່ານອອກຂຽນໄດ້ ເຮັດໃຫ້ປ້າແຈ່ມພາກພູມໃຈ ແລະ ມັກຄົ້ນຫາແຕ່ປື້ມມາອ່ານເພື່ອປະດັບສະຕິປັນຍາ. ມັນຄືກັບວ່າປ້າໄດ້ຄົ້ນພົບໂລກໃຫມ່ ໂລກທີ່ເຕັມໄປດ້ວຍຄວາມ ມະ ຫັດ ສະ ຈັນ ປ້າໄດ້ມີຫູຕາແຈ້ງໃສຂຶ້ນຫລາຍຮ້ຽ ຫລາຍພັນຕໍ່.

ມື້ຫນຶ່ງ ປ້າແຈ່ມອອກຈາກເຮືອນແຕ່ເດິກ ມຸ່ງໜ້າຈະໄປຄິວຈອດລົດຢູ່ແຖວນອກເມືອງ ເພື່ອຊື້ເຄື່ອງຢູ່ຂອງກິນ ຊຶ່ງຊາວຊົນນະບົດໃສ່ລົດມາແຕ່ບໍ່ທັນແຈ້ງ. ພໍອອກຫວິດປະຕູບ້ານ ປ້າໄດ້ເຫັນໃບປິວ ມີ-໔ ໃບຂອງພວກປະຕິການ ທີ່ຫວ່ານປຸກລຸກປະຊາຊົນ ໃຫ້ຕໍ່ຕ້ານລະບອບໃຫມ່ແລະ ຍົວະໃຫ້ຄົນໂຕນຫນີໄປຝັ່ງໄທ. ປ້າຮີບຟ້າວນຳເອກະສານ ດັ່ງກ່າວໄປແຈ້ງຫົວຫນ້າຫນ່ວຍ ຫົວຫນ້າຄຸ້ມແລ້ວກໍປະທານບ້ານ. ໃນຕອນເຊົ້າຂອງມື້ນັ້ນອຳນາດປົກຄອງທ້ອງຖິ່ນຟ້າວຕີກອງປະຊຸມແລ້ວ ແຈ້ງໃຫ້ປະຊາຊົນຊອກຜັບ ເອົາໃບປິວນັ້ນເພື່ອທຳລາຍຖິ້ມ. ການປະຕິບັດງານກຳຈັດໃບປິວ ເປັນໄປຢ່າງຟົດຟອງຄະນອງບ້ານ.

ປ້າແຈ່ມປ່ຽນໃຈບໍ່ໄປຄິວລົດ ຊື້ເຄື່ອງກິນທັງນີ້ກໍເພື່ອຈະໄດ້ສຸມກຳລັງໃສ່ຊອກຫາໃບປິວ. ທຸກຄົນເວົ້າແຕ່ຊື່ປ້າແຈ່ມ ເພາະປ້າແຈ່ມເອງເປັນຜູ້ພົ້ ໃບປິວເຖື່ອນດັ່ງກ່າວ ແລະ ໄປແຈ້ງອຳນາດການປົກຄອງທ້ອງຖິ່ນກ່ອນຫມູ່.

ຈາກຜົນງານນີ້ເອງ ປ້າແຈ່ມຈຶ່ງໄດ້ລຶບລ້າງການຖືກຫຸ່ມປຽດຫຍາມຂອງຄົນທັງຫລາຍທີ່ມີຕໍ່ປ້າ ໃນການບໍ່ຮູ້ຫນັງສື. ດຽວນີ້ປ້າແຈ່ມ ແຈ່ມສົມຊື່ແລ້ວ

ເລືອງສັ້ນ:

# ແຫວນ ເພັດ ຂອງ ແນນ ຊີ

**ໂດຍ: ອຸທິນ ບຸນຍາວົງ**

ແນນຊີເປັນແມ່ຍິງລາວ ແຕ່ຊື່ອາເມລິກາ.

ຄວາມຈິງນັ້ນ ນາງຊື່ວ່ານວນສີ ແຕ່ມີຜົວອາເມລິກາ ຜົວຂອງນາງອອກສຽງຍາກ ເວລາເອີ້ນຊື່ນວນສີ ເລີຍເອີ້ນເປັນແນນຊີ, ດົນນານເຂົ້າຊື່ແທ້ຂອງນາງກໍ່ຖືກລືມ.

ສ່ວນນາງເອີ້ນຜົວວ່າເອັດດີ້, ຈະວ່າເອັດດີ້ເປັນຜົວຂອງນາງກໍ່ບໍ່ຖືກຄັກເພາະກ່ອນໜ້ານີ້, ນອກຈາກຄົນຕັດຫຍ້າກັບເມັຽເຊືອງເຮັດໜ້າທີ່ເປັນຄົນຮັບໃຊ້ ແລະ ຄົວກິນແລ້ວ ກໍ່ເຄີຍມີແມ່ຍິງມາຢູ່ເຮືອນຫລັງນີ້ນຳໜໍ, ມີທັງຍິງ ຈີນ, ຫວຽດນາມ, ຂະແມ, ໄທດຳ, ໄທ. ແຕ່ລະຄົນຢູ່ໄດ້ສີ-ຫ້າເດືອນກໍ່ຫາຍຕົວໄປ, ແລະ ສຸດທ້າຍແມ່ນຍິງລາວຄື ແນນຊີນີ້ເອງ.

ແຍບຊີເປັນແມ່ຮ້າງຝະລັ່ງມາກ່ອນ ເປັນດາວສັງຄົມຂອງນະຄອນວຽງຈັນ. ນາງປາກພາສາຝະລັ່ງໄດ້ດີ ສົມຄວນ, ປາກພາສາອັງກິດພໍຮູ້ເລື່ອງ, ເຕັ້ນລຳເກັ່ງ, ກິນເຫລົ້າກໍ່ເປັນ ແລະ ພິເສດກໍ່ຄື ນາງຕິດການພະນັນການຫລິ້ນໄພ້ຢ່າງຫນັກ ໂດຍສະເພາະແຕ້ມແດງ ແລັສດົບ ແລະ ໄພ້ຈົກກົ້ນ. ບາງເທື່ອນາງໄປຫລິ້ນໄພ້ຈົນຮອດສາມຄືນ ຈຶ່ງຕ່າວຄືນບ້ານ.

ຍ້ອນການຫລິ້ນໄພ້ ນາງກັບຜົວຝະລັ່ງຜິດຖຽງກັນເລື້ອຍໆ, ຈົນໃນທີ່ສຸດກໍ່ໄດ້ປະຮ້າງກັນ.

"ປະຜົວຝະລັ່ງເອົາຜົວອາເມລິກາກໍ່ຍັງໄດ້" ນາງເຄີຍເວົ້າດັ່ງນີ້.

ເປັນໄປຕາມຄວາມເວົ້າຂອງນາງແທ້, ເປັນແມ່ຮ້າງບໍ່ທັນເຖິງປີ ນາງກໍ່ໄດ້ຜົວອາເມລິກາ ເຮັດການປູອົງການຢູເສດ. ລູກຄົນຫນຶ່ງ ແລະ ຄົນດຽວທີ່ໄດ້ກັບຜົວຝະລັ່ງນັ້ນ ນາງຍົກໃຫ້ຜົວໄປ ຊຶ່ງຕໍ່ມາຜົວກໍ່ເອົາໄປນຳທີ່ປະເທດຝະລັ່ງ, ຂືນເອົາໄວ້ນາງກໍ່ຫນັກໃຈເພາະລູກຊອດມັກເຂົ້າກັບສັງຄົມລາວບໍ່ສະຫນິດຕິດແຫນ້ນ ແລະ ມັກຖືກຄົນເວົ້າໃສ່ວ່າ "ຝະລັ່ງຂີ້ນົກ"..

ນາງໄດ້ກັບຜົວອາເມລິກາແບບງ່າຍໆ ບໍ່ມີພິທີຕາມປະເພນີແຕ່ຢ່າງໃດ. ຄືທຳອິດນັ້ນນາງຖືກຂໍຮ້ອງຈາກເພື່ອນຍິງຄົນຫນຶ່ງໃຫ້ໄປເປັນຫມູ່ເພາະຖືກເຊີນໂດຍຄົນ ອາເມລິກາໄປຮ່ວມສະຫລອງວັນຄຣິສະມາດ. ໃນງານນີ້ນາງໄດ້ຮູ້ຈັກກັບເອັດດີ໊ ພະນັກງານອົງການປູເສດ. ເອັດດີ໊ແມ່ນຊື່. ສ່ວນນາມສະກຸນນັ້ນ ອອກສຽງລືບາກໆ ຊຶ່ງແມນຊີເວົ້າບໍ່ຖືກຈັກເທື່ອ ແລະນາງກໍບໍ່ສົນໃຈທີ່ໃດ. ຫລັງຈາກນັ້ນມາເອັດດີ໊ກໍມາຕິດແທດກັບນາງ ເຮັດປະຈົບປະແຈງ ເອົາໃຈທຸກຢ່າງ, ຊື້ຂອງຂວັນມາໃຫ້ ພາໄປກິນເຂົ້າຕາມຮ້ານອາຫານໃຫ່ຍໆ, ຈາກຮ້ານອາຫານກໍໄປນັ່ງດື່ມນ້ຳ ຟັງເພງຢູ່ໃນບາເຕັ້ນລຳ. ທຳອິດນາງກໍຊວນເອົາເພື່ອນຍິງໄປນຳ, ຕໍ່ມານາງເຫັນວ່າ ເອັດດີ໊ເປັນຄົນດີ ມີມາລະຍາດນຸ່ມນວນເປັນຫນ້ານັບຖືນາງກໍໄປນຳເອັດດີ໊ ຕາມລຳພັງເທື່ອທີສອງທີ່ນາງໄປຟັງເພງ ແລະ ເຕັ້ນລຳຢູ່ບາກັບເອັດດີ໊ ສອງຕໍ່ສອງເອັດດີ໊ກໍຊວນນາງໄປເຮືອນຂອງຫນໍ່ຫລັງຈາກທີ່ອອກຈາກບາເຕັ້ນລຳ ແລະ ໄດ້ດື່ມເຫລົ້າຊຶມໆ ຫລາຍເດີບແລ້ວ ນັບແຕ່ວັນນັ້ນແຫລະ ນາງກໍທຽວໄປເຮືອນຂອງເອັດດີ໊ເປັນປະຈຳ ແລ້ວຕໍ່ມາກໍຢູ່ເຮືອນຫລັງນີ້ເລີຍ.

ຖ້າວ່ານາງເປັນເມັຽເຊົາອາເມລິກາຈະຖືກກ່ວາບໍ.

ນາງເອົາຜົວໂດຽບໍ່ມີພິທີ ບໍ່ມີໃຜຮັບຮູ້ນຳ, ນາງມີເງິນໃຊ້ຈ່າຽບໍ່ອັ້ນ ຫາເຂົ້າແປ້ງແຕ່ງຕົວທັນສະໄໝເຂົ້າຮ້ານເສີມສວຽເປັນປະຈຳເກືອບທຸກມື້ຂີ່ລົດແອ່ນໄປແອ່ນມາເວົ້າຈາແປສແປສໃບໃບ.

ນອກຈາກເອົາເງິນໃຫ້ໃຊ້ຈ່າຽແລ້ວເອັດດີ້ຍັງມອບແຫວນເພັດໃຫ້ເມຽນຊີຫນຶ່ງວົງ.

-"ໄອຊື້ມາຈາກບາງກອກ ລາຄາພັນດອນລາ ປະມານສອງຫມື່ນບາດ,

ຂໍມອບໃຫ້ນາຽດຽ ໃນໂອກາດທີ່ເຮົາເອົາກັນເປັນ ຜົວເປັນເມັຽ "ເຂົາເວົ້າຄວາມລາວປົນອັງກິດ.

ນາງເອົາຜົວໃໝ່ ແຕ່ນິໄສເກົ່າຍັງບໍ່ປະຖິ້ມເທື່ອ ນັ້ນຄືນິໄສມັກຫລິ້ນໄພ້, ແຖມຍັງຫລິ້ນຫນັກເຂົ້າໄປຊັກໄຊ້ເພາະນາງມີເງິນ, ມີເງື່ອນໄຂສະດວກເຊັ່ນວ່າເມື່ອຜົວໄປ ການນາງກໍບໍ່ມີວຽກຫຍັງເພາະວຽກເຮືອນການຊານແມ່ນມີຄົນໃຊ້ເຮັດແທນຫມົດແລ້ວ. ດັ່ງນັ້ນນາງຈຶ່ງໃຊ້ເວລາໃຫ້ຫມົດໄປດ້ວຽການຫລິ້ນໄພ້. ທຳອິດເອັດດີ້ກໍບໍ່ປາກໃຫ້ນາງຫລິ້ນແຕ່ບອກເທົ່າໃດນາງກໍບໍ່ຟັງ, ເອັດດີ້ເລີຍປ່ຽໃຫ້ ນາງ ຫລິ້ນ

ຕາມໃຈ. ເບິ່ງຄືວ່າ ເອັດກີ້ພໍໃຈຊ້າທີ່ເມັຽຕິດໄພ້ເພາະໝໍເອງກໍ່ສະໜຸກຢູ່ສະໜຸກໄປ, ເຂົ້າທຳນອງໄປບໍ່ຄາ ນາບໍ່ຂ້ອງ ເພາະເມັຽບໍ່ມັກຢູ່ບ້ານ ມີແຕ່ໄປປະຈຳຢູ່ວົງໄພ້, ເຫັນເປັນດັ່ງນີ້ໝໍກໍ່ແຮ່ງເອົາເງິນໃຫ້ເມັຽໄປຫລິ້ນເທື່ອລະ ໒໐-໓໐ ພັນກີບ. ແນ່ນອນລະ ເງິນຈຳນວນທໍ່ນີ້ບໍ່ມີຄວາມໝາຍຫຍັງສຳລັບເອັດກີ້. ການທີ່ເມັຽຢູ່ເຮືອນຢູ່ຊານ ພຸ້ນເປັນການອຶດອັດໃຈສຳລັບໝໍ. ທີ່ແມນຊີຕິດໄພ້ນັ້ນກໍ່ຄືດັ່ງຄົນຕິດຢາເຮໂຣອິນພຽງແຕ່ເອົາຢາໃຫ້ປະຈຳ ຜູ້ຕິດເຮໂຣອິນກໍ່ຈະເຮັດທຸກຢ່າງຕາມຄຳສັ່ງ.

ເຮືອນທີ່ສອງຜົວເມັຽຢູ່ນີ້ເປັນເຮືອນເຊົ່າ. ເອັດກີ້ເຮັດສັນຍາເຊົ່າເປັນເວລາສາມປີ, ຄ່າເຊົ່າເດືອນລະ ໑໕໐ ດອນລາ. ຕອນທີ່ແມນຊີເລີ່ມຕົ້ນມາຢູ່ນັ້ນ ຍັງອີກໜຶ່ງປີ ກໍ່ຈະຈຸບກຳນົດການເຊົ່າ. ການເປັນເມັຽເຊົ່າໃນເຮືອນເຊົ່າດຳເນີນໄປໄດ້ຫ້າເດືອນເຕັມ ກໍ່ເກີດມີການປະທ້ວງໃຫ້ຍຸບເລີກ ອົງການປູເສດ. ພະນັກງານທີ່ເປັນຄົນອາເມລິກາຖືກພະນັກງານຄົນລາວ ກັບນັກຮຽນ ນັກສຶກສາ ຂັບໄລ່ໄສສົ່ງອອກນອກປະເທດ ໃນນີ້ລວມທັງເອັດກີ້ນຳດ້ວຍ. ເຫດການນັ້ນສັບສົນອົນລະມ່ານ ຈົນເອັດກີ້ໄດ້ແຕ່ຫີບໜ່ວຍດຽວທໍ່ນັ້ນ,

ສິ່ງຂອງອື່ນໆ ໃຫ້ເນັ່ງຮັກສາໄວ້ຊານຊາ ແລະວ່າໃຫ້ຕິດຕາມໄປຫາປູ່ບາງກອກທີ່ຫລັງ.

ການຂັບໄລ່ ແລະ ປະນາມອາເມລິກາເປັນໄປຢ່າງເຄັ່ງຂຶມ ແລະ ເປັນຂະບວນໃດງສະເພາະຂະບວນນັກຮຽນ ນັກສຶກສາ.

" ຊີ. ໄອ. ເອ. ຕ້ອງອອກຈາກລາວ !"

–" ອາເມລິກາໜານພານຮີບໜີ !"

–" ພວກເຮົາບໍ່ຕ້ອງການອາເມລິກາ !"

–" ບໍ່ມີອາເມລິກາຊ່ວຍເຫລືອ ເຮົາກໍ່ຢູ່ໄດ້ !"

ສຽງຂັບໄລ່ ແລະ ປັ່ງດ່າປະນາມເຫລົ່ານີ້ ແບບຊີໄດ້ຍິນໄດ້ເຫັນແລ້ວ ນາງແຄ້ນເຄືອງໃນໃຈແທນຜົວ ແລະແທນອາເມລິກາທຸກຄົນ. ນາງເຮັດສົບເບະ ແລ້ວດ່າປູ່ໃນໃຈ:

–" ສູມັນເນລະຄຸນ! ເຂົ້າໃສ່ທ້ອງກໍ່ແມ່ນອາເມລິກາຊ່ວຍ, ເງິນແຕ່ລະກີບກໍ່ແມ່ນອາເມລິກາຊ່ວຍເຫລືອ ຊ່ວຍຄ້ຳປະກັນ. ມັນບໍ່ຄິດບະພວກຜີບ້ານີ້ !"

ນາງດ່າປູ່ໃນໃຈຍັງບໍ່ແລ້ວ ເວລາລົມກັບຄືນລົງແກ່ວນທີ່ເຊື່ອໃຈກັບໄດ້ ນາງກໍ່ປະນາມພວກນັກຮຽນ ນັກສຶກສາ

ແລະເວົ້າອ້າງຄຸນງາມຄວາມດີຂອງອາເມລິກາສະເຫມີໆ. ນາງຄຽດແຄ້ນແທນອາເມລິກາອີຫລີ.

ເອັດດີ້ໄປຮອດບາງກອກໄດ້ສິບກ່ວາມື້ ກໍສົ່ງຂ່າວມາວ່າເຂົາສະບາຍດີ ແລະ ຈະໄດ້ເດີນທາງຕໍ່ໄປຍັງສະຫະລັດອາເມລິກາໃນສອງສາມວັນ. ເຂົາບໍ່ເວົ້າເຖິງເລື່ອງຈະໃຫ້ນາງໄປຢູ່ນຳເລີຍ. ຈາກນັ້ນຂ່າວຂອງເອັດດີ້ກໍມິດໄປ.

ເວລາຜ່ານໄປຫ້າເດືອນ. ນາງຢູ່ແບບກຸ້ມຕົນເອງ ໂດຍເອົາເຄື່ອງຂອງມີຄ່າທີ່ຜົວ ປະໄວ້ໄປຂາຍພໍໄດ້ເງິນມາຊື້ຢູ່ຊື້ກິນສືບມື້ສືບວັນເຊັ່ນ: ເຄື່ອງຫລິ້ນແຜ່ນສຽງ, ເທບບັນທຶກສຽງ, ຈັກຊັກເຄື່ອງນຸ່ງ, ເຕົາລີດໄຟຟ້າ, ແຜ່ນສຽງ. ຫມົດເຄື່ອງເຫລົ່ານັ້ນນາງກໍເອົາຈອກແກ້ວ, ຖ້ວຍຊາມ, ເຫລົ້າຢາງດີທີ່ຍັງບໍ່ທັນໄຂເທື່ອ ຕະຫລອດຮອດເຄື່ອງນຸ່ງຫົ່ມຂອງເອັດດີ້ທີ່ປະໄວ້ໄປຂາຍ.

ນາງຄອຍຟັງຂ່າວຈາກເອັດດີ້, ຄອຍຖ້າປີ້ຍົນທີ່ເຂົາຈະສົ່ງມາໃຫ້, ນາງຍັງມີຄວາມຫວັງຍັງອຸ່ນໃຈເພາະຍັງມີແຫວນເພັດເມັດງາມ. ຖ້າວ່າເອັດດີ້ບໍ່ສົ່ງປີ້ຍົນມາໃຫ້ ນາງກໍຈະໂດນໄປໄທແລ້ວຂາຍແຫວນ ເພັດຊື້ປີ້ຍົນເດີນທາງໄປຫາ. ນອກຈາກແຫວນເພັດແລ້ວ ພາຍໃນເຮືອນກໍຍັງມີຊາລົງ

24/VII

ຊຸດຫນຶ່ງ, ແອເປັນສອງຫນ່ວຍ, ປີ່ນລົມສີຫ້າອັນ ຕູ້ເປັນຫນຶ່ງ ຕຸ້ຕຽງອີກຫລາຍອັນ. ຖ້າຂາຍສິ່ງເຫລົ່ານີ້ກໍຈະໄດ້ເງິນກ້ອນໃຫ່ຍສົມຄວນ. ດັ່ງນີ້ນາງຈຶ່ງບໍ່ອຸ່ນໃຈ, ພຽງແຕ່ຂາຍເຄື່ອງເລັກໆ ບ້າງໆ ໃຫ້ຫມົດໄປສາກ່ອນ, ຊຳຊາຖ້າຟັງຂ່າວຈາກຜົວ.

ເລື່ອງທີ່ຫນັກໃຈ ໃນການດຳເນີນຊີວິດຢູ່ໃນຄຸ້ມນີ້ກໍຄື : ການທີ່ຕ້ອງໄປຮ່ວມສຳມະນາຫລືປະຊຸມຢູ່ວັດ. ນາງເບື່ອຫນ່າຍຕໍ່ເອກະສານທີ່ພະນັກງານອົບຂວາງ ຫລື ກຳມະການປົກຄອງຫ້ອງຖິ່ນນຳມາອ່ານ ຫລື ຊີ້ແຈງໃນທີ່ປະຊຸມເພາະມັກມີແຕ່ການເຜີຍແບ ໂທດກຳຂອງຈັກກະພັດອາເມລິກາ, ມີແຕ່ການດ່າ ການປະນາມອາເມລິກາຢູ່ບໍ່ຂາດສົບຂາດປາກ. ນາງຟັງແລ້ວທົນຢູ່ວິດໆ ແລະ ປາກລຸກຫນີຈາກບ່ອນປະຊຸມໂລດ. ແຕ່ນາງກໍອົດໃຈໄວ້ແລ້ວນັ່ງເຮັດຫູບໍ່ໄດ້ຍິນຕໍ່ໄປຈົນເລີກປະຊຸມ.

ນາງຮູ້ສຶກເບື່ອ ຮູ້ສຶກລຳຄານອີຫລີ ຈົນຊິທົນບໍ່ໄດ້, ແລ້ວກໍຕັດສິນໃຈຈະໂຕນຂ້າມຟາກ. ນາງຈະຂາຍສິ່ງຂອງທີ່ເຫລືອຢູ່ເຮືອນເຊັ່ນ ຕູ້ເປັນ ໂຕະຕັ່ງ ປີ່ນລົມ ແອເປັນ ຊາລົງ ແລະ ສິ່ງຂອງໃຫ່ຍໆ ອື່ນໆ ເພື່ອ ໃຫ້ ໄດ້ເງິນ

ກ້ອນຫນຶ່ງໃຊ້ຈ່າງໃນການເດີນທາງ. ແຕ່ຄວາມຫວັງຂອງ ນາງກໍດັບວູບລົງ ເມື່ອເຈົ້າຂອງເຮືອນເຊົ່າມາຫາໃນວັນ ໜຶ່ງ.

– ເຄື່ອງເຫລົ່ານີ້ ເອົາໄປບໍ່ໄດ້ດີ, ເປັນເຄື່ອງປະຈຳ ເຮືອນມາແຕ່ເດີມ ມີບົ່ງໄວ້ຢູ່ໃນສັນຍາເຊົ່າຫມົດ ເຈົ້າຂອງ ເຮືອນບອກ.

– " ຕູ້ເປັນ ປີນລົມເຫລົ່ານີ້ແມ່ນຫມົດຫວະ? "

– " ແມ່ນຫມົດ, ລວມທັງຕູ້ຕຽງນອນ, ໂຕະຕັ່ງ ແອ ເປັນຊາລົງໃນຫ້ອງຮັບແຂກ."

– " ເອັດດີບອກຂ້ອຍວ່າແມ່ນຂອງລາວຊື້ມາວ່າຊັ້ນ ".

– " ບໍ່ແມ່ນ, ເປັນເຄື່ອງປະຈຳເຮືອນແຕ່ເດີມ. ເບິ່ງ ຫລັກຖານໃນໃບສັນຍາເຊົ່ານີ້" ເຈົ້າຂອງເຮືອນເອົາໜັງສືສັນ ຍາໃຫ້ນາງເບິ່ງ ນາງອ່ານແລ້ວກໍຫນ້າເຫລືອງມ້ານ.

– " ອີກສອງເດືອນກໍຊິຈຸບກຳນົດເຊົ່າຫວະນີ້! " ນາງເວົ້າ ຂຶ້ນ.

– " ແມ່ນລະ ມັນໃກ້ຊິຫມົດກຳນົດ ຂ້ອຍເລີຍມາເບິ່ງ ເຮືອນ, ເຈົ້າຊິບໍ່ເຊົ່າຕໍ່ບໍ ? "

– " ຍັງບໍ່ທັນຮູ້ເທື່ອ. ມື້ຫນ້າຈຶ່ງເວົ້າກັນສາ "

ຫລັງຈາກທີ່ເຈົ້າຂອງເຮືອນເຊົ່າໄປແລ້ວ ນາງນັ່ງຊຶງ, ຄຶດຫຍັງບໍ່ອອກ ມັນຕັນໄປຫມົດ. ເງິນສົດໃນມືກໍເກືອບຊິບໍ່ເຫລືອແລ້ວ. ຊ້ຳຕື່ມໄປກວ່ານັ້ນຄົນທີ່ແລ່ນຕິດຕໍ່ເພື່ອລັກພາ ນາງໂຕນຂ້າມຟາກນັ້ນ ໄດ້ມາບອກວ່າ ໃຫ້ເລື່ອນໄປໂດຍບໍ່ມີກຳນົດເພາະໄທອັດຊາຍແດນ ຫລັງຈາກນີ້ກໍລະນີບິງ ກັບປູ່ດອນຕ່ຳ. ນາງເປັນກະວົນກະວາຍ ໃຈຄໍບໍ່ເປັນປົກກະ ຕິ ທັງປາກຮ້ອງທັງປາກໄຫ້ກໍທໍ່ກັນ.

ນາງຢູ່ເຮືອນເຊົ່າຕໍ່ໄປໄດ້ອີກເດືອນປາຍ, ຄຍຫາໂອກາດທີ່ຈະໂຕນຫນີຂ້າມຟາກ ແຕ່ໂອກາດກໍບໍ່ອຳນວຍຈັກເທື່ອ, ສ່ວນເງິນກໍເຫລືອນ້ຍລົງເລື້ອຍໆຈົນຮອດກົນສຸດທ້າຍ.

ໃນທີ່ສຸດ ນາງກໍຕັດສິນໃຈເອົາແຫວນເພັດໄປຂາຍ. ມື້ນັ້ນ, ນາງແຕ່ງໂຕອອກຈາກບ້ານແຕ່ເຊົ້າມຸ້ງຫນ້າສູ່ຮ້ານຂາຍເຄື່ອງເພັດນິນຈິນດາ ແຄມຖະຫນົນສາມແສນໄທໃກ້ກັບບໍລິເວນທາດດຳ. ນາງບອກຈຸດປະສົງແກ່ເຈົ້າ ຂອງຮ້ານແລ້ວຍື່ນແຫວນເພັດໃຫ້. ເຈົ້າຂອງຮ້ານພິຈາລະນາເບິ່ງເຫິງສົມຄວນໂດຍມີເຄື່ອງມືຊະນິດຫນຶ່ງກວດທົດສອບ, ແລ້ວກໍເວົ້າຂຶ້ນວ່າ:

– " ບໍ່ຮັບຊື້ດອກ. ແຫວນເຈົ້າແມ່ນເພັດບໍ່ດີ ເພັດ

ປອມ".

ໄດ້ຍິນດັ່ງນັ້ນ ນາງເກືອບບໍ່ເຊື່ອຫູຕົນເອງ ແລ້ວເວົ້າຂຶ້ນຢ່າງແຮງ.

– "ແຫວນເພັດແທ້ໆ ຂ້ຽຊື້ມາແຕ່ບາງກອກ ຕັ້ງສອງຫມື່ນບາດພຸ້ນນະ!"

– "ເຈົ້າຊື້ສອງຫມື່ນບາດແທ້ ແຕ່ມັນແມ່ນເພັດປອມ ເຈົ້າຖືກເຂົາຕົ້ມ".

ນາງຮູ້ສຶກຫນ້າມືດເວົ້າຫຍັງບໍ່ອອກ, ແລ້ວກໍຍ່າງອອກຈາກຮ້ານໄປໂດຍບໍ່ສັ່ງລາຊ້ຳ. ນາງພົບກັບບັນຫາຫນັກຂອງຊີວິດ, ຄິດອຸກເອົ້າ, ມຶນເມົາໄປທົ່ວສະຫມອງ, ນາງຮູ້ສຶກຂົມຂື່ນທີ່ສຸດ, ຄິດປາກກາງໃຫ້ມັນແລ້ວມັນລອດໄປ. ນາງຄຶດຫາເອັດດີ້ແລ້ວແຄ້ນ ຈື່ງປາກຂ້າປາກແກງ ປາກຄັ້ນຄໍເຂົາໃຫ້ຕາງຄາມື ທີ່ມາຕົວະຕົ້ມຫລອກລວງ ເອົາແຫວນເພັດປອມມາໃຫ້.

ນາງຍ່າງກັບບ້ານດ້ວຽຄວາມຮູ້ສຶກຫມົ່ນຫມອງ ດ້ວຽຄວາມກິນແຫນງ. ນາງມາສຳນຶກໄດ້ວ່າ ໄດ້ຕົກເປັນນາງບຳເລີ ເປັນເມັຽເຊົ່າລາຄາຖືກ ແມ່ນແຕ່ຄ່າດອງກໍບໍ່ໄດ້ຈັກກີບ. ນາງເຫັນ ວ່າ ເອັດ ດີ້ ເປັນນັກບຸນໃຈບາບ ເປັນ

ຊີໄອ.ເອ. ຕົວຮ້າຍຂາດ.

ແບນຊີ ຕັດສິນໃຈເດັດຂາດ ຈະບໍ່ໂດນຫນີຈາກບ້ານເກີດເມືອງນອນ ໄປຫາຜູ້ທີ່ເອີ້ນວ່າເອັດດີ້ ຫລື ໄປຫາໃຜກໍ່ຕາມທີ່ຢູ່ຕ່າງປະເທດ.ນາງຈະກັບຄືນໄປບ້ານເດີມທີ່ແຂວງສະຫວັນນະເຂດ, ຈະກັບໄປເປັນນາງນວນສີຜູ້ເກົ່າ ເຊົາແລ້ວການໃຊ້ຊີວິດແບບແບນຊີ,ເພາະນາງໄດ້ຮັບບົດຮຽນອັນເຈັບແສບທີ່ສຸດ ແລະ ຈະຈຳໃສ່ໃຈໄວ້ບໍ່ມີວັນລືມ.

ເລື່ອງສັ້ນ:

# ຄົນງາມ

**ໂດຍ: ອຸທິນ ບຸນຍາວົງ**

ລຳວົງຜ່ານໄປແລ້ວສິບສອງຮອບ ແຕ່ແພງຄຳບໍ່ໄດ້ຟ້ອນຈັກເທື່ອ. ຮອບທີ່ສິບສາມກໍກຳລັງຟ້ອນກັບປູ່ເປັນຄືບໆ!

ບາງບັ້ງປູ່ແປ້ນມ້າໃກ້ກັບກອງເຊັງຫລືຄະນະນັກຮ້ອງນັກດົນຕີທີ່ກຳລັງສົ່ງສຽງດັງອຶກກະທຶກ, ເປັນບາງສາວຄົນດຽວທີ່ເຫລືອຄ້າງ, ໝາຍຄວາມວ່າບໍ່ມີຜູ້ເອົາພວງມະໄລມາຈອງໄປຟ້ອນຄືສາວອື່ນໆ. ບາງບັ້ງຟັງດົນຕີ ຟັງເພງສຽງໂອກວາກຈາກນັກຮ້ອງຜົມຍາວ ສົ້ງຂາຊ້າງທ່າທາງກະລິກກະລົນປົນນິໄສບ້າ.

ບໍ່...ບໍ່ແມ່ນແພງຄຳຟັງ ດ້ວຍ ຄວາມ ຊາບ ຊຶ້ງ ສົນ ໃຈດອກ ແຕ່ບາງຈຳໃຈຟັງ, ເຖິງບໍ່ຟັງມັນກໍເຂົ້າຫູເອງ, ບາງ

ຟ້ອນເພື່ອຂ້າເວລາ, ຟ້ອນເພາະນາງບໍ່ມີຫຍັງເຮັດ ມີແຕ່ນັ່ງ ໂຈ່ມໂປ່ມ, ຟ້ອນເພື່ອແກ້ເຂີນເພາະນາງບໍ່ໄດ້ອອກໄປຟ້ອນ ຄືໝູ່.

ນາງນັ່ງເກືອບບໍ່ເຫັນຫຍັງບໍ່ຄຶງເບິ່ງພວກດົນຕີເສບ ເພງ ເກືອບບໍ່ພັບຕາ, ຖ້າມີຜູ້ສັງເກດແລ້ວກໍອາດເວົ້າວ່າ ນາງ ຄືຄົນໂງ່ຊ້າ ຄືຄົນບ້ານນອກທີ່ບໍ່ເຄີຍເຫັນ ບໍ່ເຄີຍໄດ້ຍິນດົນຕີ ສະໄໝອະພອນໄລ. ດົນໆນາງກໍຫລຽວໄປເບິ່ງໝູ່ທີ່ກໍາ ລັງຟ້ອນຢູ່ດ້ວຍຄວາມຮູ້ສຶກຕ່ຳຄ້ຽງບັ້ງໃຈ.

ນັ້ນ...ລັດຖາພອນກໍາລັງຟ້ອນອອກໜ້າໝູ່, ນາງຍິ້ມ ແຍ້ມ ທ່າທາງຂວດອີງແດ່ຈັກໜ້ຽເພາະເປັນສາວງາມ ແລະ ເປັນເຈົ້າຂອງພວງມະໄລໃນຮອບນີ້, ໝາຍຄວາມວ່າ ຜູ້ເໝີາຣອບນີ້ງຊື້ເອົານາງໃຫ້ໄປຢືນຢູ່ ກາງ ເວ ທີ ເພື່ອ ມອບພວງມະໄລໃຫ້ແກ່ຜູ້ເໝີາ. ນາງເປັນເຈົ້າຂອງພວງ ມະໄລມາແລ້ວສາມຮອບ.

ຖັດຈາກລັດຖາພອນແມ່ນສອນນະພາ ສາວງາມອີກ ຄົນໜຶ່ງຊຶ່ງໃຜໆ ກໍໝາຍຕາໄວ້ໃຫ້ເປັນເຈົ້າຂອງພວງມະ ໄລ. ນາງຟ້ອນທຸກໆຮອບ ບໍ່ມີເວັ້ນວ່າງ. ຄົນທີ່ຟ້ອນແອ່ນ ປານນົກຍູງລໍາແພນ ເປັນເຈົ້າສາຍຕາຂອງບ່າວເທີ່ມບ່າວ

ແກ່ອີກຫລາຍລາຍຫນຶ່ງ ກໍແມ່ນຟ້າສີຈິດ, ຕິດຕາມດ້ວຍ ອອນອະນົງ ສາວຄົວກິ່ງກັງຄົມ ສົມເປັນດາລາປະຈຳຮ້ານ ລຳວົງເພາະນາງເປັນເຈົ້າຂອງພວງມະໄລແລ້ວຫົກ ຮອບ. ຄົນອື່ນໆ ນັ້ນເປັນເຈົ້າຂອງພວງມະໄລພຽງຜູ້ລະຫນຶ່ງຮອບ ສອງຮອບເທົ່ານັ້ນ,ສ່ວນແພງຄຳບໍ່ພຽງແຕ່ບໍ່ໄດ້ເປັນເຈົ້າຂອງ ພວງມະໄລຈັກຮອບ, ນາງຍັງບໍ່ມີຜູ້ໃດມາໂຄ້ງເອົາໄປຟ້ອນ ແມ່ນແຕ່ຮອບດຽວ ດັ່ງນັ້ນ ນາງຈຶ່ງເປັນບຸກຄົນທີ່ຫມູ່ ນາງ ສາວດ້ວຍກັນເວົ້າຂ້ອນເວົ້າເຍີ້ຍ ຫລືເປັນວົວກະຫລົກໃນບົດ ສົນທະນາຂອງຫມູ່ເພື່ອນ. ລັດດາພອນຈະເບິ່ງຫນ້າສອນ ນະພາແລ້ວຍິ້ມຫົວທັງຫລຽວມາເບິ່ງແພງຄຳ ຄື ດັ່ງຈະ ເວົ້າກັບວ່າ: " ແພງຄຳບໍ່ໄດ້ຟ້ອນນຳຫມູ່ອີກແລ້ວຮອບນີ້, ເປັນຕາຫົວເນາະ!" ຫລືອອນອະນົງຈະຫົວຂຶ້ນຄ່ຽງໆກັບໝູ່ ແລ້ວເວົ້າຂຶ້ນວ່າ:

" ນັ້ງຄົບບຸງອີກການເຖິງແພງຄຳນະ ຜູ້ຊາຍນີ້ກໍຈັງ ແມ່ນໃຈດຳນໍ້ ບໍ່ຈອງເອົາລາວໄປຟ້ອນ ຈັກຮອບພໍປືດແຄ່ງ ປືດຂາແດ່ ".

ແມ່ນແທ້...ທີ່ວ່າແພງຄຳບໍ່ງາມຄືຫມູ່, ແຕ່ງຕົວບໍ່ ທັນສະໄໝເຕັ້ນລຳແບບສາກົນກໍບໍ່ເປັນ. ບໍ່ເກັ່ງຄື ນັນດາ

ນາງສາວທັງຫລາຍທີ່ທ່າທາງກະແດະ. ແດະ ແລະໄປ ບ່ອນນັ້ນບ່ອນນີ້. ແພງຄຳສະງ່ຽມຈຽມຕົວ ບໍ່ກະໂດດໂລດເຕັ້ນ ບໍ່ເວັ່ນໃນສັງຄົມເຮຮາ.

ນາງເປັນລູກຂອງຄົນທຸກຍາກ ຕ້ອງຊ່ວຍວຽກແມ່ເຮັດເຂົ້າຫນົມຄົກຂາຍ, ຕ້ອງເບິ່ງເຍງນ້ອງຕັ້ງຫົກຄົນ. ພໍ່ຂອງນາງເປັນຊ່າງໄມ້,ຖານະຂອງຄອບຄົວບໍ່ດີເລີຍ,ຂາດໆເຂີນໆ ເງິນຊິ ຊື້ເຄື່ອງນຸ່ງງາມໆບໍ່ມີນຳເພິ່ນ.

ສ່ວນບັນດາສາວອື່ນໆໂດຍສະເພາະທີ່ກ່າວນາມມາແລ້ວລ້ວນແຕ່ເປັນລູກຜູ້ຮັ່ງມີ, ລູກເຈົ້າລູກນາຍ, ຈັບຈ່າຍເງິນບໍ່ອັ້ນ ຕັດເສື້ອຕັດສິ້ນ ແລະ ໃສ້ງຂາຊ້າງເປັນປະຈຳທຸກເດືອນ ປານວ່ານຸ່ງເທື່ອດຽວສອງເທື່ອແລ້ວໂຍນຖິ້ມໂລດ. ສ່ວນແພງຄຳນັ້ນ ປີຫນຶ່ງຈຶ່ງໄດ້ຕັດເສື້ອຍຽງຫນຶ່ງ ຫລືສອງໂຕເທົ່ານັ້ນ ດັ່ງນີ້ນາງຈຶ່ງນຸ່ງແຕ່ເຄື່ອງເກົ່າ ເບິ່ງເປັນກໍສ່ຳເນື່ອສົມທຽບໃສ່ສາວອື່ນໆໃນຮ້ານລຳວົງ, ຜູ້ຊາຍຈຶ່ງບໍ່ສົນໃຈ ບໍ່ຈອງເອົານາງໄປຟ້ອນ ປ່ຽໃຫ້ນາງນັ່ງດຽວດາຍກາຍເປັນຄົນທີ່ເຂົາລືມ ຄົນທີ່ເຂົາປະປ່ຽຖິ້ມ ເປັນຄົນທີ່ຫນ້າສົງສານ.

– " ກໍດີ...ບໍ່ຖືກບົ່ງໂຕອອກໄປຢືນຢູ່ກາງເວທີໃຫ້ຄົນ

ເບິງ ປານວ່າຈ່າວຂຽງສິນຄ້າ " ນາງຄິດ.

ແມ່ນແທ້. ສາວງາມຕານຮ້ານລຳວົງນັ້ນຄືດັ່ງສິນຄ້າ. ໂຄສົກກໍເວົ້າຢ່າງບໍ່ຈຽມວ່າ:

" ສາວງາມນາມຄ່ອງເຈົ້າຂອງພວງມະໄລຮອບນີ້ໄດ້ແກ່ສອນນະພາ, ນັ້ນກຳລັງຂຶ້ນສູ່ເວທີ ຍິ້ມເປີນເວີນມາພຸ້ນ, ອູ້ຍຈັ່ງແມ່ນງາມນໍ້! ງາມໝົດທຸກສ່ວນ ງາມແຄ່ງ ງາມຂາ ງາມກະໂພກຫນ້າອົກກໍພໍດີ ຄືວກົ່ງຄໍກົມສົມ ເປັນເຈົ້າຂອງພວງມະໄລອີຫລີ. ບ່າງກໍງາມຊິລອງຖາມ ເພີນເບິງກ່ອນວ່າມີຊູ້ມີແຟນແລ້ວຫລືບໍ່,ອູ້ຍເພີນຍິ້ມອາຍໆ ແບບນີ້ຮັບຮອງວ່າຫົວໃຈ ຍັງວ່າງ, ໃຜຊ່າງເວົ້າຊ່າງລົມ ກໍເຊີນໂລດເດີ້ ບ່າວເທີ້ນ ບ່າວແກ່ທີ່ມີແມ່ເດັກນ້ຽແລ້ວ ຕະຫລອດຮອດບາພໍ່ອ້າຍທັງຫລາຍ. ນ້ອງສອນນະພາເພີນໃຈດີໃຈດີ ມີສະເໜ່ ຄົງບໍ່ລັງກຽດທີ່ຈະເປັນມິດທີ່ດີ ຫລືນ້ອງທີ່ຮັກແພງຂອງພວກທ່ານ.ເຊີນທ່ານບາງພົນ...ເຈົ້າຂອງຮອບພິເສດນີ້ ຂຶ້ນຮັບພວງມະໄລຈາກນາງສາວຂອງເຮົາໄດ້, ທ່ານບາງພົນເພີນມີສັດທາອັນແຮງ ກ້າ ເຫມົາຮອບພິເສດນີ້ໂດຍມອບເງິນໃຫ້ວັດ ຈຳນວນ ໕໐.໐໐໐ ກີບ. ຖ້ານ້ອງສອນນະພາຍິ້ມໃສ່ເພີນຫນຶ່ງນາທີ ຫລື ລົງໄປຍົກ

ຈອກເຫລົ້າປ້ອນເພິ່ນຮັບຮອງວ່າໄດ້ເຖິງແສນກີບ, ເອົາ! ທ່ານນາງພິນຂຶ້ນມາແລ້ວ ເຊີນຕົບມືເປັນກຽດ; ຮອບນີ້ມາໃນຈັງຫວະສະລຸປີ້!..."

ນອກຈາກຜູ້ງາມແລ້ວ ພວກນາງເຫລົ່ານັ້ນຍັງມີນາມຄ່ອງ ມ່ວນຫູອີກ ຊື່ແຕ່ລະຄົນຢູ່ເທິງຟ້າເທິງດາວ ທັງຍາວທັງແປກຕ່າງຈາກຊື່ຄົນລາວທີ່ແທ້ຈິງ. ສ່ວນແພງຄຳມີຊື່ທຳມະດາໆຈິ່ງໆ ທີ່ພິເສດກໍ່ຄືມີລັກສະນະຊາດບໍ່ແປກປະຫລາດຄື ຊື່ພວກນາງເຫລົ່ານັ້ນ.

ເດິກເຂົ້າໄປຊັກໄຊ້. ບຸນວັດບ້ານນີ້ກໍ່ແຮ່ງຟົດຟື້ນ ລຳວົງໄດ້ດຳເນີນໄປຮອດຮອບທີຊາວແລ້ວ. ມັນເປັນ ເວ ລາສາມໂມງກາງຄືນ.

ແພງຄຳຍັງບໍ່ທັນໄດ້ຟ້ອນຈັກຮອບ. ນາງບໍ່ຮູ້ສຶກມ່ວນຊື່ນບ່າຫມູ່ ນາງຮູ້ສຶກຫງ່ອມເຫງົາ, ນາງຢາກກັບບ້ານເມືອນອນ ແຕ່ກຳມະການຈັດບຸນບອກວ່າ ໃຫ້ອິດເອົາບຸນບ້ານເຮົາ. ນາງຈຶ່ງຢູ່ຕໍ່ໄປດ້ວຍຄວາມຝືນໃຈ ດ້ວຍຄວາມລຳຄານ, ນາງຄິດວ່າກຳມະການຈັດບຸນ ທີ່ບົງອອກ ໃຫ້ນາງເປັນສາວຟ້ອນລຳວົງ ແທນທີ່ຈະໃຫ້ນາງຂາຍດອກໄມ້ຢູ່ປາກປະຕູວັດເພາະເປັນວຽກທີ່ເຫມາະສົມກ່ວາ ແລະ ນາງ

ກໍຖະຫນັດດີໃນດ້ານນີ້. ການໃຫ້ນາງນັ່ງຮ້ານລຳວົງມັນຝືນຈິດໃຈ ແລະ ຂັດຕໍ່ສະພາບຂອງນາງຢ່າງເຫັນໄດ້ຄັກ, ເປັນການໃຊ້ຄົນບໍ່ຖືກທາງ.

ໂຄສົກໄດ້ປະກາດລຳວົງຮອບທີ່ຊາວເອັດ. ມອນອະນົງເປັນເຈົ້າຂອງພວງມະໄລອີກໃນຮອບນີ້. ຫລັງຈາກຜູ້ເໜົາຮອບມາຮັບເອົາພວງມະໄລ ແລະ ນຳໄປແຈກປາງຫນຸ່ແລ້ວ, ໂຄສົກກໍເຊີນຂຶ້ນຈັບຈອງນາງສາວ ແລະ ຟ້ອນລຳວົງໄດ້. ບັນດາແຂກທີ່ເປັນຜູ້ຊາຍຕ່າງທະຍອຍກັນຂຶ້ນຮ້ານລຳວົງ ແລະ ຍ່າງກົງໄປຫານາງສາວທີ່ໄດ້ໝາຍຕາໄວ້ກ່ອນແລ້ວ. ຜູ້ນັ້ນກົງໄປຫາລັດດາພອນ, ຜູ້ນີ້ຊີ້ໃສ່ຟ້າວິຈິດ ຜູ້ຫນ້າຍ່າງໄປຫາສອນນະພາ ຄົນຕໍ່ມາເບັດໃສ່ສາວທີ່ນັ່ງຖັດໄປ ແລະຕໍ່ໆໄປ ແຕ່ບໍ່ມີຜູ້ໃດຍ່າງກົງມາຫາແພງຄຳ, ນາງຮູ້ສຶກເຂີນໆ ແຕ່ກໍໄດ້ເຮັດສີຫນ້າໃຫ້ເປັນທ່ານະດາເພາະນາງລຶ້ງເຄີຍກັບອາການດັ່ງນີ້ມາແລ້ວ ແຕ່ລຳວົງຮອບທຳອິດ, ນາງບໍ່ຮູ້ສຶກຜິດຫວັງຫຍັງ ແລ້ວກໍນັ່ງຊີງດືດັ່ງຄົນຄວາມຄຶດຫນັກ ໃນນາທີຕໍ່ມາ ນາງກໍຕື່ນຍຸບ ແລະເກືອບບໍ່ເຊື່ອສາຍຕາໂຕເອງ ເມື່ອມີຊາຍຫນຸ່ມຄົນຫນຶ່ງມາປຸດປູ່ຕໍ່ຫນ້າ ແລ້ວຍື່ນພວງມະໄລໃຫ້ນາງ.

– " ຂໍຟ້ອນລໍາວົງນໍາແດ່ນ້ອງ " ຊາຍຄົນນັ້ນວ່າ.

ນາງຮັບເອົາ ແລະ ເບິງຫນ້າເຂົາດ້ວຍຄວາມແປກໃຈ. ຫມູ່ຜູ້ສາວຫລາຍເຫັນດັ່ງນັ້ນຕ່າງກໍແປກໃຈ. ແລ້ວກໍເວົ້າລົມກັນຫົວອຶກກຶກ ທັງບຸ້ຍສົບມາທາງແພງຄໍາ. ນາງໄດ້ຍິນຄໍາເວົ້າບາງຄໍາຂອງພວກນາງເຫລົ່ານັ້ນວ່າ:

– " ປ້ານຜົນດົກຢູ່...ແພງຄໍາຊິໄດ້ຟ້ອນລໍາວົງແລ້ວ".

– " ອີດານັ້ນລອດຫລອດມາແຕ່ໃສ! ເບິງແຕ່ງໂຕພຸ້ນນະຈັ້ງແມ່ນສົມກັນ ເຣີເຣີ!..."

ນາງໄດ້ຟ້ອນລໍາວົງເປັນເທື່ອທໍາອິດ ແລະ ເປັນຮອບດຽວໃນຄືນນັ້ນ ເມື່ອລໍາວົງໄດ້ສຸດລົງ ເຂົາກ່າວອໍາລານາງແລ້ວລົງຮ້ານໄປ, ນາງແນມນໍາຫລັງເຂົາຊື່ງລັບຫາຍໄປທ່າມກາງຄວາມສັບສົນຂອງຜູ້ຄົນ ໃນບໍລິເວນອ້ອມແອ້ມຮ້ານລໍາວົງ. ນາງຈື່ຫນ້າທ່າທາງເຂົາໄດ້, ເຂົາເປັນຄົນຄ່ອນຊ້າງຈ່ຽ ທ່າທາງສຸພາບ ຕັດຜົມສັ້ນ ບໍ່ຍາວປົກບ່າຄືຜົມຂອງຜູ້ມາຟ້ອນລໍາວົງທົ່ວໄປ, ບໍ່ຂຶງຂັງຂະຫນັງຂະຫມໍ່ຄື ບ່າວຈິໂກະທັງຫລາຍ. ເຂົາອາຍຸປະມານ ຊາວສີ-ຊາວຫ້າປີ. ການລໍາວົງສໍາລັບຄືນນັ້ນໄດ້ອັດລົງໃນຮອບທີຊາວຫົກ ເວລາສີໂມງເຄິງ.

ອາທິດໜຶ່ງຕໍ່ມາ. ຊາຽແປກໜ້າທີ່ໄດ້ຟ້ອນລຳວົງກັບແພງຄ່ຳນັ້ນ ກໍໄດ້ຜ່ານໄປຢ້ຽມຢາມຖາມຂ່າວຂະນະທີ່ນາງນັ່ງຂາຽເຂົ້າໜົມຄົກຢູ່ໜ້າບ້ານ ເຂົາເວົ້າລົມກັບນາງຢ່າງອ່ອນນ້ອມ ແລະ ຊື້ເຂົ້າໜົມຄົກຂອງນາງຫົກຄູ່. ເຂົາບໍ່ບອກຊື່, ບໍ່ບອກບ່ອນເຮັດການ ບ່ອນຢູ່ອາໄສໃຫ້ນາງຮູ້ເລີຽ ແລະ ນາງກໍບໍ່ກ້າຖາມເພາະຖືເຂົາເປັນພຽງແຂກຜູ້ໜຶ່ງທີ່ມາຟ້ອນລຳວົງນຳ ມາຊື້ເຂົ້າໜົມຄົກນ່ຳຄືດັ່ງຫລາຽໆຄົນທີ່ມາຊື້ນຳນາງເປັນປະຈຳ. ເຂົາເວົ້າສະແດງຄວາມສະຫງົບສະຫງຸບ ແລະ ເຫັນອົກເຫັນໃຈກັບທຸກຍາກ ຊາວໄຮ່ ຊາວນາ ແລະ ກຳມະກອນ. ເຂົາວ່າເຂົາເປັນກຳມະກອນຜູ້ໜຶ່ງ ແລະ ຮູ້ສຶກເປັນກຽດທີ່ໄດ້ເຮັດວຽກແບບກຳມະກອນເພາະເປັນອາຊີບຍຸຕິທຳ, ບໍລິສຸດ ບໍ່ໂກງບໍ່ຂູດຮີດຜູ້ໃດ.

ເຫດການທັງໝົດທີ່ກ່າວມານີ້ ຜ່ານໄປແລ້ວສອງປີປາຽ, ມາເຖິງປີນີ້ ຊາຽແປກໜ້າຄົນນັ້ນໄປຢາມນາງອີກ· ເຂົານຸ່ງເຄື່ອງທະຫານກອງທັບປົດປ່ຽ ປະ ຊາ ຊົນ ລາວ, ສ່ວນນາງເປັນພະນັກງານຂົນຂວາຽພື້ນຖານ.

–" ອ້າຽເປັນນັກປະຕິວັດ, ເສັຽດາຽບໍ່ຮູ້ຈັກແຕ່ກ່ອນນໍ້

ນ້ອງກະຊິໄດ້ໃຫ້ຄວາມ ຮ່ວມມືກັບອ້າຍ ຢ່າງເຖິງຖອງ".

ນາງວ່າ.

– " ອ້າຍເຂົ້າໃຈນ້ອງດີ ບໍ່ຢາກມາຄຶດແຫດຫລາຍຕອນນັ້ນ ເພາະພວກປະຕິການຍັງມີອຳນາດຫລາຍ ຢ້ານນ້ອງໄດ້ຮັບອັນຕະລາຍ".

– "ຮູ້ບໍ່ ຕອນມີການລຸກຮືຂຶ້ນໂຄ່ນລົ້ມອຳນາດການປົກຄອງເກົ່ານັ້ນ ນ້ອງະປັນຫົວໜ້າແມ່ຍິງໃນຄຸ້ມນີ້ທຳການໂຄ່ນລົ້ມ ແລະ ກ່າວປະນາມພວກກຳອຳນາດປົກຄອງເກົ່າຟົດຟື້ນຂະໜາດເລີຍ. ຕອນໄປໂຄ່ນລົ້ມປູ່ທາດຫລວງເຖິງມະໂຫລານນັ້ນ ກໍ່ແມ່ນນ້ອງເອງນຳພາແມ່ຍິງໃນຄຸ້ມນີ້ໄປແຕ່ບ່ວງສອງໂມງກາງຄືນ. ພາກັນຮ້ອງເພງປະຕິວັດສຽງດັງສະໜັ່ນໄປສຸດທາງ".

– " ເອີ... ພວກນາງສາວງາມໆ ທີ່ຟ້ອນລຳວົງເກັ່ງໆ ຈິ່ງບໍ່ໄດ້ເຊົາຈັກຮອບປີນັ້ນເດໄປໃສໝົດ ?"

– "ພວກນັ້ນຫວະ! ...ບາງຄົນກໍ່ໂດນໜີຂ້າມຟາກໄປ, ບາງຄົນກໍ່ເປັນມະລ່ານະລຽ ເສັຍຜູ້ເສັຍຄົນ ນ້ອງເລີຍສະເໜີໃຫ້ອຳນາດການປົກຄອງທ້ອງຖິ່ນສົ່ງ ໄປດັດສ້າງປູ່ດອນນາງພຸ້ນຫົກຄົນ. ປານນີ້ຄືຊິປ່ຽນແປງເປັນຄົນດີ ມີສິນທຳ

ປະຕິວັດແລ້ວດີ. ເຂົາເຈົ້າດັດບໍ່ຍາກດອກເພາະ ທີ່ຫລົບລີ້ວໄປມາແຕ່ກ່ອນນັ້ນ ບ້ອນສິ່ງແວດລ້ອມ ແລະ ສັງຄົມຂອງລະບອບເກົ່າພາເປັນໄປ ".

-" ດີແລ້ວເດທີ່ນ້ອງສະເຫນີສິ່ງໄປດັດສ້າງຄື ແນວນັ້ນ ພວກນາງກໍຈະກັບເປັນຄົນດີ, ເປັນປະໂຫຍດຕໍ່ສັງຄົມ, ເປັນການຂ້າພະບາດເພື່ອກູ້ເອົາຄົນໄວ້ ".

ນາງ ແລະ ເຂົາລົມກັນຢ່າງສະໜິດສະໜົມ. ໃນທັດສະນະຂອງເຂົາ ນາງເປັນຄົນງາມເປັນຄົນທີ່ເຂົາຍົກຍ້ອງນັບຖື, ເປັນຍິງໃນອຸດົມຄະຕິ ເມື່ອລົມກັນເປັນທີ່ຮັກແພງລື້ງແກ່ນ ກັບເຫິງສົມຄວນແລ້ວ ເຂົາກໍອໍາລາໄປທັງບອກວ່າຈະມາຢາມນາງອີກໃນໂອກາດໜ້າ. ນາງກ່າວຂອບໃຈແລ້ວຍິ້ມນ້ຽງ ແລະ ຮູ້ສຶກອາໄລທີ່ເຂົາຈາກໄປ. ນາງຄິດຢູ່ໃນໃຈບໍ່ເລີກບໍ່ແລ້ວ ຢາກໃຫ້ເຂົາກັບມາຢາມອີກໄວໆ.

# ເລື່ອງຂອງສົມເຕື່ອງ

ໂດຍ: ອຸທິນ ບຸນຍາວົງ.

ຫມູ່ຄູ່ຫລາຍຄົນເຄີຍ ເປີກສາຫາຣູ້ນຳກັນກ່ຽວກັບການຫາຄຳສັບທີ່ ເໝາະສົມສຳລັບບອກລັກສະນະທ່າທີຂອງສົມເຕື່ອງ. ບາງຄົນວ່າຂີ້ຄ້ານ, ຂີ້ແບະ, ບາງຄົນວ່າຂີ້ສູດແອວບາວ ອີ່ເງະອີ່ງ່ຽ ແລະ ອື່ນໆ, ສາລະພັດແຕ່ຜູ້ຈະວ່າ.

ຂ້ຽເອງວ່າ ຄຳສັບທີ່ເໝາະສົມ ທີ່ສຸດ ກໍ່ຄືຊື່ຂອງຫມໍນັ້ນເອງ, ໂດຍສະເພາະຕັດຄຳວ່າສົມອອກ ໃຫ້ຍັງແຕ່ເຕື່ອງແມ່ນວ່າເປັນຄຳສັບທີ່ມີຄວາມຫມາຍແຈ້ງ, ເຮັດໃຫ້ຜູ້ທີ່ໄດ້ຍິນແຕ່ຊື່ນຶກເຫັນພາບໃນຫນ້າ ແລະ ທ່າທີຂອງຫມໍອອກໂລດ.

ຄົງເປັນເພາະຄຳສຸດທ້າຍ ບົ່ງບອກທ່າທາງຂອງຫມໍໄປໃນທາງອະກຸສົນ ຫລື ແນວໃດບໍ່ຊາບ ເມື່ອມີຜູ້ເອີ້ນ

ເຕືອຍ... ເຕືອຍ... ຫນໍ່ຈຶ່ງບໍ່ພໍໃຈ ແລະ ທຳທ່າບໍ່ໄດ້ຍິນ ແຕ່ເມື່ອມີຜູ້ເອີ້ນ ສົນ... ສົນ... ແລ້ວ ຫນໍງວາກໄປຫາທັນທີໂລດ. ຄົງເປັນບ້ອນສົບຂອງຫນໍສີເຕືອຍໆ ແຕ່ເມື່ອຍັງນ້ຍພໍ່ແມ່ຈຶ່ງຮ້ອງວ່າເຕືອຍ, ຮ້ອງຫລີ້ນໄປຫລີ້ນມາເລີຍກາຍເປັນຊື່ແທ້ ຄື : ດັ່ງຊື່ຂອງຫລາຍໆ ຄົນ. ຕົວຢ່າງຜູ້ໃດມີອະໄວຍະວະສ່ວນໃດສ່ວນຫນຶ່ງຂອງຮ່າງກາຍສັ້ນໆ ກໍເອີ້ນວ່າທ້າວກົ, ນາງສັ້ນ, ທ້າວເຕັ້ຍ. ຜູ້ມີ ຮ່າງກາຍຕຸ້ຍກໍວ່າ ທ້າວຕຸ້ຍຫລື ນາງອ້ວນເປັນຕົ້ນ.

ພໍ່ແມ່ຂອງເຕືອຍ ອາດຈະມີສາຍຕາເບິ່ງ ການໄກສົນຄວນ ແລະ ການທີ່ເອີ້ນຊື່ລູກວ່າເຕືອຍລ້າໆ ອາດເປັນປົມດ້ຍໃຫ້ແກ່ລູກ, ດັ່ງນີ້ ຈຶ່ງໃສ່ຊື່ໃຫ້ຢ່າງເປັນທາງການໂດຍເອົາຄຳວ່າສົນມາໃສ່ນຳຫນ້າເປັນສົນເຕືອຍ. ຍາມເມື່ອເຕືອຍຂີ້ດື້ ຫລື ຂີ້ຄ້ານພໍ່ແມ່ມັກເອີ້ນວ່າບັກສົນເຕືອຍ. ນັບວ່າການທີ່ພໍ່ແມ່ໃສ່ຊື່ສົນເຕືອຍ ແມ່ນໃກ້ຄວາມຈິງທີ່ສຸດ.

ນັ້ນ..... ເຕືອຍກຳລັງຈັບພ້າ, ຟັນໄມ້ປ້ອກໆ ແປ້ກໆ ຢູ່ໃຕ້ຮົ່ມໄມ້, ທຸກການກະທຳ ທຸກການເຄື່ອນໄຫວຂອງເຕືອຍເປັນເປົ້າສາຍຕາຂອງຫມູ່ເພື່ອນ, ບໍ່ວ່າຫນໍ່ຈະຍ່າງໄປຫັ້ນໄປຫີ້ນັ່ງ ຫລື ຢືນ, ຟັນໄມ້ຫລືຫອບຫຍ້າ. ຫມູ່

ພວກເບິ່ງແລ້ວບາງຄົນກໍ່ຄັນແຂ້ວ ບາງຄົນກໍ່ຮູ້ສຶກເຈັບຫູ ເຈັບຕາ ບາງຄົນກໍ່ຫົວຂວັນຢູ່ໃນໃຈ ບາງຄົນອົດບໍ່ໄດ້ກໍ່ເວົ້າອອກມາວ່າ: ບັກເຕື່ອງ ... ຈັ່ງແມ່ນນຶ່ງເຮັດຄືເນາະ!.

ແມ່ນລະ ການເຄື່ອນໄຫວຂອງເຕື່ອງເປັນກົຂືນຫູຂືນຕາຂອງຫມູ່ເພື່ອນ ເພາະເຕື່ອງ ເຮັດຫຍັງກໍ່ພໍແກ້ຫນ້າ ຟັນໄມ້ສອງສາມບາດກໍ່ຢຸດ ຫລຽວຫນ້າຫລຽວຫລັງ ເມື່ອເຫັນຫມູ່ບໍ່ສົນໃຈຫລື ຫລຽວມາເບິ່ງກໍ່ນັ່ງເສີງ ເກົາແຄ່ງເກົາຂາຫລົ້ນ ແລະ ຫລິບເຂົ້າແຕ່ຣົ່ມ, ພໍຫົວຫນ້າຍ່າງມາໃກ້ເຕື່ອງກໍ່ເຮັດທ່າທາງເອົາຈິງເອົາຈັງ ຟັນໄມ້ບຸກປ່າປ່າງແຂ່ງຂັນປານວ່າເປັນຕົວເດັ່ນແຕ່ໂຕຜູ້ດຽວ ໃນບັນດາພາລະກອນພວກເຮົາທີ່ມາບຸກເບີກສ້າງນິຄົມແຫ່ງນີ້,ພໍຫົວຫນ້າກາງໄປບ່ອນອື່ນໄກງ ເຕື່ອງກໍ່ກັບກາງເປັນຄົນຂີ້ແບະຕາມເດີມ ເຮັດວຽກພໍແກ້ຫນ້າ.

ຫມູ່ຄູ່ມັກມາຊິນໃສ່ຫູຂຽງເລື້ອຍໆ ວ່າ: " ໂຕເປັນຄົນໃກ້ຊິດກັບຫນ່ກໍ່ ເວົ້າເຕືອນແດ່ແມ້ຢ່າໃຫ້ຫນໍ ເອົາປຽບຫມູ່ຫລາຍ".

– " ເຮົາຊິດັດສ້າງຫນໍດອກ ແຕ່ເລື່ອງນີ້ມັນຕ້ອງຄ່ຽງເປັນຄ່ຽງໄປ ຕ້ອງໃຊ້ຈິດຕະສາດຈັກກ່ອນ່ງ ເພື່ອບໍ່ໃຫ້ກະ

ເຫືອນໃຈຫນໍ່". ຂ້ຽຮັບຮອງກັບຫມູ່.

ແມ່ນແທ້ ສິນເຕື້ອງເຮັດວຽກແຕ່ພໍແກ້ຫນ້າ ຕົວຢ່າງ ເຫັນງ່າງໆ ກໍຄືເວລາຫມູ່ເພື່ອນປຸດພັກຜ່ອນສິບຫລືຊາວ ນາທີນັ້ນ ເຕື້ອງຊິບໍ່ປຸດພ້ອມ ຫາກແຕ່ບຸກບືນຟັນໄມ້ ຕາກ ແດດ ເຫື່ອໄຫລໄຄບັ້ງແລ້ວປຸດເຊົາທີຫລັງຫມູ່. ເວລາ ພັກຜ່ອນຕອນທ່ຽງເພື່ອກິນເຂົ້າ ຫນໍກໍເອົາໃຈໃສ່ຕໍ່ຫນ້າ ວຽກທ່າມກາງແດດຮ້ອນ ຈົນຫມູ່ເພື່ອນໄດ້ຮ້ອງບອກໃຫ້ ເຊົາ ຖ້າຜູ້ໃດບໍ່ສັງເກດແຕ່ທຳອິດ ຫລື ພິຈາລະນາຢ່າງ ຖ້ວນຖີ່ກໍເຂົ້າໃຈໂລດວ່າ ເຕື້ອງເອົາຈິງເອົາຈັງຕໍ່ຫນ້າວຽກ ເປັນຫນ້າບົກບ້ອງຊົມເຊີຍແທ້, ແຕ່ຜູ້ຮູ້ຈັກເຕື້ອງດີ ອາດຈະ ເວົ້າອອກມາວ່າ: ໂອຍ... ອີ້ນເອົາໂລດ! ບໍ່ກ້າຊົມເຊີຍດອກ ເພາະດຽນປາກ.

ຂ້ຽເຫັນວ່າຈະປ່ຽໃຫ້ສິນເຕື້ອງສືບຕໍ່ປະຕິບັດຕົນແບບນີ້ ຕໍ່ໄປບໍ່ໄດ້ເພາະປ້ານມີຜູ້ກະດັດກະດ້ ບໍ່ພໍໃຈແລ້ວທຳຮ້າຍ ສິນເຕື້ອງຈົນເຖິງໄດ້ນອນອາກລາກ ດັ່ງນີ້ຈຶ່ງຫາທາງດັດ ສ້າງຫນໍນັບແຕ່ດຽວນີ້ໄປ. ການເຮັດ ວຽກບຸກເບີກປ່າເພື່ອ ເຮັດນິຄົມຂອງພວກເຮົາເລີ່ມກັບແຕ່ແປດໂມງເຊົ້າ ພໍຮອດ ສິບໂມງກໍປຸດພັກຜ່ອນສິບຫ້ານາທີ. ບັນດາພາລະກອນ

ພວກເຮົາພາກັນນັ່ງຫລົບຢູ່ກ້ອງຮົ່ມໄມ້ ເວົ້າລົມກັນຫລິ້ນ ບາງຄົນເອນຫລັງໃສ່ຕົ້ນໄມ້ຊໍາຊາພໍມີແຮງ ເພື່ອຈະໄດ້ບຸກເບີກຖາງປ່າຕໍ່. ສ່ວນສົມເຕື້ອງຕັ້ງຫນ້າຟັນໄມ້ທ່ານກາງແສງແດດອັນຮ້ອນຮົນຢູ່ຄົນດຽວ ເປັນຕົວເດັ່ນໃນການເຮັດວຽກ ຍາມທີ່ຫມູ່ພັກຜ່ອນ.

–" ມັນແມ່ນຈັ່ງໃດກໍຫນໍ່ນີ້?".

–" ຈັ່ງແມ່ນມັກສະແດງນໍ້ ?".

–" ເຮັດວຽກແກ້ຫນ້າ !".

–" ສົງໃສຫນໍ່ສະຕິບໍ່ດີປານໃດ".

ປະໂຫຍກເຫລົ່ານີ້ ຫລັ່ງອອກມາຈາກປາກຂອງຫມູ່ເພື່ອນທີ່ກໍາລັງພັກຜ່ອນຢູ່ໃຕ້ຮົ່ມໄມ້, ມີຜູ້ຫົວຂວັນ ຜູ້ເຍາະເຍີ້ຍ ຜູ້ເຮັດສົບເບະເພາະຂຶ້ນຕາ. ການ ເວົ້າ ແມ່ນຈົ່ງຈຽນ ເພື່ອໃຫ້ຫນໍ່ໄດ້ຍິນແດ່ ບໍ່ໄດ້ຍິນແດ່.

–" ຫນໍ່ມີນົບ ຕາກແດດ, ເວລາສິບໂມງພໍແດດກ້າ ແລ້ວຫນໍ່ຕ້ອງຕາກແດດ ໂດຍບໍ່ຮູ້ສຶກຮ້ອນຮົນ. ເບິ່ງແມ້ ! ໃຜຊິເຮັດໄດ້ຄືຫນໍ່ ເຮົາຂໍບົກບ້ອງ "ຂ້ຽເວົ້າດັງໆ ເພື່ອໃຫ້ສົມເຕື້ອງໄດ້ຍິນ.

–" ເປັນຈັ່ງໃດມົນຕາກແດດ ກັນອີຫຍັງໄດ້?" ຫມູ່ຜູ້

ຫນຶ່ງຖາມ.

–" ກັນໄດ້ຫລາຍຢ່າງ ກັນຂີ້ເຂັບ ແມງງອດ ແມງ ເງົາ ແລະ ງູຕອດກັນໄດ້ຕາກແດດແລ້ວບໍ່ຕ້ອງຢ້ານເຊີນ ດອດໂລດສ່ຳແມງງອດແມງເງົາບໍ່ເຈັບຈັກຫນ້ອຍ, ຈຸດພິເສດ ຂອງມົນບົດກໍຄື ເຮັດໃຫ້ຜູ້ສາວນັກ ເປັນສະເຫນ່ຢ່າງຫນຶ່ງ ຊຶ່ງຖ້າຜູ້ໃດປະຕິບັດໄດ້ແມ່ນບອດເລີຍ, ເຫັນສາວໃດງາມໆ ແລ້ວຕີກົ້ວໃສ່ແມ່ນໄດ້ເລືອງ "ຂ້ອຍພັນລະນາສັບພະຄຸນມົນ ຕາກແດດຕໍ່ຫມູ່ເພື່ອນຟັງ.

–" ມັນເລືອງງົມງວາຍເອີຍ ບໍ່ເຊື່ອ!" ຫມູ່ອີກຜູ້ຫນຶ່ງ ວ່າ.

–" ບໍ່ເຊື່ອກໍ່ແລ້ວໄປ ຫາກຊິເຫັນເອງ ສຳຄັນແມ່ນຜູ້ ທີ່ປະຕິບັດຕົນໄດ້ຄົບຖ້ວນ, ບໍ່ແມ່ນວ່າພໍແດດກ້າແລ້ວແລ່ນ ຫາຊື້ນຣົ່ມໂລດ, ແນວນັ້ນແມ່ນບໍ່ໄດ້. ຕ້ອງປະຕິບັດເຖິງ ຖອງ, ເບິ່ງແມ້ຕົວຢ່າງຫມໍສົມເດືອຍຫມໍປະຕິບັດໄດ້ ມີ ແຕ່ຜູ້ສາວງາມໆມາຕິດຫມໍ ສາວໃດກໍ່ຂາວງາມໄດ້ລາບ ໄດ້ລາຍ ໄປສະຫມັກ ເຂົ້າ ຫນ່ວຍ ສົບ ລະ ປະກອບແມ່ນສະ ບາຍ..." ເວົ້າມາຮອດຕອນນີ້ ຂ້ອຍເຫລືອດຕາເບິ່ງສົມເດືອຍ ເຫັນຫມໍບຸກຫນ້າບຶນຕົວຖາງປ່າ ສຽງດັງເປັນຕາຂຶ້ນໃຈ,

ຫນໍບ່ຫລຽວໄປເບິງຜູ້ໃດ ເອົາໃຈໃສ່ແຕ່ຫນ້າວຽກ.

—"... ເມື່ອແສງແດດຖືກໂຕແລ້ວ ຫນໍບໍ່ໄດ້ເມື່ອຍຄື ພວກເຮົາໄດຫັ້ນ, ເຫັນບໍ! ແດດກ້າທີ່ໃດບິ່ງກໍາລັງແຮງຂຶ້ນ. ເຮົາກໍ່ເຄີຍຮຽນຄືກັນນົບຕາກແດດນີ້ ແຕ່ທົນບໍ່ໄດ້ແດດກ້ານາແລ້ວປາກແລ່ນເຂົ້າແຕ່ຮົ່ມ, ຜູ້ສາວເລີຍບໍ່ຕິດຄືດັ້ງຫນໍສົນະເຕື່ອຍ."

—" ແດດກ້າແລ້ວ ເຂົ້າຮົ່ມບໍ່ໄດ້ເລີຍຫວະ ?" ສຽງ ຫນຶ່ງຖາມຂຶ້ນ:

—" ກໍບໍ່ເຖິງຂັ້ນວ່າເຂົ້າຮົ່ມ ບໍ່ ໄດ້ ເລີຍ ດອກ. ມັນມີຈັງຫວະໂດຍເບິ່ງຕາມທ້ອງຟ້າ ເມື່ອ ຕາ ເວັນ ຮອດ ບ່ອນ ໃດບ່ອນຫນຶ່ງກໍເຂົ້າຮົ່ມໄດ້ແຕ່ບໍ່ໃຫ້ເຫິງໂພດ. ຖ້າປະຕິບັດໄດ້ຄືບໍ່ເຂົ້າຮົ່ມເລີຍກໍບິ່ງດີ, ເຮັດໄດ້ແບວນີ້ບໍ່ພຽງແຕ່ຜູ້ສາວມັກທີ່ນັ້ນ ສາວອາດໂດນມາະກາປູ່ເຮືອນບໍາ ກໍເປັນໄດ້, ນົບຕາກແດດນີ້ ຄະລໍາແຕ່ບານອອກຈາກບ້ານຈາກເຮືອນທີ່ນັ້ນ. ເວລາປູ່ບໍາເຮືອນບໍາຊາບບໍ່ຕາກກໍໄດ້. ສໍາຄັນທີ່ສຸດແມ່ນອອກໄປສວນໄປນາຫລືໄປໄຮ່ ເຖົ້າແກ່ບູຮານເພິນຖືກັນອີຫລີ".

—" ແຫ້ຫວະສະຫາງ!" ສຽງຫນຶ່ງສ້ ຂຶ້ນ.

-" ແມ່ນແຫ້ ປູ່ເຮົາຖາງໄຮ່ຖາງສວນນີ້ບໍ່ເຄີຍຖືກແມງ ງອດແມງເງົາ ແລະ ງູດອດຈັກເທື່ອ. ເພິ່ນມີເມັຽນ້ຽສາມຄົນ, ປະໄປແລ້ວສອງຄົນ, ເມັຽບໍ່ໄດ້ແຕ່ງທັງນັ້ນ. ເຮົາກໍຮຽນມົນຕາກແດດນຳປູ່ທັ້ງລະ ແຕ່ປະຕິບັດບໍ່ໄດ້ຈຶ່ງບໍ່ມີສາວໂຕນນຳຈັກຄົນ. ຊ່າງຫົວມັນເທາະ! ເປັນໂສດຕໍ່ໄປນີ້ລະ, ບໍ່ຢ້ານປູ່ໄດ້ລືນດອກ ຮູ້ບໍ່ປູ່ເຮົາໄດ້ເມັຽບໍ່ໄດ້ແຕ່ງເພາະຫຍັງ? ເພາະປູ່ໄປຖາງໄຮ່ຊ່ວງເຂົາ, ເຮີເຮີ!"

ແລ້ວວົງສົນທະນາຍາມພັກຜ່ອນ ກໍ ພົດ ພື້ນ ໄປ ດ້ວຍສຽງຫົວ. ສ່ວນສົມເຕືອຍມິດບໍ່ປາກມີແຕ່ສຽງຟັນໄມ້ດັງປ້ອກແປ້ກໆ ປູ່ບໍ່ເຊົາ, ຫມໍ່ບຸກຫນ້າບຶນຕົວອີຫລີ.

ເມື່ອພັກຜ່ອນໄດ້ສິບຫ້ານາທີແລ້ວ ພວກເຮົາກໍລົງມືຖາກຖາງປ່າຕໍ່ໄປ. ມັນເປັນວັນເສົາຂອງເດືອນກໍລະກົດ, ເປັນມື້ອອກແຮງງານ ຂອງກົມພວກເຮົາ, ການມາຖາງປ່າ ຟັນໄມ້ເພື່ອສ້າງເປັນນິຄົມຢູ່ບ່ອນນີ້ ແມ່ນເທື່ອທີສອງແລ້ວ ພວກເຮົາກະວ່າຈະປູກມັນດ້າງ ມັນຕົ້ນ ເຂົ້າສາລີ ແລະ ຕົ້ນໄມ້ກິນຫມາກຫລາຍຊະນິດ, ສະຖານທີ່ບໍ່ໄກຈາກນະຄອນວຽງຈັນຫລາຍເທົ່າໃດ. ເປັນ ປ່າ ໄມ້ ນ້ຽຂຽວງາມ ມີກໍໄລ່ ກໍໄຜ່ກະຊະ ກໍໄຜ່ຄຳ ແລະ ອື່ນໆ. ຫລາຍ

ເບິ່ງແຕ່ໄກເປັນພຸ່ມຂຽວອຸ່ມຫຸ່ມຫນ້າສະອອນ.

ກາບຖາງປ່າດຳເນີນໄປຮອດ ໑໑ ໂມງເຄິ່ງ ແລ້ວກໍປຸດເພື່ອກິນເຂົ້າສວາຍ, ສ່ວນສົມເຕື່ອງເຮັດວຽກຕໍ່ໄປ ອັນນີ້ເຮັດໃຫ້ຫມູ່ເພື່ອນສົນໃຈຕື່ນຂຶ້ນອີກ. ຫລາຍຄົນເອີ້ນຫນໍມາກິນເຂົ້າຮ່ວມກັນ ແຕ່ຖືກຫນໍປະຕິເສດ.

–" ເອົາໄປກ່ອນໂລດ ບໍ່ຕ້ອງຫ່ວງ". ສົມເຕື່ອງບອກຫມູ່.

–" ເຮົາວ້າແລ້ວວ່າມັນມີຈັງຫວະ ຂຶ້ນກັບທ້ອງຟ້າ ຕາເວັນປູ່ລະຫວ່າງອີງສາໃດຂອງທ້ອງຟ້າ ຫນໍມີເລກພິສູດປ່າງຖືກຕ້ອງ ປຸ່ງໃຫ້ຫນໍເຮັດຕໍ່ໄປຫັ້ນເຫາະ. ຂ້ອຍມີຄວາມເຫັນ.

–" ຄັນຊັ້ນວັນເສົາແລ້ວກໍເຫັນຫນໍກິນເຂົ້າສວາຍພ້ອມຫມູ່ພ້ອມກອງ". ຫມູ່ຜູ້ຫນຶ່ງເວົ້າຂຶ້ນ.

–" ວັນເສົາແລ້ວມັນບໍ່ມີແດດ ໃຜກໍຊິຈື່ໄດ້ວ່າຝົນຕົກ ບິບໆເກືອບຕະຫລອດເຊົ້າ" ຂ້ອຍໃຫ້ແຫດຜົນ.

ແລ້ວ ພວກເຮົາກໍພາກັນກິນເຂົ້າສວາຍ ປູ່ຮົ່ມໄມ້ປ່າງ ແຊບນົວ ແລະ ມ່ວນຊື່ນ, ລືມຄວາມອິດເມື່ອຍໄປໄດ້ລະບະຫນຶ່ງ.

–" ຕົວເດັ່ນໃນດ້ານອອກແຮງງານ ລັບລອງວ່າໄດ້ແກ່ສົມເຕື່ອງ. ຖ້າຫມໍປະຕິບັດເຄັ່ງຄັດມົບຕາກແດດຕໍ່ໄປ" ຂຽງເວົ້າຂຶ້ນໃນວົງກິນເຂົ້າ.

–" ເຮົາກໍ່ສົນໃຈເວັ້ງມົບອັນນີ້ ຫົວໃຈ ມັນ ແຫ້ງ ແລ້ງປາກໃຫ້ມີຜູ້ແສ້ຜູ້ສາວມາຕິດແດ່ຊັ້ນດອກ. ຖ້າ ເປັນ ທ່າກະ ຊິ ໄດ້ ເຮັດ ໃບສະເຫນີຂໍສ້າງ ຄອບຄົວໃຫ້ທັນເດືອນສິບສອງ. ບໍ່ເຖິງຂັ້ນໃຫ້ເຂົາໂຕນມາຫາດອກ." ຫມູ່ທີ່ນັ່ງຢູ່ຂ້າງຂວາຂຽງອອກຄວາມເຫັນ.

–" ລາງລະອຽດນີ້ ກໍ່ປາກໃຫ້ຖາມສົມເຕື່ອງພຸ້ນລະ, ແຕ່ເຮົາເຊື່ອວ່າໂຕຄືຊິທົນຕາກແດດຮ້ອນບໍ່ໄດ້ດອກ. ພັນຄົນມີແຕ່ຜູ້ດຽວທີ່ນັ້ນໄດທີ່ປະຕິບັດໄດ້ ຖ້າຄະລໍາບໍ່ໄດ້ກາງເປັນປອນກໍ່ມີໄດ".

–" ບໍ່ເອົາແລ້ວຊັ້ນ! ຈັກຫນ່ຽງເປັນປອນແລ້ວກະຊິຖືກປະຊາຊົນໄລ່ອອກຈາກບ້ານ".

–" ບໍ່ຮຽນມົບຕາກແດດ ກໍ່ມີຜູ້ສາວມັກຢູ່ດອກຕິ ຖ້າເຮົາຂະຫຍັນຂັນແຂງ ຫ້າວຫັນຕໍ່ວຽກການໂດຍສະເພາະໃນການອອກແຮງງານຄືດັ່ງຢູ່ນິຄົມນີ້".

ພໍຮອດ ໑໒ ໂມງ ສົມເຕື່ອງກໍ່ເຊົາພັກຜ່ອນ ໂດຍມີເຫື່ອ

ບັງຕານໃບຫນ້າ. ຫມູ່ເພື່ອນພາກັນຕົບມືຊົມເຊີຍ ໃນຜົນງານຂອງຫນໍ ສຽງດັງລົບໆ. ຂ້ຽຈັບເອົາຈອກນ້ຳແລ້ວບື້ນໃຫ້ຫນໍ່ທັງຊູມືຊ້າງຂອງຫນໍ່ຂຶ້ນ ແລະ ເວົ້າວ່າ:

– ຕົວຢ່າງຂອງຊົນຊັ້ນຜູ້ອອກແຮງງານ ຜູ້ເສັຽສະລະຢ່າງແທ້ຈິງ ເພື່ອ ຜົນ ປະໂຫຍດ ຂອງ ຊາດບ້ານເມືອງ, ພວກເຮົາຂໍຊົມເຊີຍສະຫາຍສົມເດືອຍ ແລະ ຂໍເອົາສະຫາຍເປັນຕົວຢ່າງ ພວກເຮົາຈະບໍ່ຂີ້ແບະ, ຈະບໍ່ຂີ້ຄ້ານຫລັງຍາວ, ຈະບໍ່ເຮັດອີເງາະອື່ງ, ພວກເຮົາຈະເຮັດວຽກຄືສົມເດືອຍໄດ້ບໍ່ ?".

"ໄດ້ !!!" ສຽງຫມູ່ເພື່ອນເວົ້າຂຶ້ນພ້ອມກັບຈົບຟົດສະຫນັ່ນ.

ໄດ້ແທ້, ຕົກມາຕອນບ່າຍ ພວກເຮົາທຸກຄົນລວມທັງສົມເດືອຍຫ້າວຫັນເຮັດວຽກຢ່າງຈິງຈັງ ບໍ່ມີໃຜເຮັດພໍ່ແກ້ຫນ້າ ບໍ່ມີໃຜເຮັດອີເງາະອື່ງ. ບໍ່ປ່ຽໃຫ້ເວລາເສັຽໄປລ້າໆ. ທຸກຄົນມີມານະຈິດຄິດເຫັນແຕ່ປະໂຫຍດສ່ວນໂຮມ ສົມເປັນພະນັກງານ ເປັນພາລະກອນຂອງລະບອບໃຫມ່.

ວັນເສົາຂອງສັປະດາຕໍ່ມາ ພວກເຮົາໄປອອກແຮງງານທີ່ນີ້ຄືນອີກ ເພື່ອສືບຕໍ່ວຽກ ບຸກເບີກປ່າໃຫ້ສຳເລັດ

ລຸລ່ວງໄປແລ້ວຈະໄດ້ລົງມືປູກຝັງໄວ ໆ ເພື່ອແກ້ໄຂຊີວິດ ຄວາມເປັນຢູ່ໃຫ້ກຸ້ມຕົນເອງ.

ຂ້ຽເຂົ້າໄປໃກ້ສິນເຕື່ອຍແລ້ວເວົ້າຄ່ຽໆ:

–" ເອົາໃຫ້ດີເດີ... ໂຕເປັນບຸກຄົນຕົວຢ່າງແລ້ວໄດ,ຢ່າໃຫ້ເສັຍແຕ້ມ".

ພວກເຮົາເລີ້ມເຮັດວຽກກັບເວລາ ໘ ໂມງ. ສິນເຕື່ອຍບຸກເບີກຟັນໄມ້ປ່າງເອົາຈິງເອົາຈັງແຕ່ແດດບໍ່ທັນກ້າແລະເຮັດດັ່ງນີ້ຕະຫລອດໄປ ສະເຫມີຕົ້ນສະເຫມີປາຍ ທ່າມກາງຄວາມພໍອົກພໍໃຈຂອງຫມູ່ເພື່ອນ. ບໍ່ມີສຽງຈົ່ມ,ບໍ່ມີຄວາມເວົ້າສຽດສີໃສ່ຫມູ່ຄູ່ຜູ້ຫນຶ່ງສົນໃຈເປັນພິເສດທີ່ເຫັນສິນເຕື່ອຍປ່ຽນໄປເປັນຄົນລະຄົນຈຶ່ງມາສ້ຖາມກັບຂ້ຽວ່າ:

–" ມົນຕາກແດດນີ້ກໍມີແທ້ຫວະ?".

– ຢ່າປາກ... ເຮົາອຸບປະໂລກຂຶ້ນເອົາ, ຫນໍ່ເປັນຄົນມັກບ້ອງຢູ່ແລ້ວ ໃຊ້ຈິດຕະສາດຫນັ້ງຫນຶ່ງບໍ່ຫາງກັບຂຶ້ນ ຫນໍ່ເລີຍປ່ຽນໄປເກີນຄາດຫມາຍ. ເຮົາຄິດຢູ່ບ່ອນວ່າຈະເຮັດວິທີໃດ ຈຶ່ງຊິໃຫ້ຫນໍ່ພັກຜ່ອນແດ່ ບໍ່ໃຫ້ເປັນທຳນອງກນັ້ນເທື່ອດຽວຫລັງຫັກ".

–" ເຮົາເຊື່ອໂຕແລ້ວຊັ້ນ... ຄືຊິບໍ່ມີຫຍັງຍາກ ເຮົາວ່າ

ການ ບອກ ໃຫ້ ຄົນ ເຮັດວຽກມັນຍາກກ່ວາບອກໃຫ້ຄົນເຊົາເຮັດວຽກຫລາຍພັນເທື່ອ". ເວົ້າແລ້ວຫມໍກໍຫົວອີກໆ ແລະກົ້ມຫນ້າຟັນໄມ້ຕໍ່ໄປ.

ແມ່ນລະ... ຄືຊິບໍ່ມີຫຍັງຍາກ ໃນການບອກຄົນຜູ້ໃດຜູ້ຫນຶ່ງເຊົາເຮັດວຽກ.

# ສຽງຈາກທົ່ງໄຫຫີນ

ໂດຍ: ອຸທົນ ບຸນຍາວົງ

ຊອງຈົດໝາຍສະບັບນີ້ຖືກສົ່ງມາຫາຂ້ຍຈາກ ທົ່ງ ໄຫ ຫີນ. ເມື່ອຈີກເບິ່ງ, ກໍພົບເນື້ອຄວາມຂຽນຢ່າງບັນຈົງເຕັມ ຫລາຍໜ້າເຈ້ຍ ແຕ່ບໍ່ແມ່ນຂຽນຫາຂ້ຍ ໃນຊອງຍັງມີເຈ້ຍ ນ້ຍອີກແຜ່ນໜຶ່ງຊຶ່ງມີຂໍ້ ຄວາມວ່າ:

– ຂໍໃຫ້ອ້າຍເອົາຈົດໝາຍນີ້ ລົງໃນໜັງສືພິມໃຫ້ແດ່ ເພື່ອວ່າຜູ້ຮັບຊຶ່ງເປັນຄົນຮັກແພງກັບນ້ອງຈະໄດ້ພົບ ແລະ ອ່ານໃນວັນໃດວັນໜຶ່ງ. ນ້ອງບໍ່ຮູ້ບ່ອນຢູ່ຂອງເຂົາ ເພາະ ຫລັງຈາກທີ່ເຂົາຕ່າວຄືນເມືອສະຫະລັດອາເມລິກາບໍ່ທັນ ດົນ ນ້ອງກໍໄດ້ຕ່າວຄືນສູ່ທົ່ງໄຫຫີນ. ຈອນນີ້ເປັນອາສາສະ ໝັກອາເມລິກັນຂອງອົງການ ໄອ.ວີ.ແອສ. ຫລັງຈາກທີ່ ມາຕິດແທດກັບປະຊາຊົນລາວ ຊຶ່ງໃນນີ້ ມີນ້ອງຜູ້ໜຶ່ງ ຈອນນີ້ກໍກາຍເປັນນັກຕ້ານສົງຄາມ ຂອງອາເມລິກາໃນອິນ

ດູຈີນ, ເຂົາຂຽນບົດຄົ້ນຄ້ວາການທີ່ອາເມລິກາເຂົ້າມາລາວ ແລ້ວລະຫລຸບວ່າອາເມລິກາຕ້ອງອອກຈາກລາວເດັດຂາດ ແລະ ສົ່ງບົດຄົ້ນຄ້ວາດັ່ງກ່າວໃຫ້ລັດຖະບານ ແລະ ສະພາຄອງເກຣສຂອງອາເມລິກາໄປສຶກສາ ເພື່ອກຳນົດນະໂຍບາຍຕ່າງປະເທດຂອງອາເມລິກາຕໍ່ໄປ.

ນ້ອງເຊື່ອວ່າຈົດໝາຍນີ້ຈະຖືກຕີພິມ ແລະ ສົ່ງໄປຍັງສະຫະລັດອາເມລິກາເພາະຫນັງສືພິມຂອງອ້າງ ໄດ້ຮັບການແປເປັນພາສາຝະລັ່ງ ແລະ ອັງກິດທຸກສະບັບ. ຈາກໄນແດງ.

ຂໍ້ຄວາມໃນເຈັ້ຍນັ້ນ ເຮັດໃຫ້ຂ້ຽຄິດພໍ້ຊາວຫນຸ່ມຄົນຫນຶ່ງຊຶ່ງເປັນຊາວອົບພະຍົບ. ເຮົາພົບພໍ້ກັນໃນຄາວທີ່ມີການຈັດສົ່ງຊາວອົບພະຍົບຕ່າວຄືນເມືອບ້ານເດີມ ພາຍຫລັງສົງຄາມ. ຂ້ຽເປັນນັກຂ່າວຄົນຫນຶ່ງທີ່ໄດ້ເດີນທາງໄປຕິດຕາມຂ່າວການສົ່ງຊາວອົບພະຍົບຊຸດທຳອິດໂດຍທາງເຮືອບິນທີ່ໂພນສະຫວັນ ແລະ ໃນໂອກາດນີ້ໄດ້ສຳພາດໄນແດງກ່ຽວກັບຄວາມຮູ້ສຶກ ນຶກຄິດທີ່ໄດ້ຕ່າວຄືນບ້ານເກີດເມືອງນອນ.

ໄນແດງກ່າວວ່າ: ໃນປີ ໑໙໗໐ ເຂົາພ້ອມດ້ວຍພໍ່ແມ່

ແລະ ນ້ອງໆ ຖືກບັງຄັບໃຫ້ອອກຈາກທົ່ງໄຫຫີນ ຖືກກວາດຕ້ອນຂຶ້ນຍົນພ້ອມກັບຊາວອົບພະຍົບອື່ນໆແລ້ວນຳໄປຢູ່ສູນອົບພະຍົບທີ່ບ້ານອີໄລ ໄກຈາກວຽງຈັນປະມານ ໒໕ ຫລັກ. ການໄດ້ກັບຕ່າວຄືນມາບ້ານເກີດເທື່ອນີ້ແສນດີໃຈທີ່ສຸດ ບໍ່ມີຫຍັງປຽບໄດ້, ມັນຕື້ນຕັນໃຈຈົນນ້ຳຕາໄຫລ ແລະຄິດວ່າຊີວິດໄດ້ເລີ້ມຕົ້ນໃຫມ່ແລ້ວ ເລີ້ມຕົ້ນຢ່າງມີອິດສະລະ ມີກຽດ ມີຄວາມພາກພູມໃຈ.

ເນື້ອໃນຈົດຫມາຍມີດັ່ງນີ້:

ຮັກແພງ ຈອບນີ້.

ເຮົາຂຽນຈົດຫມາຍນີ້ຈາກທົ່ງໄຫຫີນ ອະດີດສະມໍລະພູມເລືອດ ຂໍສົ່ງຂ່າວມາຫາເພື່ອນດ້ວຍຄວາມຄິດຮອດຄິດເຖິງ. ເຮົາຕ່າວຄືນບ້ານເດີມພ້ອມກັບຊາວອົບພະຍົບຊຸດທຳອິດ ຄື ລຸນຫລັງທີ່ໂຕກັບເມືອສະຫະລັດອາເມລິກາບໍ່ທັນດົນ.

ມັນເປັນເຫດການຕື່ນເຕັ້ນ ປົນເສົ້າສະຫລົດໃຈ ທີ່ໄດ້ຕ່າວຄືນບ້ານເກີດເມືອງນອນ ຫລັງຈາກໄດ້ພັດພາກຈາກໄປເປັນເວລາສີ່ປີເຮົາຫລັ່ງນ້ຳຕາອອກມາເມື່ອພາບທົ່ງໄຫຫີນປະກົດຕົວຢູ່ຕໍ່ຫນ້າ ມັນອ້າງວ້າງເປົ່າປ່ຽວ ຫລຽວໄປ

ທາງໃດມີແຕ່ຊາກສະລັກຫັກພັງມີແຕ່ຂຸມລະເບີດ ຕົ້ນໄມ້ ປາຍກຸດສີດຳ ຢືນຢູ່ຢ່າງໂດດດ່ຽວຕາມຈ້າງພູ ເປັນສັນຍາລັກຂອງຄວາມເປົ່າປ່ຽວ ງຽບສະຫງັດ ນອກຈາກນົກແອ່ນບິນເຈີດໄປມາຢູ່ກາງອາກາດທ່າມກາງສາຍລົມແລ້ວບໍ່ປະກົດສິ່ງມີຊີວິດໃດໆ. ສຸດສາຍຕາເປັນທົ່ງຫຍ້າສີຂຽວໂອບເອບເປັນຄື້ນຄືທະເລເມື່ອຖືກລົມພັດຕ້ອງ. ຄື້ນສີຂຽວນີ້ຈະງົດງາມທີ່ສຸດຖ້າບໍ່ມີຈຸດດ່າງດາວເຖ່ຽລະດາດໄປທົ່ວ. ຈຸດດ່າງດາວນີ້ກໍ່ຄື ຂຸມລະເບີດຈາກຍົນອາເມລິກາ ໂດຍສະເພາະຍົນເບ - ໕໒ ທີ່ເອົາທົ່ງໄຫຫີນເປັນເປົ້າໝາຍ ແລ້ວຖອກເທລະເບີດລົງຈົນນັບບໍ່ຖ້ວນໃນຫ້ອງປີ ໑໙໗໐ ເປັນຕົ້ນມາ. ບໍ່ແມ່ນແຕ່ມະນຸດເທົ່ານັ້ນທີ່ຢູ່ບໍ່ໄດ້, ສັດສາວາສິ່ງກໍມອດມ້ວຍມໍລະນາ ເຫລືອແຕ່ຟ້າກັບດິນ, ປະຊາຊົນທີ່ອາໄສຢູ່ໃນແຖບນີ້ຖືກກວາດຕ້ອນຈາກຈຸດໜຶ່ງໄປຍັງຈຸດໜຶ່ງແລ້ວກໍ່ໄປເລື້ອຍໆ. ຈົນໃນທີ່ສຸດກໍ່ຖືກກວາດຕ້ອນຂຶ້ນຍົນປົນເປກັບບໍ່ຈັກອັນໃດເປັນອັນໃດ, ຊີວິດຄືສິ່ງບໍ່ມີ ລາ ຄາ ແລ້ວແຕ່ອາເມລິກາຈະລາກແກ່ໄປທາງໃດ, ບໍ່ມີໂອກາດໄດ້ກຳນົດກົດເກນຊາຕາຕົນເອງ.

ຜູ້ທີ່ບໍ່ໄດ້ຂຶ້ນຍົນກໍເລືອນລຽດຕໍ່ໄປ ແລະ ຖືກລະເບີດລົ້ມ

ຕາຽຫາຽສາບສູນໄປນັ້ນກໍນັບບໍ່ຖ້ວນ, ຊີວິດມີແຕ່ຄວາມລະທົມຂົມຂື່ນ ຄວາມທຸກຍາກກັນດານ ປານຕົກນາຮົກທັງເປັນ

ລະຍະສົງຄາມຕ້ານຈັກກະພັດອາເມລິກາ ທົ່ງໄຫຫີນເປັນສະນໍລະພູມເລືອດ ຫລາຽຄັ້ງຫລາຽຄາວ ແຕ່ລະບັ້ນຮົບໄດ້ສ້າງສຸດລົງດ້ວຽໄຊຊະນະຂອງກອງທັບປົດປ່ຽປະຊາຊົນລາວ. ມີບາງຄັ້ງບາງຄາວເທົ່ານັ້ນມັນຖືກຄອບຄຸມໂດຽທະຫານຫຸ່ນວຽງຈັນ ທະຫານກຳລັງພິເສດວັງປາວ ແລະທະຫານຮັບຈ້າງປະຕິການໄທ. ແຕ່ສຸດທ້າຽມັນກໍຖືກປົດປ່ຽໄປຊົ່ວກາລະນານ.

ເຮົາຢືນຊື່ງ ແນມເບິ່ງທົ່ງໄຫຫີນດ້ວຽຄວາມສະທ້ອນອ່ອນເພັງ, ມັນແຄ້ນໃນໃຈ, ແຫນ້ນໃນອົກ. ພາບທຸກສິ່ງທຸກຢ່າງມັນເສົ້າລະຫລົດວົບປະໂຍກ.ມີແຕ່ຜູ້ໃຈດຳອຳມະຫິດເທົ່ານັ້ນທີ່ຈະທົນເບິ່ງໄດ້ ໂດຽ ບໍ່ ມີ ອາ ລົມ ອ່ອນ ໄຫວ, ພາບຂອງສະໜາມຮົບ ຂອງສົງຄາມອັນປ່າເຖື່ອນ ໂຫດຮ້າຽໂດຽອາເມລິກາເປັນຜູ້ກໍ່ຂື້ນ. ເຮົາເຫັນເປັນສົງຄາມທີ່ຫ້າຽໂຫດທາລຸນທີ່ສຸດໃນປະຫວັດສາດຂອງມະນຸດຊາດ!

ຈອນນີ້ ເພື່ອນຮັກ... ສົງຄາມໄດ້ຍຸຕິລົງແລ້ວກໍຈິງຢູ່

ແຕ່ຄວາມໂຫດຮ້າຍຂອງມັນຍັງແຜ່ກະຈາຍຢູ່ທົ່ວ. ລູກລະເບີດທີ່ບໍ່ທັນແຕກຍັງຝັງຢູ່ຕາມທົ່ງໄຫຫີນ ແລະ ທົ່ວພື້ນແຜ່ນດິນລາວ. ມີຫລາຍຊະນິດດ້ວຍກັນ ແລະ ທີ່ຫລາຍກ່ວາຫມູ່ແມ່ນບົມບີ. ພຽງສອງມື້ທີ່ພວກອົບພະຍົບມາຮອດທົ່ງໄຫຫີນ ບົມບີກໍໄດ້ປິດຊີວິດເຂົາເຈົ້າໄປເຖິງສາມຄົນ. ຈະເຄື່ອນໄຫວໄປທາງໃດຕ້ອງລະວັງ; ຄວາມຕາຍຄອຍ ຖ້າເຮົາຢູ່ທຸກແຫ່ງ, ຖືກຜູ້ໃດແລ້ວບໍ່ຕາຍກໍເສັຍອົງຄະ, ສົງຄາມລະເບີດເວລາໄດ້ແຜ່ຄວາມສະທ້ານ ຢ້ານກົວໄປທົ່ວບ່ອນຫຍ້າ ທົ່ວພື້ນພະສຸທາ ມັນແຕກບຶ້ມຂຶ້ນ! ແລ້ວກໍມີຄວາມຕາຍ ຄວາມເຈັບປວດຕິດຕາມມາ. ມັນເປັນລະເບີດເວລາທີ່ອາເມລິກາເປັນຜູ້ກໍາສາງສະບວນ ເປັນຜູ້ກໍ່ຂຶ້ນ. ອາເມລິກາຕ້ອງຮັບຜິດຊອບ.

ທ່າມກາງອັນຕະລາຍຮອບດ້ານ ເຮົາ ແລະ ພໍ່ແມ່ອ້າຍນ້ອງປັກຫລັກແຫລ່ງຢູ່ທົ່ງໄຫຫີນ ຈະໄປທາງໃດກໍໄດ້ລະມັດລະວັງພວກເຮົາພາກັນປຸກເຮືອນຕູບຢູ່ອາໄສພໍຊານຊາ ບຸກເບີກທີ່ດິນເຮັດຮົ້ວເຮັດສວນຫາກຸ້ມດິນເອງ ບາງເທື່ອກໍໄດ້ຮັບຂອງຊ່ວຍເຫລືອຈາກມິດປະເທດ.

ວ່າງຈາກວຽກງານ ເຮົາກໍໄປເລາະເບິ່ງໄຫຫີນ ທີ່ຢູ່

ເປັນກະແຈກກະຈາຍໃນບໍລິເວນທົ່ງ ອັນກ້ວາງສຸດສາຍຕາ ໄຫຫີນເປັນພະລິດຜົນຫັດຖະກຳຂອງມະນຸດ ໃນ ສະ ໄໝ ຫີນ,ເປັນສິ່ງມະຫັດສະຈັນເລິກລັບຂອງໂລກຊະນິດຫນຶ່ງ. ດຽວນີ້ຍັງຈຳນວນບໍ່ຫລາຍ ເພາະໄດ້ຖືກທຳລາຍມາຫລາຍ ຕໍ່ຫລາຍແລ້ວ ໂດຍສະເພາະຈາກການຖິ້ມລະເບີດຂອງຍົນ ເບ-໕໒. ຂຸມລະເບີດແຕ່ລະຂຸມນັ້ນປະມານທາງກ້ວາງໄດ້ ໑໐-໑໒ ແມັດ, ເລິກປະມານ ໕-໖ ແມັດ, ຫລາຍຂຸມມີນ້ຳ ເຕັມ. ທຳອິດທີ່ໄປຮອດນັ້ນ ເຮົາວ່າຂຸມຄົງບໍ່ເລິກ ຈຶ່ງໂດດ ລົງເພື່ອອາບນ້ຳ ແຕ່ແລ້ວເຮົາກໍ່ເກືອບເອົາຊີວິດໄປຖິ້ມໃນ ຂຸມລະເບີດນີ້. ເຮົາກຳລັງຊິຈົມນ້ຳ, ບັງເອີນມີຜູ້ມາພົບເຂົາ ຈຶ່ງຊ່ວຍຊີວິດໄວ້ເຮົາພົ້ນຈາກຄວາມຕາຍ ແຕ່ຕໍ່ມາບໍ່ດົນອາ ບາຄິດຂອງເຮົາກໍດັບວູບລົງອີກ, ເຮົາຕ້ອງພົບກັບຄວາມ ເສົ້າເສັຽໃຈທີ່ສຸດໃນຊີວິດ ແລະ ຄິດວ່າຕົນເອງໄດ້ຕາຍໄປ ແລ້ວເຖິງຫນຶ່ງ ມັນທໍລະມານໃຈ ທໍລະມານກາຍຢ່າງ ເຫລືອທີ່ສຸດ.

ຈອນນີ້...ເຮົາບອກແລ້ວວ່າ ເຮົາກັບສະມາຊິກຄອບຄົວ ຕ້ອງບຸກເບີກດິນດອນຕ່ອນຫຍ້າ ເພື່ອທຳການປູກຝັງຫາ ກຸ້ມຕົນເອງ. ມື້ຫນຶ່ງເຮົາແບກຈົກໄປຂຸດຫນານປູກມັນ, ຂຸດ

ໄປພັນໄປໄດ້ປະມານຊົ່ວໂມງກ່ວາ ແລ້ວກໍເກີດລະເບີດຂຶ້ນ, ມັນເປັນບົມບີທີ່ເຫລືອຢູ່ຕາມດິນ. ເຮົາຫມົດສະຕິໄປ ແລະ ມາຮູ້ເນື້ອຄີງກໍພົບວ່າຕົນເອງຢູ່ໂຮງພະຍາບານ, ແຂນຂາ ຖືກພັນດ້ວຍຜ້າພັນບາດຈົນເຮົາເຫນັງຕົງບໍ່ໄດ້. ເຮົາມາ ຮູ້ ພາຍຫລັງວ່າ ຖືກສົ່ງມາຍັງໂຮງພະຍາບານ ທີ່ໂພນສະ ຫວັນ ແລະ ຮູ້ຕໍ່ມາວ່າຂາສອງເບື້ອງຖືກຕັດຂາດ. ສ່ວນ ແຂນຊ້າຍກໍໄດ້ຮັບບາດເຈັບແຕ່ບໍ່ສາຫັດ ນ້ອງເຮົາຜູ້ຫນຶ່ງ ກໍໄດ້ຮັບບາດເຈັບທີ່ຂາຊ້າຍແຕ່ບໍ່ສາຫັດຈຶ່ງໄດ້ກັບໄປ ບ້ານ ແລ້ວ. ເມື່ອຮູ້ວ່າຕົນເອງເສັຍອົງຄະ ອານາຄົດມືດມົນດັ່ງນີ້ ເຮົາຮ້ອງໄຫ້ສະອື້ນ ນ້ຳຕາໄຫລບໍ່ມີຍາມເຊົາຕະຫລອດເວ ລາທີ່ຢູ່ໂຮງພະຍາບານ.

ຈອນນີ້...ເຮົາເປັນຄົນເສັຍອົງຄະ ເປັນຄົນທີ່ຕາຍແລ້ວກໍ່ ວ່າໄດ້ ຄື ຕາຍໄປຈາກອານາຄົດອັນແຈ່ມໃສ ເປັນສິບທີ່ ເຄື່ອນໄຫວໄປມາໄດ້. ຄິດເຫັນຕົນເອງຍາມໃດແລ້ວ ເຮົາກໍ ສະອື້ນອີກສະທ້ານຫວັ່ນໄຫວ. ເຮົາເຊື່ອວ່າໂດຄີງຈະກ້າວ ໄປໄກໃນອານາຄົດ ເປັນນັກຕໍ່ສູ້ເພື່ອສັນຕິພາບ ເປັນນັກຕໍ່ ຕ້ານສົງຄາມຜູ້ມີອິດທິພົນ, ເປັນວິລະຊົນຂອງຂະບວນ ການ ສັນຕິພາບ. ຂໍໃຫ້ໂດສືບຕໍ່ປະຕິບັດພາລະກິດເພື່ອ

ປະຊາຊົນຜູ້ຖືກກົດຂີ່, ປະຊາຊົນຜູ້ຖືກຍາດແຍ່ງເອົາເອກະລາດໄປຈາກມື ແລະ ປະຊາຊົນຜູ້ປະສົບໄພສົງຄາມ ຜູ້ໄດ້ຮັບບາດແຜຈາກ ອາວຸດຍຸດໂທປະກອນຂອງຈັກກະພັດອາເມລິກາ.

ເຮົາຂຽນຈົດໝາຍມານີ້ ກໍເພື່ອໃຫ້ເປັນສຽງໜຶ່ງຈາກທົ່ງໄຫຫີນ, ສຽງໜຶ່ງໃນຈຳນວນຫລາຍສຽງຂອງຜູ້ປະສົບໄພພິບັດ ອັນເນື່ອງມາຈາກສົງຄາມ ແລະ ສິ່ງເສດເຫລືອຂອງສົງຄາມທີ່ເປັນອັນຕະລາຍຄຸກຄາມຊີວິດເພື່ອນມະນຸດຢູ່ໃນຂະນະນີ້.

ຈະເປັນຈຸດອ່ອນອັນໜຶ່ງຂອງມະນຸດຊາດ ຖ້າຂາດການເອົາໃຈໃສ່ຜູ້ປະສົບໄພກ່ອນ ແລະ ຫລັງການສິ້ນສຸດຂອງສົງຄາມ ບໍ່ວ່າສົງຄາມຈະຢູ່ສ່ວນໃດໆຂອງໂລກ. ໃດຈະປ່ອຍໃຫ້ຈຸດອ່ອນນີ້ສືບຕໍ່ໄປບໍ ຈອບນີ້ຈະບໍ່ລົບລ້າງຄວາມລະອາຍນີ້ອອກຈາກປະຫວັດສາດຂອງມະນຸດບໍ? ຂໍໃຫ້ໃດເຂັ້ມແຂງ ແລະ ກ້າວໜ້າຕໍ່ໄປ, ຕໍ່ໄປເລື້ອຍໆ.

ຮັກແພງຈາກເຮົາ

ໃນແດງ.

—ສຸດ—

ຂຸ້ຫົນ ບຸບະບາວົງ

ພິມທີ່ໂຮງພິມແຫ່ງຊາດ
ພິມຈໍານວນ 10.000 ຫົວ ຂະໜາດ 13×18,4
ພິມແລ້ວວັນທີ 30. 8. 78